# <u>ກຸ່ມຜູ້ຈັດທຳ ການສຶກສາພຣະຄັມພີພາສາລາວ</u>

Copyright © 2002 by BAPTISTWAY PRESS®.
ສງວນລິກຂະສິດ

ອະນຸດຍາດໃຫ້ທາງຄຣິສຕະຈັກເຮັດກອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ.  ຫ້າມຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນໆ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ.  ຖ້າຢາກຊາບລາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas, 333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ ໄດ້ຄັດມາຈາກປຶ້ມພຣະຄັມພີຕາມທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິຂະສິດຂອງປຶ້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ:  ເດືອນ ມີນາ, ໒໐໐໐

BAPTISTWAY Management Team

Executive Director, Baptist General Convention of Texas: Charles Wade
Coordinator, Church Health and Growth Section: H. Lynn Eckeberger
Director, Bible Study/Discipleship Center: Dennis Parrott
Administrator, Curriculum Development Office:  Bernard M. Spooner
Publishing consultant: Ross West, Positive Difference Communications

Language Materials Team

Bible Study Writer for Lesson 1-3
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Lesson 1-3
Phaisane Somsith, Samakeetam Baptist Fellowship, Dallas, Texas

Bible Study Writer for Lesson 4-6
Bounheng Phongpraphan, First Lao Baptist Church, Amarillo, Texas
Editor for Lesson 4-6
Phaisane Somsith, Samakeetam Baptist Fellowship, Dallas, Texas

Bible Study Writer for Lessong 7-10
Sidney Kahn, Saginaw Community Church, Fort Worth, Texas
Editor for Lesson 7-10
Phaisane Somsith, Samakeetam Baptist Fellowship, Dallas, Texas

Bible Study Writer for Lesson 11-13
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lesson 11-13
Phaisane Somsith, Samakeetam Baptist Fellowship, Dallas, Texas

Facilitator for the LAOTIAN TEAM
Joe Haag, Associate Director, Christian Life Commission, Baptist General Convention of Texas

Patty Lane, Director, Office of Intercultural Initiatives, Baptist General Convention of Texas
Nelda P. Williams, Facilitators Coordinator and Manager, Curriculum Development Office

# ບົດຮຽນທີ 1
# ເປັນຫຍັງຄົນທັງຫລາຍຈິ່ງບໍ່ຖືກຕ້ອງປອງດອງກັນ

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> 1 ໂກຣິນໂທ 1:1-17

<u>ຂໍ້ພຣະຄັມພີສຳລັບເບື້ອງຫລັງ:</u> 1 ໂກຣິນໂທ 1:1-17

<u>ຈຸດສຳຄັນຂອງບົດຮຽນນີ້:</u> ການແຕກແຍກຂອງຄຣິສຕຽນ ແມ່ນການບໍ່ເຫັນພ້ອມໃນການຮັບພຣະພອນໃນຄຣິສຕະຈັກ ແລະ ກໍບໍ່ແມ່ນນ້ຳພຣະທັຍຂອງພຣະເຈົ້າ ທີ່ຢາກໃຫ້ຊີວິດຄຣິສຕຽນເປັນດັ່ງນັ້ນ.

<u>ຄຳຖາມເພື່ອສຳຣວດ:</u> ເຮົາຈະຮັບພຣະຄຸນຈາກພຣະເຈົ້າຢ່າງໃດ ໃນເມື່ອເຮົາຫາກມີການແບ່ງແຍກແລະເປັນສັດຕຣູກັນຢູ່ຢ່າງນີ້?

<u>ຈຸດປະສົງຂອງບົດຮຽນ:</u> ເພື່ອຈະສະແດງໃຫ້ເຫັນວ່າ ການແຕກແຍກໃນໝູ່ຄຣິສຕຽນ ແມ່ນການຂັດຂວາງພຣະພອນໃນຄຣິສຕະຈັກ ແລະ ກໍບໍ່ແມ່ນນ້ຳພຣະທັຍຂອງພຣະເຈົ້າ.

## <u>ຄຳນຳ</u>

ການແຕກແຍກໃນໝູ່ຄຣິສຕຽນ ໄດ້ເກີດມີມາຕັ້ງແຕ່ສມັຍກ່ອນຄຣິຕສັກຣາດ ມາຈົນເຖິງປັດຈຸບັນນີ້. ໂປໂລກ່າວວ່າ ຫລາຍຄົນ ທີ່ເອີ້ນຕົວເອງໃນນາມຊື່ພຣະເຢຊູຄຣິດ ແລະ ປະກາດວ່າ ພຣະອົງຊົງເປັນພຣະເຈົ້າຂອງພວກເຂົາ ຜູ້ນັ້ນເປັນຜູ້ປະກາດ. ຄວາມລອດພົ້ນບໍ່ແມ່ນ ການເລີ່ມຕົ້ນສາສນາຄຣິດຂອງຜູ້ເຊື່ອແຕ່ແມ່ນການເລີ່ມຕົ້ນປະກອບສ່ວນໃນຣາຊອານາຈັກຂອງພຣະເຈົ້າ.

ໂປໂລໄດ້ຕັກເຕືອນພີ່ນ້ອງຊາວໂກຣິນໂທວ່າຄຣິສຕຽນທຸກຄົນ ທີ່ໄດ້ສາລະພາບບາບຂອງຕົວເອງ ແລະໄດ້ທຳງານຮ່ວມກັບຄຣິສຕຽນທັງຫລາຍນັ້ນ ກໍແມ່ນການເຂົ້າຮ່ວມອານາຈັກ ຂອງພຣະເຈົ້າຢູ່ແລ້ວ, ບໍ່ວ່າເຂົາຈະຢູ່ທີ່ໃດກໍຕາມ.

ຄວາມເຊື່ອ ເປັນທີ່ພໍພຣະທັຍຂອງພຣະເຈົ້າ. ຄວາມເຊື່ອແມ່ນການສືບທອດ ມາຈາກພຣະເຈົ້າເຂົ້າສູ່ພາຍໃນຈິດໃຈຂອງມະນຸດ. ດັ່ງນັ້ນຄົນທີ່ເຊື່ອທັງຫລາຍ ຈຶ່ງເປັນຄົນທີ່ມີພຣະເຢຊູຄຣິດຝັງຢູ່ໃນສ່ວນ ເລິກຂອງຈິດໃຈເຂົາ.

## <u>ການເປີດສັກຣາດ, ການທັກທາຍປາສັຍ, ແລະການອະທິຖານ (1:1-9)</u>

ໂປໂລໄດ້ເດີນຕາມທຳນອງຄອງທັມອັນເກົ່າແກ່ຂອງພວກກຣີກ ດ້ວຍການແນະນຳຕົວເອງ ໃນການຂຽນຈົດໝາຍ ແລະຜູ້ທີ່ຈະອ່ານຈົດໝາຍນີ້ກໍຕ້ອງແມ່ນ ຊາວໂກຣິນໂທ. ຕິດຕາມມາດ້ວຍການທັກທາຍປາສັຍ ແລະຄຳອະທິຖານ, ລາວແນະນຳຕົວເອງ ວ່າລາວຖືກເອີ້ນດ້ວຍຣິດອຳນາດຂອງພຣະເຢຊູ ແລະພີ່ນ້ອງຊາວເມືອງໂກຣິນໂທກໍເຊັ່ນດຽວກັນ ເຂົາເຈົ້າກໍຖືກເອີ້ນມາເປັນຜູ້ຮ່ວມວຽກງານ.

ພວກເຮົາສ່ວນຫລາຍໃຊ້ຄຳວ່າ "ເອີ້ນ" ແລະ "ນ້ຳພຣະທັຍພຣະເຈົ້າ" ບໍ່ກະທັດລັດ, ບໍ່ເຈາະຈົງ ຫມາຍຄວາມວ່າ ບໍ່ຫນັກແຫນ້ນ, ແຕ່ວ່າ ໃນ 1 ໂກຣິນໂທນີ້ ການຖືກເອີ້ນມາ ແລະກະທຳຕາມນ້ຳພຣະທັຍຂອງພຣະເຈົ້ານັ້ນແມ່ນຮ່ວມຢູ່ດ້ວຍກັນ, ເຫມືອນດັ່ງໂປໂລ ໄດ້ຖືກມອບຫມາຍໃຫ້ເຮັດຢູ່ໃນເວລານີ້. ໂຊຊະເທນ ທີ່ປາກົດຊື່ ໃນຂໍ້ 1 ນີ້, ແມ່ນເພື່ອນຮ່ວມງານກັບໂປໂລ, ລາວອາດຈະເປັນຜູ້ຖືຈົດຫມາຍສະບັບນີ້ມາສົ່ງ ໃຫ້ພີ່ນ້ອງຊາວໂກຣິນໂທ ແລະບໍ່ແມ່ນແຕ່ທໍ່ນັ້ນລາວຍັງເປັນຜູ້ຂຽນຮ່ວມກັບໂປໂລດ້ວຍ.

ຄຣິສຕະຈັກເມືອງໂກຣິນໂທ ຖືກເອີ້ນວ່າເປັນ "ຄຣິສຕະຈັກຂອງພຣະເຈົ້າ" ຊຶ່ງປະກອບດ້ວຍຜູ້ທີ່ ຖືກແຍກອອກ ຕ່າງຫາກ ມາແລ້ວ. ຄຳວ່າແຍກອອກນີ້ ບໍ່ແມ່ນແຍກອອກມາ ແລ້ວຢາກເຮັດອັນໃດກໍໄດ້ ແຕ່ແຍກອອກມາເພື່ອໃຫ້ດຳເນີນຊີວິດ ຫ່າງຈາກສິ່ງທີ່ຊົ່ວຮ້າຍຕ່າງໆ.

ພາສາທີ່ໂປໂລກ່າວອອກມານັ້ນ ເປັນຄຳເວົ້າທີ່ຫນັກແຫນ້ນຫລາຍ ເພາະສາມາດເປັນ ພື້ນຖານຂອງຄວາມອຸດົມສົມບູນຂອງພາສາ. ຂໍ້ 2. ຄຣິສຕຽນບໍ່ວ່າຈະຢູ່ທີ່ໃດ ແມ່ນນະມັສການພຣະເຈົ້າ ດ້ວຍກັນ, ຮ້ອງອອກພຣະນາມພຣະເຈົ້າອົງດຽວກັນ ແລະດ້ວຍການສາລະພາບບາບໃນພຣະນາມຂອງຜູ້ດຽວກັນ.

ຂໍ້ 3 "ພຣະຄຸນ" ແລະ "ສັນຕິສຸກ" ທັງສອງຢ່າງນີ້ມາຈາກພຣະເຈົ້າ ເຖິງແມ່ນຈະເວົ້າສັ້ນໆ ແຕ່ກໍເຕັມໄປດ້ວຍຄວາມຫມາຍຫລາຍປະການ. ສັງເກດເບິ່ງຄຳວ່າ "ຄຣິດ" ເປັນພາສາກຣີກ, ຊຶ່ງຄົນຍິວທັງຫລາຍ ຈະໃຊ້ແປວ່າເມຊີອາ , ພວກເຂົາໄດ້ລໍຖ້າເປັນເວລານານ ໃນເຊື້ອສາຍຂອງດາວິດ.

ໂປໂລມີຄວາມຊື່ນຊົມຍິນດີຫລາຍທີ່ພີ່ນ້ອງຊາວໂກຣິນໂທມີປະສົບການໃນພຣະຄຸນພຣະເຈົ້າ. ຂໍ້ 4 ພວກເຂົາທັງຫລາຍຮັ່ງມີກໍຍ້ອນພຣະຄຸນຂອງພຣະເຈົ້າ, ພວກເຂົາໄດ້ຮັບຂອງປະທານຫລາຍຢ່າງທັງວາຈາແລະຄວາມຮູ້ທຸກຢ່າງ. ຂໍ້ 5ແລະ6. ພວກເຂົາບໍ່ຂາດເຂີນສິ່ງໃດ ແລະມີຢູ່ຈົນເຖິງວັນພຣະເຢຊູສະເດັດກັບມາ. ຂໍ້ 7ແລະ8. ຄວາມເຊື່ອໃນພຣະເຈົ້າ ນັ້ນສຳຄັນຫລາຍ ພຣະເຈົ້າຢາກໃຫ້ມີຄວາມເຊື່ອຈົນເຖິງທີ່ສຸດ. ພຣະອົງໄດ້ສັນຍາແລ້ວວ່າ ຜູ້ໃດທີ່ມາທາງພຣະເຢຊູຜູ້ນັ້ນຈຶ່ງຈະລອດພົ້ນ. ພຣະເຈົ້າຊົງສັດຊື່ ທ່ຽງທັມ ຂໍ້ 9.

<u>ການແຕກແຍກໃນຄຣິສຕະຈັກ (1:10-17)</u>

ການສາມັກຄີທັມ ທີ່ຄຣິສຕະຈັກເມືອງໂກຣິນໂທ ຊຶ່ງເອີ້ນວ່າ ໄມ້ຕາຍ ປະຊຸມກັນ ກັບໄມ້ແຫ້ງເຮັດໃຫ້ມີສຽງດັງເກີດຂຶ້ນໃນຫມູ່ພວກເຂົາ. ໂປໂລໄດ້ຂໍຮ້ອງໃຫ້ເປັນນ້ຳນຶ່ງໃຈດຽວ ແລະຖືກຕ້ອງປອງດອງກັນ ເຖິງແມ່ນວ່າ ຈະມີຄວາມແຕກຕ່າງທາງຮີດຄອງປະເພນີ ແລະດ້ານນິສັຍໃຈຄໍກໍຕາມ ແຕ່ພວກເຮົາກໍຍັງມີຫົວໃຈ, ຄວາມເຊື່ອ ແລະຍັງຈະມີການຕັດສິນອັນດຽວກັນ.

ໂປໂລຢູ່ທີ່ເມືອງເອເຟໂຊ ໃນຂະນະທີ່ລາວກຳລັງຂຽນ 1ໂກຣິນໂທ ນີ້. ລາວໄດ້ຕ້ອນຮັບ ຄົນໆນຶ່ງທີ່ເດີນທາງມາຈາກເມືອງໂກຣິນໂທ (ນາງຂະໂລເອ) ເມື່ອໂປໂລໄດ້ຮັບຂ່າວແລ້ວ ລາວກໍມີຄວາມເສັຽໃຈຫລາຍ. ຂໍ້ 11. ຈະເປັນດ້ວຍນິສັຍ ຫລືຢ່າງໃດບໍ່ຮູ້ ພວກເຂົາມັກແບ່ງເປັນພັກເປັນພວກແລ້ວກໍບອກວ່າຂ້ອຍມັກຜູ້ນັ້ນ ຂ້ອຍມັກຜູ້ນີ້. ຫລືເປັນຍ້ອນວັທນະທັມຕ່າງກັນ, ຫລື ເປັນຍ້ອນລະດັບຄວາມຮູ້ບໍ່ເທົ່າທຽມກັນ ຢ່າງໃດກໍຕາມ ສິ່ງສຳຄັນນັ້ນກໍຄື ພຣະຄຳຂອງພຣະເຈົ້າ.

ຄຣິສຕະຈັກເມືອງໂກຣິນໂທແບ່ງອອກເປັນ 4 ພວກ. 1. ຝ່າຍໂປໂລ, 2. ຝ່າຍອາໂປໂລ, 3, ຝ່າຍເກຟາ

4. ຝ່າຍພຣະຄຣິດ. ໂປໂລຈຶ່ງໄດ້ວາງຄຳຖາມວ່າ: ພຣະຄຣິດແບ່ງອອກເປັນຫລາຍອົງແລ້ວຫລື? ແລະລາວຍັງຖາມຄຳຖາມອີກຕໍ່ໄປວ່າ: ໂປໂລໄດ້ຄຶງຢູ່ໄມ້ກາງແຂນເພື່ອພວກເຈົ້າຫລື? ຄຳຖາມນີ້ ເປັນຄຳຖາມທີ່ເຮັດໃຫ້ເຮົາຄຶດ. ຄຳຖາມທີ່ຝັງ ຢູ່ໃນສອງຂໍ້ນີ້ກໍແມ່ນວ່າ ທ່ານເຊື່ອພຣະເຢຊູຄຣິດແທ້ບໍ່?

ການເຊື່ອ ແລະການໃກ້ຊິດ ແມ່ນການພົວພັນລະຫວ່າງພຣະຄຣິດ ແລະຜູ້ຕິດຕາມພຣະອົງ. ໂປໂລຈຶ່ງ ເວົ້າວ່າ ຖ້າເຈົ້າກະທຳບາບຕໍ່ພີ່ນ້ອງຂອງຕົນກໍເທົ່າກັບທ່ານເຮັດບາບຕໍ່ສູ້ພຣະຄຣິດ. 1 ກທ 8:12. ຍັງບໍ່ພໍເທົ່ານັ້ນ ລາວຍັງໄດ້ຍົກຕົວຢ່າງໃຫ້ເຫັນເຖິງຄຣິສຕະຈັກ ວ່າເປັນສ່ວນຮ່ວມເຫມືອນຮ່າງກາຍ. 1ກທ 12:12.

## <u>ຖ້າພຣະຄຣິດມີຜູ້ດຽວ ຄຣິສຕະຈັກກໍບໍ່ຄວນແບ່ງແຍກ.</u>

ພຣະນາມຂອງພຣະເຢຊູຄຣິດຖືກເອີ້ນໃນຫມູ່ຄຣິສຕຽນ ສມັຍເດີມມາ. ກິຈການ. 22:16; ຢາໂກໂບ 2:7; ມັດທາຍ 28:19 ພຣະນາມຂອງພຣະຄຣິດມີອຳນາດ ບໍ່ແມ່ນພຣະນາມ ທັນສມັຍ, ບໍ່ແມ່ນພຣະນາມທີ່ແປກປລາດ ແຕ່ເປັນພຣະນາມຂອງພຣະບຸດຂອງພຣະເຈົ້າ, ເປັນພຣະນາມທີ່ຄວນຍົກສູງ, ເປັນພຣະນາມທີ່ໃຫ້ຊີວິດ, ພຣະອົງຊົງສິ້ນພຣະຊົນ ແລະສາມວັນ ພຣະອົງຄືນພຣະຊົນ ແລະ ພຣະອົງມີຊັຍຊະນະເຫນືອຄວາມມືດ, ພຣະອົງຊົງສະຖິດຢູ່ໃນອານາຈັກຂອງພຣະເຈົ້າ ແລະວັນນຶ່ງພຣະອົງຈະສະເດັດມາຮັບເອົາພວກເຮົາທັງຫມົດໄປຢູ່ກັບພຣະອົງ.

ໂປໂລມີຄວາມດີໃຈທີ່ລາວບໍ່ໄດ້ໃຫ້ບັບຕິສະມາໃນຫມູ່ພວກທີ່ຜິດຖຽງກັນນັ້ນ 1 ກທ 1:14-16 ບໍ່ແມ່ນລາວດີໃຈດ້ວຍເຣື່ອງອັນໃດດອກ ແຕ່ລາວດີໃຈເພາະຈະບໍ່ມີຄົນເວົ້າວ່າ ຂ້ອຍບັບຕິສະມາໃນນາມຜູ້ນັ້ນໃນນາມຜູ້ນີ້.

ຄຣິສຕຽນທຸກວັນນີ້ (ລວມທັງຄະນະບັບຕິສດ້ວຍ) ມັກເນັ້ນຫນັກໃສ່ແຕ່ການບັບຕິສະມາ. ຕາມຄວາມຈິງແລ້ວ ຄວາມສຳຄັນແທ້ໆນັ້ນແມ່ນ ການສຳນຶກບາບ ແລ້ວຮັບເຊື່ອເອົາພຣະເຢຊູຄຣິດ ແລ້ວພິທີບັບຕິສະມາຈຶ່ງມາຕາມຫລັງ. ໂປໂລເນັ້ນຫນັກເຖິງການປ່າວປະກາດຫລາຍກວ່າສິ່ງອື່ນໃດ. ເພາະພຣະກິຕິຄຸນຂອງພຣະເຢຊູເປັນສິ່ງທີ່ທຸກຄົນຄວນຮູ້ຈັກ. ຈະເປັນຊື່ໂປໂລ ຫລືບໍຣິສັດໂປໂລກໍຕາມ ຫລື ອຳນາດຂອງໂປໂລກໍຕາມ ບໍ່ອາດສາມາດຈະເຮັດໃຫ້ລອດພົ້ນໄດ້ ນອກຈາກ ອຳນາດແຫ່ງພຣະຄຸນຂອງພຣະເຈົ້າ ແລະອຳນາດແຫ່ງພຣະວິນຍານບໍລິສຸດເທົ່ານັ້ນ ທີ່ຈະສາມາດປ່ຽນແປງໃຫ້ຄົນມາຫາພຣະເຈົ້າໄດ້. (1:17)

ຊາວເມືອງໂກຣິນໂທມີປະສົບການ ໃນດ້ານການຮັບພຣະຄຸນ, ໄດ້ຮັບຂອງພຣະຣາຊທານໂດຍພຣະວິນຍານບໍຣິສຸດ ແລະມີປະສົບການດ້ານຄວາມເຊື່ອ. ເປັນຫຍັງເຣື່ອງທີ່ເສົ້າສລົດໃຈດັ່ງນີ້ຈຶ່ງເກີດຂຶ້ນໃນຫມູ່ພວກເຂົາ. ພວກເຂົາຍັງບໍ່ທັນໃຫຍ່ ເຂົາຈຶ່ງເຫັນຕົວບຸກຄົນໃຫຍ່ກວ່າ ພຣະກິຕິຄຸນຂອງພຣະເຈົ້າໃຫຍ່ກວ່າການປ່າວປະກາດ.

## <u>ຄຳຖາມ:</u>

1. ໂບດບັບຕິສ ເປັນໂບດທີ່ເອີ້ນວ່າ "ກອງປະຊຸມມີອຳນາດ" ປໂຍກນີ້ມີຄວາມຫມາຍວ່າຢ່າງໃດ? ໂປໂລກ່າວໃນ 1 ກທ 1:2 "ຊຶ່ງພຣະອົງໄດ້ຊົງເອີ້ນໃຫ້ເປັນໄພ່ພົນດ້ວຍກັນກັບຄົນທັງປວງທຸກບ່ອນ"

2. ມີໃນຂໍ້ໃດອີກແດ່ ນອກຈາກ 1:8 ທີ່ກ່າວວ່າ: "ໃນວັນຂອງອົງພຣະຜູ້ເປັນເຈົ້າຂອງເຮົາທັງຫລາຍ" ໃຫ້ໃຊ້ ປຶ້ມຊ່ວຍພຣະຄັມພີຊອກຫາ (Concordance) ຂໍ້ຄວາມຕອນນີ້ ມີຄວາມໝາຍວ່າຢ່າງໃດ?

3. ສົມທຽບ 1ໂກຣິນໂທ 1:10 ແລະ ຟີລິບປອຍ 2:1-2 ຢູ່ໃນສະພາບການຢ່າງໃດ ທ່ານຄິດວ່າ ຄຣິສຕຽນຄວນຈະຕົກລົງກັນໄດ້ດີ? ແລະ ໃນສະພາບການແບບໃດຄຣິສຕຽນຄວນຈະຂື້ນກ້ານຂື້ນສານ? ເບິ່ງ ຄາລາເຕັຽ 1:6-9

# ບົດຮຽນທີ 2
# ຈົ່ງຄິດເຖິງໄມ້ກາງແຂນ

---

<u>ຂໍ້ພຣະຄັມພີສຳຫລັບບົດຮຽນນີ້:</u> 1 ໂກຣິນໂທ 1: 18-2:2

<u>ຂໍ້ພຣະຄັມພີສຳຫລັບເບື້ອງຫລັງ:</u> 1 ໂກຣິນໂທ 1: 18-2:2

<u>ຈຸດສຳຄັນຂອງບົດຮຽນນີ້:</u> ກາງແຂນຂອງພຣະຄຣິດ ປະທານສິດໃຫ້ເຮົາມີສາຍພົວພັນກັນກັບພຣະເຈົ້າ ແລະ ເພື່ອນຄຣິສຕຽນດ້ວຍກັນ.

<u>ຄຳຖາມເພື່ອການສຳຣວດ:</u> ໃນຄວາມສັມພັນຂອງເຮົາກັບພຣະເຈົ້າ ແລະຄຣິສຕຽນດ້ວຍກັນນັ້ນ --ທ່ານເອົາໄມ້ກາງແຂນຂອງພຣະຄຣິດໄວ້ຢູ່ທີ່ໃດ?

<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອຈະບົ່ງບອກໃຫ້ຮູ້ເຖິງຄວາມໝາຍ ຂອງໄມ້ກາງແຂນຂອງພຣະຄຣິດ ນັ້ນຄືຄວາມສັມພັນຂອງຂ້ອຍກັບພຣະເຈົ້າ ແລະ ເພື່ອນຄຣິສຕຽນ.

<u>ຄຳນຳ:</u>

ຫລາຍປີຜ່ານມາ ເວລາທີ່ຂ້າພະເຈົ້າຮັບໃຊ້ພຣະເຈົ້າທີ່ຣັດ ຄາລີຟໍເນັຽ. ມີຊາວໜຸ່ມຄົນນຶ່ງຕ້ອງການຢາກເປັນ ມິສຊັນນາຣີ. ລາວຢາກໃຫ້ຂ້າພະເຈົ້າຂຽນໜັງສືຮັບຮອງໃຫ້, ແລະຂ້າພະເຈົ້າກໍພູມໃຈທີ່ສຸດທີ່ຈະຂຽນໃຫ້ລາວ. ກ່ອນທີ່ຂ້າພະເຈົ້າຈະຂຽນໃຫ້ລາວ, ຂ້າພະເຈົ້າ ໄດ້ຖາມລາວຄຳຖາມນຶ່ງ ແລະໃຫ້ລາວອະທິບາຍ ຄຳວ່າ "ກິຕິຄຸນ". ລາວແປກປລາດໃນຄຳຖາມຂອງຂ້າພະເຈົ້າ ແລະຂ້າພະເຈົ້າກໍແປກປລາດທີ່ໄດ້ຮັບຄຳຕອບຈາກລາວ. ລາວພະຍາຍາມທີ່ຈະອະທິບາຍໃຫ້ຂ້າພະເຈົ້າຮູ້ວ່າ ພຣະເຢຊູໄດ້ເຮັດຫຍັງໃຫ້ລາວແດ່. ລາວອະທິບາຍເຖິງຄວາມສຸກ ແລະສັນຕິສຸກໃນຊີວິດຂອງລາວ ຊຶ່ງແຕກຕ່າງກັບຊີວິດເກົ່າຢ່າງໃດ. ຂ້າພະເຈົ້າກໍພະຍາຍາມຈົ້ມ ເພື່ອຈະໄດ້ຄຳທີ່ເໝາະສົມກັບຄຳວ່າ ກິຕິຄຸນ, ແຕ່ຄຳຕອບຂອງລາວກໍຍັງ ຢູ່ໃນຮູບເດີມ. ຂ້າພະເຈົ້າຈຶ່ງບອກໃຫ້ລາວໄປ ສຶກສາ ຄຳວ່າ ກິຕິຄຸນໃຫ້ຊອກຫາ ໃນຈົດໝາຍຂອງໂປໂລ, ຫລັງຈາກນັ້ນລາວກໍໄປ ແລະແລ້ວກໍກັບມາໃຫມ່ອີກ. ທຳອິດ ລາວກໍຮູ້ສຶກບໍ່ດີໃຈນຳຂ້າພະເຈົ້າ ແຕ່ວ່າ ຫລັງຈາກທີ່ໄດ້ອະທິບາຍເປັນທີ່ຮຽບຮ້ອຍແລ້ວ ລາວກໍມີຄວາມດີໃຈຫລາຍ ແລະ ຂ້າພະເຈົ້າກໍຂຽນຈົດໝາຍຮັບຮອງໃຫ້ລາວ ດ້ວຍຄວາມດີໃຈ.

ຊາວໜຸ່ມຄົນນີ້ ລືມສິ່ງທີ່ສຳຄັນທີ່ສຸດ, ເມື່ອຂ້າພະເຈົ້າຖາມເຖິງເຣື່ອງ ກິຕິຄຸນ ໃນຄຳຕອບຂອງລາວບໍ່ມີຄຳວ່າ ພຣະເຢຊູຊົງ ສິ້ນພຣະຊົນ ແລະ ພຣະອົງຊົງຟື້ນຄືນພຣະຊົນ ລາວມີແຕ່ອະທິບາຍ ຜົນທີ່ລາວໄດ້ຮັບຢ່າງດຽວ. ລາວຈະໄປປະກາດເຣື່ອງພຣະເຢຊູໄດ້ຢ່າງໃດ.

<u>ພຣະກິຕິຄຸນ: ຄວາມອ່ອນແອ ແລະ ຄວາມໂງ່ ( 1 ກທ 1:18-25)</u>

ໂປໂລໄດ້ບັນລະຍາຍວ່າ ຄົນທັງຫລາຍເຫັນໄມ້ກາງແຂນເປັນເຣື່ອງໂງ່ ຂໍ້ 18. ຖ້າຈະເວົ້າເຖິງເຣື່ອງໄມ້ກາງແຂນແລ້ວ ພວກເຮົາກໍຈະເຫັນຢ່າງຈະແຈ້ງແລ້ວວ່າມີການສິ້ນພຣະຊົນຂອງພຣະເຢຊູລວມໃນທີ່ນັ້ນ. ເຖິງວ່າຈະກ່າວໃນທີ່ໃດກໍແລ້ວແຕ່ ໂປໂລບໍ່ເຄີຍລະເລີຍເຣື່ອງການສິ້ນພຣະຊົນ ແລະການ ຟື້ນຄືນພຣະຊົນເລີຍ ເພາະພຣະກິຕິຄຸນ ຈະຫລີກລ້ຽງຈາກສິ່ງນີ້ ບໍ່ໄດ້ເດັດຂາດ, ເປັນສິ່ງສຳຄັນຫລາຍທີ່ໂປໂລບັນທຶກໄວ້, ເພາະວ່າເກີດມີການຖົກຖຽງກັນຫລາຍຢ່າງ. ຜູ້ຄົນເຫລົ່ານັ້ນ ເປັນ ຜູ້ດີ, ຢູ່ແບບມີກຽດ, ດຳເນີນຊີວິດແບບຄົນຊັ້ນສູງ ແຕ່ນິສັຍ ທາດແທ້ຂອງພວກ

ເຂົາແລ້ວ ແມ່ນມັກດູຖູກຢຽບຫຍາມ ຄົນອື່ນ ເຫັນຄົນອື່ນຕໍ່າກວ່າຄົນ. ແມ່ນແຕ່ເບິ່ງນັກເທດ ແລ້ວກໍຍັງວ່າຄົນນັ້ນຄົນນີ້, ພວກຂ້ອຍເປັນຝ່າຍນັ້ນ, ພວກເຈົ້າເປັນຝ່າຍນີ້ ພວກທີ່ຫລຽວບໍ່ເຫັນກາງແຂນຂອງພຣະເຢຊູ,

ໃນຈົດຫມາຍຂອງໂປໂລ, ລາວໄດ້ສອດແຊກຍຸທສາດ ການຕັກເຕືອນໄປດ້ວຍ. ລາວໄດ້ເຕືອນທຸກໆຄົນ ຜູ້ທີ່ມັກຫາເຣື່ອງ ແລະທັງຜູ້ທີ່ມັກເຮັດໃຫ້ແຕກແຍກ ແລະທັງຜູ້ທີ່ມັກສ້າງບັນຫາ ວ່າພວກທ່ານກຳລັງກະທຳການຜິດພາດຢ່າງໃຫຍ່ແລ້ວ. ລາວໄດ້ອ້າງອີງເຖິງພຣະຄັມພີເດີມວ່າ: "ເຮົາຈະທຳລາຍປັນຍາຂອງຄົນມີປັນຍາ ແລະຈະໃຫ້ຄວາມສລາດຂອງຄົນສລາດສູນເສັຽໄປ." ຂໍ້ 19 ແລະໂປໂລຍັງຍ້ອນຖາມອີກວ່າ "ຄົນມີປັນຍາຢູ່ໃສ ນັກທັມຢູ່ໃສ ນັກໂຕ້ຕອບບັນຫາສມັຍນີ້ຢູ່ໃສ ພຣະເຈົ້າບໍ່ໄດ້ຊົງກະທຳໃຫ້ປັນຍາຂອງໂລກ ກາຍເປັນຄວາມໂງ່ຫລື." ຂໍ້ 20 ເມື່ອເປັນດັ່ງນັ້ນແລ້ວ ຢ່າໃຫ້ ຄວາມໂງ່, ຄວາມອ່ອນແອ, ແລະການດູຖູກຢຽບຫຍາມ, ເຫັນຄົນອື່ນຕໍ່າ, ເກີດຂື້ນໃນຄຣິສຕະຈັກຂອງພຣະເຈົ້າຢ່າງເດັດຂາດ.

ຄວາມເລວຊາມຕໍ່າຊ້າ ຄວນຈະບໍ່ມີໃນຫມູ່ທີ່ເຊື່ອໃນພຣະເຈົ້າ. ທີ່ພວກເຮົາມີຄວາມເຊື່ອ ແລະໄດ້ກັບກາຍເປັນຄົນໃຫມ່ ເຮົາຄວນມີຄວາມສລາດພໍ ແລະ ເຫັນເພື່ອນມະນຸດດ້ວຍກັນມີຄວາມສຳຄັນ. ຣິດອຳນາດຂອງການຄືນພຣະຊົນຂອງພຣະເຢຊູ ຊົງເຮັດໃຫ້ເຮົາມີຊັຍຊະນະຊີວິດອັນຫນ້າສະອິດສະອຽນ, ຊີວິດທີ່ອິດອາດ ວຸ້ນວ້າມ ຜ່ານມາ ພີ່ນ້ອງຊາວໂກຣິນໂທ ບໍ່ຄວນຈະໃຫ້ສິ່ງເຫລົ່ານີ້ ໂຜ່ອອກມາໃຫ້ຄົນອື່ນເຫັນເລີຍ.

ມາເບິ່ງທີ່ກາງແຂນ, ໃນເວລາທີ່ພຣະເຈົ້າຊົງສຳແດງຄວາມອ່ອນແອ ແລະຄວາມໂງ່ຂອງພຣະເຈົ້າ ແຕ່ພວກເຮົາ ກໍຍັງຫລິງເຫັນຄວາມສລາດຂອງພຣະເຈົ້າ ພະລັງຂອງພຣະອົງຊົງຍັງເຫນືອກວ່າຄົນທີ່ສລາດກວ່າຫມູ່ໃນໂລກ ແລະ ແຂງແຮງກວ່າຄົນທີ່ແຂງແຮງທີ່ສຸດໃນໂລກເຫມືອນກັນ.

ຂໍ້ 21 ໂປໂລກ່າວວ່າ ແມ່ນວ່າມະນຸດໃນໂລກນີ້ ຈະມີຄວາມສລາດຫລາຍປານໃດກໍຕາມ, ມະນຸດບໍ່ສາມາດຈະຮູ້ຈັກພຣະເຈົ້າ ດ້ວຍສະຕິປັນຍາຂອງຕົວເອງໄດ້. ພຣະເຈົ້າເປັນຜູ້ມີພຣະຄຸນ ແລະ ເຮັດໃຫ້ຜູ້ທີ່ເຊື່ອໃນພຣະອົງເທົ່ານັ້ນທີ່ຮູ້ຈັກພຣະອົງ. ແລະເມື່ອພວກເຮົາປະກາດເຣື່ອງຂອງພຣະຄຣິດພວກເຂົາກໍຖືວ່າເປັນເຣື່ອງໂງ່. ຢ່າງໃດກໍຕາມ ຄວາມໂງ່ຂອງພຣະເຈົ້າ ກໍຍັງສລາດກວ່າປັນຍາຂອງມະນຸດ, ແລະຄວາມອ່ອນແຮງຂອງພຣະເຈົ້າ ກໍຍັງເຂັ້ມແຂງກວ່າກຳລັງຂອງມະນຸດ. ຂໍ້ 25.

## <u>ຊາວເມືອງໂກຣິນໂທ: ເຫັນຄວາມເລິກລັບແຫ່ງພຣະຄຸນຂອງພຣະເຈົ້າເປັນຂອງຕໍ່າ ( 1 ກທ 1:26-31)</u>

ເປົ້າຫມາຍຂອງພຣະເຈົ້າ ທີ່ພຣະອົງຊົງເລືອກເອົາໄມ້ກາງແຂນ ເປັນຄວາມໂງ່ ແລະຄວາມອ່ອນແອຂອງພຣະອົງນັ້ນ ກໍແມ່ນຄວາມລອດພົ້ນ. ໂປໂລກ່າວເຕືອນຊາວໂກຣິນໂທວ່າ ພຣະຄຸນ ທີ່ພຣະອົງມອບໃຫ້ຜູ້ທີ່ຮັບເອົານັ້ນ ເປັນອຸທາຫອນສອນ ເຖິງພຣະເຈົ້າ. ໃນການຊົງເລືອກພີ່ນ້ອງຊາວໂກຣິນໂທໂດຍຜ່ານພຣະກິຕິຄຸນນີ້ ພຣະເຈົ້າບໍ່ໄດ້ເລືອກແຕ່ຄົນມີຄວາມຮູ້, ພວກທີ່ມີຄວາມສາມາດ, ແລະພວກທີ່ມີກຽດສັກສີສູງສົ່ງເທົ່ານັ້ນ ແຕ່ພຣະອົງຊົງເລືອກເອົາຄົນທີ່ຄົນທັງຫລາຍຖືວ່າຕໍ່າຕ້ອຍ, ມະນຸດຖືວ່າໂງ່, ເພື່ອພຣະອົງຈະໄດ້ທຳລາຍສິ່ງທີ່ມະນຸດເຫັນວ່າ ສຳຄັນ. ຂໍ້ 26, 27 ແລະ 28.

ດ້ວຍການຊົງໂຖ່ ໂດຍຜ່ານໄມ້ກາງແຂນ ແລະ ຄຣິສຕະຈັກທີ່ພຣະເຈົ້າຊົງຕັ້ງໄວ້ນັ້ນ ແລະ ເພື່ອຈະບໍ່ມີໃຜອວດຕົວໄດ້ ບໍ່ວ່າຈະເປັນສ່ວນຕົວ, ໃນຫມູ່ສາວົກ ຫລື ໃນຄຣິສຕະຈັກ ພຣະອົງບໍ່ມີພຣະປະສົງຈະໃຫ້ຍົກຕົວເອງຂື້ນ

ໄດ້.   ຄວາມລອດພົ້ນແມ່ນພຣະເຈົ້າເປັນຜູ້ເຮັດເອງ ແລະກະທຳການໃຫ້ສຳເຣັດ ໂດຍໄມ້ກາງແຂນທີ່ຄົນທັງຫລາຍເຫັນວ່າໂງ່ນັ້ນລະ. ຂໍ້ 18.    ຄວາມລອດພົ້ນບໍ່ແມ່ນຄວາມສລາດຂອງມະນຸດ  ຫລື ບໍ່ແມ່ນຄວາມແຂງແຮງຂອງມະນຸດ, ຫລືບໍ່ແມ່ນວັດຖຸ ເງິນຄຳຂອງມະນຸດ,  ຫລືບໍ່ແມ່ນການຕໍ່ສູ້ດ້ວຍກຳລັງຂອງມະນຸດ, ຫລື ບໍ່ແມ່ນການສ້າງຄວາມດີຂອງມະນຸດ.   ຊີວິດທີ່ພວກເຮົາຈະກ້າວຕໍ່ໄປນີ້ ແມ່ນຊີວິດແຫ່ງຄວາມລອດພົ້ນ ຄືລອດພົ້ນຈາກອຳນາດຂອງມານ, ລອດພົ້ນຈາກອຳນາດແຫ່ງຄວາມມືດ, ແລະຊີວິດນີ້ກໍແມ່ນໜ້າທີ່ຂອງພຣະເຈົ້າທີ່ຈະກະທຳເພື່ອເຮົາ.    ໜ້າທີ່ແລະວຽກງານຈະສຳເຣັດໄດ້ ກໍຕ້ອງອາສັຍ "ພຣະເຢຊູຄຣິດ"  ຂໍ້  30

ມະນຸດເຮົາມີຄວາມຮູ້ຄວາມສລຽວສລາດຫລາຍພຽງພໍ ແລ້ວບໍ່?  ພວກເຮົາມີຄວາມຊອບທັມ ທີ່ຖືກຕາມທັມນອງຄອງທັມຂອງພຣະເຈົ້າແລ້ວບໍ່?  ໃນຕົວເຮົານີ້ ມີຄວາມບໍຣິສຸດຫລາຍພຽງພໍ ແລ້ວບໍ່?    ພວກເຮົາມີປະສົບການໃນການຊົງໄຖ່ໃຫ້ອອກຈາກອຳນາດຂອງຄວາມມືດແລ້ວບໍ່?  ຄຳຕອບ ຕໍ່ຄຳຖາມທີ່ຖາມມານີ້ ຄວນຈະເປັນຄຳຕອບທີ່ວ່າ "ມີແລ້ວ"   ຄຸນນະພາບທັງໝົດນີ້ ແມ່ນຂຶ້ນຢູ່ກັບພຣະເຢຊູ,   ພຣະອົງກາຍມາເປັນຄວາມສລຽວສລາດ ພຣະອົງກາຍມາເປັນຄວາມຊອບທັມ, ພຣະອົງກາຍມາເປັນຜູ້ທຳລາຍຄວາມບາບ, ແລະພຣະອົງກາຍມາ ເປັນພຣະຜູ້ໄຖ່ຂອງເຮົາ.  ຂໍ້ 30   ຂໍ້ພຣະຄັມພີກ່າວວ່າ: "ຜູ້ອວດອ້າງນັ້ນຈົ່ງເອົາພຣະອົງເຈົ້າມາອວດອ້າງ."  ຂໍ້ 31

## <u>ສະລຸບ:  ຄວາມອ່ອນແອຂອງກາງແຂນຮຽກຮ້ອງຕ້ອງການໃຫ້ເຮົາເທສນາສັ່ງສອນ ( 1 ກທ 2:1-5)</u>

ເພາະວ່າຄວາມລອດພົ້ນ ຜ່ານຄວາມອ່ອນແອ ແລະຄວາມໂງ່ ຂອງກາງແຂນນີ້ລະ, ໂປໂລຈຶ່ງຖືກປ່ຽນຮູບແບບ ໃນການສິດສອນ.   ລາວບອກວ່າເວລາລາວ ມາເຖິງເມືອງໂກຣິນໂທ ລາວຈະບໍ່ມາເພື່ອເກັ້ຽກ່ອມ ດ້ວຍວາຈາຫລື ດ້ວຍຄຳເທສນາ ແຕ່ຈະມາເປັນພະຍານໃນເຣື່ອງຂອງພຣະເຈົ້າເທົ່ານັ້ນ.

ດັ່ງນັ້ນ  2:5  ຊາວໂກຣິນໂທທັງຫລາຍຈຶ່ງຈະບໍ່ສາມາດເວົ້າໃຫ້ໂປໂລວ່າ   ມາຫວ່ານພາສາອັນສລະສະຫລວຍ ແລະດ້ວຍສະຕິປັນຍາອັນສລາດປາດເປື່ອງ ແຕ່ຈະມາດ້ວຍພຣະຄຣິດ ແລະການຖືກຄຶງທີ່ກາງແຂນເທົ່ານັ້ນ

ການທີ່ຈະສອນ ເຣື່ອງການສິ້ນພຣະຊົນ ແລະການຄືນພຣະຊົນນັ້ນ ແມ່ນຕ້ອງສຳແດງອອກໃນພຣະວິນຍານບໍຣິສຸດ ແລະອຳນາດຂອງພຣະອົງ. ຂໍ້ 4.  ຄວາມເຊື່ອຂອງພີ່ນ້ອງຊາວໂກຣິນໂທ ຈະຕ້ອງບໍ່ຂຶ້ນຢູ່ກັບສະຕິປັນຍາຂອງມະນຸດ ແຕ່ຕ້ອງຂຶ້ນຢູ່ກັບໄມ້ກາງແຂນ.

<u>ຄຳຖາມ:</u>

1. ຈາກ 1:18 ຫາ 2:2  ຄຳເວົ້າ ຫລື ປໂຍກໃດທີ່ ໂປໂລ ກ່າວອອກມາ ຄ້າຍໆ ຄຳທີ່ວ່າ "ພຣະກິຕິຄຸນ"

2. ເປັນທັມມະດາ ທີ່ຄຣິສຕະຈັກຕ້ອງການໃຫ້ມີຄົນທີ່ ມີພລັງ, ມີເງິນ, ມີອິທິພົນ.  ທ່ານຈະຄິດວ່າຢ່າງໃດ ຖ້າສົມທຽບໃສ່ຄຳເວົ້າຂອງໂປໂລ ໃນ 1:26-28?

3. ຫລັງຈາກທີ່ສົນທະນາກັນແລ້ວໃນຄຳຖາມທີສອງ,  ທ່ານມີຄວາມຄິດເຫັນແນວໃດ ໃນຄວາມສຳຄັນຂອງຜູ້ນຳໃນຄຣິສຕະຈັກ?

4. ການປ່າວປະກາດໃນຄຣິສຕະຈັກຂອງທ່ານເປັນແນວໃດ?

5. ໃນຄຣິສຕະຈັກຂອງທ່ານມີຄົນປະເພດນີ້ບໍ່? 1:26-28? ຖ້າມີ...........ຖ້າບໍ່ມີ............

# ບົດຮຽນທີ 3
# ຈົ່ງເປັນຜູ້ໃຫຍ່ທາງຝ່າຍຈິດວິນຍານ

---

<u>ຂໍ້ພຣະຄັມພີສຳຫລັບບົດຮຽນນີ້:</u> 1 ໂກຣິນໂທ 2:14 ຫາ 3:16

<u>ຂໍ້ພຣະຄັມພີສຳຫລັບເບື້ອງຫລັງ:</u> 1 ໂກຣິນໂທ 2: 14-3:23

<u>ຈຸດສຳຄັນຂອງບົດຮຽນນີ້:</u> ຊີວິດຄຣິສຕຽນທີ່ຈະເຣີນເຕີບໂຕຝ່າຍຈິດວິນຍານ ແມ່ນຄຸນນະລັກສະນະທີ່ໃຫຍ່ໃນການເປີດກວ້າງ ແລະໃນການເຊື່ອຟັງພຣະເຈົ້າ, ການຖ່ອມຕົວ ໃນການບັນລຸຜົນ, ໃນດ້ານຄວາມຮັກ, ປະສົມປະສານສອດຄ້ອງກັບຜູ້ອື່ນ.

<u>ຄຳຖາມເພື່ອການສຳຣວດ:</u> ຄຣິສຕຽນທີ່ຈະເລີນເຕີບໂຕຝ່າຍຈິດວິນຍານເປັນຄືແນວໃດ?

<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອຈະໄດ້ຊັ່ງຊາຕີລາຄາ ວ່າຄຸນລັກສະນະຂອງຊີວິດຄຣິສຕຽນທີ່ໃຫຍ່ທາງດ້ານຈິດວິນຍານນັ້ນ.

## <u>ຄຳນຳ:</u>

<u>ຈົ່ງເຂົ້າໃຈ:</u> ຄວາມສຽດສີ ຢ້ານລົ່ນ ຄວາມອິດສາຣິສຍາ ແລະ ການແຂ່ງຂັນຊີງດີຊີງເດັ່ນ ໃນຫມູ່ຊາວເມືອງໂກຣິນໂທ ເລັງໃຫ້ເຫັນເຖິງຄວາມມີອະຣິຍະທັມ ແລະ ການຕັດສິນເຖິງຈິດວິນຍານ. ດັ່ງນັ້ນແຫລະ ຈຶ່ງເປັນຄວາມສຳຄັນໃນການທີ່ໂປໂລ ຄວນຈະເຮັດໃຫ້ຜູ້ທີ່ມີຄວາມເຊື່ອທັງຫລາຍ ເຂົ້າໃຈໃນຫນ້າທີ່ໃນການຮັບໃຊ້ວຽກຂອງພຣະເຈົ້າ.

ໃນປີ 1969 ສມັຍທີ່ຂ້າພະເຈົ້າຍັງຢູ່ໃນປະເທດລາວ ຂ້າພະເຈົ້າໄດ້ຖືກແຕ່ງຕັ້ງໃຫ້ໄປເປັນກັມມະການສອບເສັງ ໃນໂຮງຮຽນແຫ່ງນຶ່ງ. ນັກຮຽນກໍມາຈາກຫລາຍບ້ານຫລາຍເມືອງ. ຂ້າພະເຈົ້າຈະພະຍາຍາມເຮັດໃຫ້ດີທີ່ສຸດໃນການສອບເສັງຄັ້ງນັ້ນ. ເມື່ອເຖິງເວລາກວດຄະແນນມາເຖິງຫມົດທຸກຄົນກໍຕັ້ງໃຈທຳງານຂອງໃຜລາວ. ເມື່ອເວລາໃກ້ຈະສິ້ນສຸດລົງ ຊາຍຄົນນຶ່ງທີ່ຂ້າພະເຈົ້ານັບຖື ແລະ ເປັນເພື່ອນຮ່ວມງານ ກໍເອົາຈົດຫມາຍນ້ອຍໆນຶ່ງຍື່ນໃສ່ມືຂອງຂ້າພະເຈົ້າ. ເນື້ອໃນມີຢູ່ວ່າ: ພະຍາຍາມເຮັດໃຫ້ເດັກນ້ອຍທີ່ມີຊື່...............ຜ່ານໃຫ້ໄດ້ແດ່ເດີ້. ລູກຂອງຄົນອື່ນຜ່ານໄດ້ ຄົນນີ້ຕ້ອງຜ່ານໃຫ້ໄດ້. ຂ້າພະເຈົ້າຮູ້ສຶກປວດຫົວຂຶ້ນທັນທີ.

ພວກເຮົາຈະພົບຕົວເອງໃນສະພາບການເຊັ່ນນີ້ ເກືອບທຸກຄົນ. ໃນສະພາບການຂອງໂປໂລ ລາວບອກວ່າພວກທ່ານເຫັນການຕັດສິນເປັນນິດສລົວ ເປັນພໍມືວໆ. ແຕ່ຂໍ້ພຣະຄັມພີໄດ້ບອກຢ່າງຈະແຈ້ງເຖິງການຮັກເງິນຄຳ ກໍເຮັດໃຫ້ຮາກເຫງົ້າຂອງທີ່ມາຂອງມານຊາຕານງອກຂຶ້ນ. (1ຕທ 6:10) ອີກອັນນຶ່ງກໍຄືການເຫັນແກ່ຕົວ ແລະເຫັນແຕ່ຄວາມຕ້ອງການຂອງຕົວເອງ. ການພາກພູມໃຈໃນຕົວເອງຫລາຍກໍແມ່ນການເຮັດໃຫ້ການຕັດສິນບິດເບືອນ ແລະກໍ ຍັງເຮັດໃຫ້ເຮົາຕັດສິນໃຈຜິດໆ. ຢ່າລືມວ່າເຮົາຍັງສ້າງການຖືກຖຽງ -- ການປະຕິບັດວຽກງານຊັກຊ້າບໍ່ກົງເປົ້າຫມາຍ--ການຕັດສິນໃຈຂອງເຮົາກໍບໍ່ທ່ຽງກົງ. ເຮົາຈະເຫັນຕົວເອງຢູ່ໃນເປົ້າ ຂອງການຖືກຖຽງຢູ່ສເມີ. ສິ່ງເຫລົ່ານີ້ແມ່ນຊີວິດເກົ່າຂອງຊາວເມືອງໂກຣິນໂທ.

ຈິດວິນຍານທີ່ອວດອົ່ງ ແລະ ຄວາມພູມໃຈໃນຄວາມມີຖານະສູງ ກຳລັງທຳງານໃນຄຣິສຕະຈັກເມືອງໂກຣິນໂທ. ການຖົກຖຽງໃນການມັກຄົນນັ້ນ ຊອບຄົນນີ້ ຖືເປັນທັມມະດາ ຈຶ່ງເຮັດໃຫ້ມີການແບ່ງແຍກເກີດຂຶ້ນ, ( 1ກທ 1:11-12 ) ການແບ່ງແຍກນຳໄປສູ່ ການມີຫົວສູງວ່າ ຕົວເອງເຮັດໄດ້, ໄດ້ໃຈ ສິ່ງເຫລົ່ານີ້ເກີດຂຶ້ນໃນກອງປະຊຸມ.

ຄວາມສຽດສີ, ຄວາມອິດສາຣິສຍາ ກໍ່ໃຫ້ເກີດການຊີງດີຊີງເດັ່ນ (3:3) ແລະການຊີງດີຊີງເດັ່ນກໍ່ໃຫ້ເກີດ ການເຊີດຊູຕົວເອງ. ການເຊີດຊູຕົວເອງ ເປັນກຸນແຈ ທີ່ຈະເປີດຍົກຕົວເອງຂຶ້ນໃຫ້ສູງເໜືອກວ່າຄົນອື່ນ. ຊາວເມືອງໂກຣິນໂທ ບິດເບືອນມາຕຖານຄວາມເປັນຈິງ--ທີ່ໃຊ້ຄຳອ່ອນຫວານນິ້ມນວນ ເໝືອນວ່າຮັກພຣະເຈົ້າຢ່າງແທ້ຈິງ.

## ການມອງເຫັນທີ່ຜິດພາດ (1 ກທ 2:14-3:4)

ຕາມຄວາມເປັນຈິງແລ້ວ ບາງຄົນໃນເມືອງ ໂກຣິນໂທນີ້ ຍັງມີການດູຖູກຢຽດຫຍາມຄຳເທສນາ ແລະຄຳສັ່ງສອນຂອງໂປໂລຢູ່. ຄຳເວົ້າຂອງລາວ ບໍ່ອ່ອນຫວານ ນິ້ມນວນ ເໝືອນຄົນອື່ນໆ ເຊັ່ນ ອາໂປໂລ ແລະ ນັກເວົ້າທີ່ໜ້າຈັບໃຈ ອາເລັກຊັນດຣຽນ (ກຈ 18:24). ບາງຄົນຊ້ຳຍິ່ງເວົ້າປຽບທຽບ ວ່າອາໂປໂລນີ້ເວົ້າດີກວ່າໂປໂລ, ແຕ່ໂປໂລຈະບໍ່ກ່າວອ້າງສິ່ງໃດໆທັງໝົດ ຕໍ່ສິດທັງຫລາຍ. (1 ກທ 3:7) ແນ່ນອນ ຫລັກການການພິຈາຣະນາໃຫ້ລອບຄອບເປັນສິ່ງທີ່ຈະເຮັດໃຫ້ສິດທັງຫລາຍ ເຂົ້າໃຈໃນຄວາມເປັນຈິງ. ທີ່ຈະມາຖົກຖຽງ ດ້ວຍຄຳເວົ້າອັນອອນຊອນຫລືບໍ່ອອນຊອນກໍຕາມ ໂປໂລເຫັນວ່າ ເປັນການມອງເຫັນທີ່ຜິດພາດ.

ໂປໂລ ໃຊ້ຄຳເວົ້າວ່າ ມະນຸດທັມມະດາ (2:14 ) ນີ້ກໍແມ່ນວິທີຂອງລາວ ທີ່ຈະອະທິບາຍເຖິງສ່ວນບຸກຄົນທີ່ຖືກສ້າງຂຶ້ນມາດ້ວຍກັນ ແຕ່ຍັງບໍ່ທັນໄດ້ເກີດໃໝ່. ໂປໂລຮູ້ວ່າປັດຈຸບັນແມ່ນສມັຍອັນຊົ່ວຮ້າຍ. (ຄຕ. 1:4) ຍັງເຟືອງຟູຢູ່. ຢ່າງໃດກໍຕາມ ໂປໂລຮູ້ດີວ່າ ທີ່ຈະເປັນຄົນໃໝ່ໄດ້ກໍຕ້ອງອາສັຍພຣະເຢຊູ. (2ກທ 5:16-17)

ການຟື້ນພຣະຊົນຂອງພຣະເຢຊູ ແມ່ນການເລີ້ມຕົ້ນຊີວິດໃໝ່. (1 ກທ 15:20-23). ຍິ່ງໄປກວ່ານັ້ນ ຜູ້ທີ່ເຊື່ອທັງຫລາຍ ກໍໄດ້ເລີ້ມຕົ້ນ ໃນການມີຊີວິດໃໝ່ມາແລ້ວ ແລະກໍມີໝາກຜົນແຫ່ງພຣະວິນຍານມາແລ້ວ. (ຣມ 8:15-16, 23) ,ດັ່ງນັ້ນຊີວິດຂອງເຮົາຄວນຈະດຳເນີນໃຫ້ສົມກັບການຖືກຊົງສ້າງໃໝ່ແລ້ວ.

ໃນຫລັກສາສນາຂອງໂປໂລ ພວກເຮົາ ຈະນຳພາຂຍາຍຢ່າງໃດ ເພື່ອບໍ່ໃຫ້ປວັດສາດຊ້ຳຮອຍ. ຕ້ອງເຂົ້າໃຈວ່າຊີວິດໃໝ່ເປັນຊີວິດທີ່ສ້າງຂຶ້ນເທິງການສິ້ນພຣະຊົນ, ການຟື້ນຄືນພຣະຊົນ ແລະການຍົກຍ້ອງພຣະເຢຊູ. ເປັນຊີວິດທີ່ຢູ່ໂດຍພຣະວິນຍານບໍຣິສຸດ. ຜູ້ຍັງຢູ່ໃນຊີວິດເກົ່າ ເປັນມະນຸດທັມມະດາ ພວກເຂົາຍັງບໍ່ທັນເຂົ້າໃຈເຣື່ອງຂອງພຣະວິນຍານ, ແລະຍັງບໍ່ທັນເຂົ້າໃຈໃນເຣື່ອງສິ່ງໃໝ່. ຍັງບໍ່ພໍທໍ່ນັ້ນ ພວກເຂົາຍັງກ່າວວ່າເຣື່ອງຝ່າຍວິນຍານແມ່ນເຣື່ອງໂງ່. ແມ່ນແລ້ວ ເພາະພວກເຂົາບໍ່ເຂົ້າໃຈ ທີ່ຈະເຂົ້າໃຈໄດ້ກໍຕ້ອງອາສັຍພຣະວິນຍານ. (1ກທ 2:14)

ໂປໂລກ່າວວ່າ ຜູ້ທີ່ຢູ່ຝ່າຍວິນຍານ ຜູ້ນັ້ນຈະສັງເກດຮູ້ໄດ້ສິ່ງສາຣະພັດ. (2:15) ເພາະເຂົາມີພຣະທັຍຂອງພຣະຄຣິດ. (2:16) ດົນນານມາແລ້ວ ຜູ້ກາດພຣະທັມ ເອຊາຢາ ກໍໄດ້ຖາມຄຳຖາມນີ້ເໝືອນກັນ ໃນ ອຊຢ. 40:13.

ເປັນຄວາມຈິງ ເວລາທີ່ໂປໂລ ຢູ່ໃນເມືອງໂກຣິນໂທ ລາວກ່າວວ່າ ເຮົາບໍ່ສາມາດ ຈະກ່າວກັບທ່ານເໝືອນເວົ້າກັບຜູ້ທີ່ຢູ່ຝ່າຍວິນຍານ ພວກທ່ານຍັງເປັນ ເດັກອ່ອນໃນພຣະຄຣິດ. (3:1) ເວລາໂປໂລສອນພວກເຂົາ ລາວກ່າວວ່າ ເຮົາຈະສອນທ່ານເໝືອນກັບວ່າເລີ້ມຕົ້ນ. ເຮົາຈະລ້ຽງທ່ານດ້ວຍນ້ຳນົມ ບໍ່ແມ່ນດ້ວຍອາຫານແຂງ. (3:2) ຄວາມຈິງກໍຄືວ່າ ພວກເຂົາມີການແບ່ງແຍກ ແລະການປະພຶດປະຕິບັດຂອງເຂົາເປັນເຄື່ອງບົ່ງບອກ. ມີຫລາຍຢ່າງທີ່ບົ່ງບອກວ່າ ເຂົາຍັງເປັນຝ່າຍເນື້ອໜັງ ຄື ການຜິດຖຽງກັນ ແລະ ການແບ່ງແຍກແຕກພັກແຕກພວກ ຍັງຢູ່ນຳພວກເຂົາ. (3:3) ແລະພວກເຂົາຍັງເຫັນໂປໂລແລະອາໂປໂລແຕກ ຕ່າງ, ໄຈ້ແຍກຍົກຜູ້ນັ້ນຂົ່ມຜູ້ນີ້ ນີ້ລະຈຶ່ງເຫັນໄດ້ວ່າເຂົາບໍ່ໄດ້ຢູ່ຝ່າຍວິນຍານເທື່ອ.

## ການມອງເຫັນທີ່ຖືກຕ້ອງຂອງໂປໂລແລະອາໂປໂລ, ຜູ້ຮັບໃຊ້ຂອງພຣະເຈົ້າ (1ກທ 3:5-16)

ຊາວເມືອງໂກຣິນໂທ ບໍ່ໄດ້ເຕີບໃຫຍ່ຂື້ນຕາມທີ່ຄວນຈະໃຫຍ່. ໂປໂລຈຶ່ງໄດ້ຍົກເອົາສອງເຣື່ອງມາເປັນອຸທາຫອນສອນໃຈພວກເຂົາ ໃນການທຳງານ. ນື່ງ ໂປໂລຮ້ອງພວກຊາວເມືອງໂກຣິນໂທວ່າເປັນບ່ອນໄຮ່ນາ. ໃນທີ່ງທີ່ປູກຝັງໄດ້ນັ້ນ ໂປໂລໄດ້ປູກ "ພຣະກິຕິຄຸນ" ແລະອາໂປໂລ ເປັນຜູ້ຫົດນ້ຳ (3:6) ທັງສອງເປັນຜູ້ຮັບໃຊ້ພຣະເຈົ້າ, ຊື່ງພຣະອົງຊົງໃຊ້ພວກເຂົາຕາມໜ້າທີ່ຂອງພວກເຂົາ.

ໂປໂລໄດ້ວາງຮາກຖານຄຣິສຕະຈັກເທິງຊາວເມືອງໂກຣິນໂທໂດຍມີພໍ່ພຽງຄົນດຽວ. (4:15) ດັ່ງນັ້ນໂປໂລຈຶ່ງສົມມຸດຕົວລາວເອງວ່າ ເປັນຜູ້ປູກ ແລະອາໂປໂລເປັນຜູ້ຫົດນ້ຳ ແຕ່ພຣະເຈົ້າເທົ່ານັ້ນທີ່ຈະເຮັດໃຫ້ໃຫຍ່ໄດ້. (3:6) ເຫດສັນນັ້ນ ຜູ້ປູກແລະຜູ້ຫົດຈຶ່ງບໍ່ສຳຄັນຫຍັງ ແຕ່ພຣະເຈົ້າກໍສຳຄັນກວ່າ. (3:7) ດ້ວຍພຣະຄຸນອັນສູງສຸດຂອງພຣະເຈົ້າເທົ່ານັ້ນ ຊາວເມືອງໂກຣິນໂທຈຶ່ງໄດ້ຮັບຄວາມລອດພົ້ນ.

ຖ້າເວົ້າເຖິງສາຍສັມພັນແລ້ວ ໂປໂລ ແລະ ອາໂປໂລ ກໍເຫມືອນຜູ້ດຽວກັນ ຈະໄດ້ຮັບລາງວັນຕາມການຂອງໃຜລາວ. ແຕ່ລະຄົນນຳພຣະກິຕິຄຸນມາຫາຊາວເມືອງໂກຣິນໂທໃນໜ້າທີ່ຕ່າງກັນ. (3:8)

ຂໍ້ທີ 10 ໂປໂລ ໄດ້ປຽບທຽບວ່າເປັນຕຶກຂອງພຣະເຈົ້າ. ໃນຕອນນີ້ ໂປໂລໄດ້ໃຊ້ສຳນຽງການເວົ້າ ວ່າລາວເປັນເຫມືອນນາຍຊ່າງຜູ້ຊຳນານ ແລະໄດ້ວາງຮາກໄວ້ແລ້ວຄື ພຣະເຢຊູ. ໂປໂລຍັງໄດ້ເຕືອນບອກວ່າ ຈົ່ງລະມັດຣະວັງວ່າ ໃຜຈະສ້າງກໍ່ຂື້ນມາຢ່າງໃດ. (3:11) ໃນການຍົກຕົວຢ່າງ ເຣື່ອງຕຶກນີ້ ຍັງມີຕໍ່ອອກໄປວ່າຈະຕໍ່ອອກໄປຢ່າງໃດ. ລາວຍັງໄດ້ກ່າວເຖິງວັດຖຸອຸປກອນທີ່ຈະມາກໍ່ອອກໄປ. ຄຳ, ເງິນ, ເພັດພອຍ, ໄມ້, ຫຍ້າແຫ້ງ, ຫລື ເຟືອງກໍດີ. ອັນໃດກໍແລ້ວແຕ່, ໃນວັນສຸດທ້າຍ ທຸກຢ່າງກໍຈະຖືກທົດລອງດ້ວຍໄຟ. (3:13)

ການອ້າງອີງເຣື່ອງການທົດລອງດ້ວຍໄຟຂອງພຣະເຈົ້ານີ້ ພວກເຮົາຈະເຫັນໃນພຣະທັມຄັມພີ ມາລາກີ 3:1-2 "ໃນທັນໃດນັ້ນ ພຣະຜູ້ເປັນເຈົ້າອົງທີ່ເຈົ້າຊອກສແວງຫາ" ກໍຈະ "ສະເດັດມາໃນພຣະວິຫານຂອງພຣະອົງ" ພຣະອົງຈະເປັນເຫມືອນໄຟ ທີ່ຫລອມໂລຫະ. ໃນວັນນັ້ນ ພຣະອົງຈະຊົງຕັດສິນດັ່ງ ຜູ້ຫລອມເງິນໃຫ້ບໍຣິສຸດ. ມາລາກີ 3:3

ແມ່ນການເອົາຈິງເອົາຈັງແທ້ງ ໃນການທີ່ຈະທຳງານໃນໄຮ່ນາຂອງພຣະເຈົ້າ ຫລືຈະເປັນຜູ້ກໍ່ຕຶກຂອງພຣະເຈົ້າ. ເວລາເຖິງວັນພິພາກສາ ເຮົາຕ້ອງເຊື່ອຫມັ້ນວ່າການງານຂອງເຮົາຈະຕັ້ງຫມັ້ນຄົງຫລືບໍ່. ຖ້າການງານຂອງເຮົາຫາກ ຕັ້ງຫມັ້ນຄົງຢູ່ເຮົາກໍຈະໄດ້ຮັບລາງວັນ (3:14) ແຕ່ຖ້າການງານຂອງເຮົາຫາກຖືກເຜົາໄຫມ້ ເຮົາກໍຈະຂາດລາງວັນ. (3:15)

ຂໍ້ສຳຄັນທີ່ສຸດ ໃນ 1ໂກຣິນໂທ 3:16-17. ໂປໂລຊີ້ແນວແນະໃຫ້ຄຣິສຕຽນຊາວເມືອງໂກຣິນໂທ --ວິຫານ-- ຄວາມຈິງກໍເປັນວິຫານຂອງພຣະເຈົ້າ ຄື ບ່ອນອາສັຍຂອງພຣະວິນຍານບໍຣິສຸດ. ເຈົ້າຈະທຳລາຍວິຫານຂອງພຣະເຈົ້າບໍ່ໄດ້ເດັດຂາດ. ຖ້າຜູ້ໃດທຳລາຍພຣະເຈົ້າກໍຈະທຳລາຍຜູ້ນັ້ນ. ພຣະວິຫານຂອງພຣະເຈົ້າເປັນທີ່ສັກສິດ. (3:17)

## ສະພາບທີ່ສຳແດງອອກໃນທຸກວັນນີ້:

ການແບ່ງແຍກໃນຄຣິສຕະຈັກຂອງພຣະເຈົ້າ, ການແຕກໝູ່, ການອິດສາ, ການຢ້ານລື່ນ, ການຂັດແຍ້ງ ແລະ ການຜູກພະຍາບາດ ເປັນບັນຫາຫຍຸ້ງຍາກຫລາຍທີ່ສຸດ. ໃນບົດຮຽນທີ ນຶ່ງທີ່ພວກເຮົາຮຽນຜ່ານມາ ໂປໂລມີຄວາມເປັນຫ່ວງຫລາຍ. (1:11) ບົດນີ້ຈະສລຸບດ້ວຍຂໍ້ອ້າງອີງ ໃຜທຳລາຍວິຫານພຣະເຈົ້າ ກໍແມ່ນທຳລາຍຄົນຂອງພຣະເຈົ້າ. ຍິ່ງໄປກວ່ານັ້ນ ໂປໂລແລະອາໂປໂລເປັນຜູ້ຮັບໃຊ້ພຣະເຈົ້າຮ່ວມກັນ, ດັ່ງຄຽວກັນກັບ ຜູ້ປູກ, ຜູ້ຫົດນ້ຳ, ແລະ ຜູ້ທີ່ຈະມາກໍຂຶ້ນ ກໍແມ່ນເຮັດດ້ວຍອຳນາດຂອງພຣະເຈົ້າ. ດັ່ງນັ້ນແຫລະ ໃຜຈະທຳລາຍວິຫານຂອງພຣະເຈົ້າ ແມ່ນເປັນອັນວ່າບໍ່ໄດ້ເດັດຂາດ.

ປັດຈຸບັນນີ້ ພວກເຮົາຄວນ ຈະດຳເນີນຊີວິດເໝືອນຄົນຢູ່ໃນກາງວັນ (ຣມ 13:13). ຄົນຂອງພຣະເຈົ້າຕ້ອງຈະເຣີນຂຶ້ນ ໃນວິຫານອັນບໍຣິສຸດຂອງພຣະເຈົ້າ.

## <u>ຄຳຖາມ:</u>

1. ແມ່ນຫຍັງເປັນເຄື່ອງໝາຍຂອງຄຣິສຕຽນທີ່ເກີດໃໝ່?

2. ທ່ານຮູ້ສຶກຕຽມພ້ອມຫລາຍປານໃດ ໃນການທີ່ຄຣິສຕຽນຈະຖືກຕັດສິນ? 2 ກທ 5:9-10

3. ຖ້າມີການອິດສາບັງບຽດກັນ ແລະ ມີການແບ່ງແຍກ ໃນຄຣິສຕະຈັກ ຈະເຮັດໃຫ້ມີການຊັກຊ້າໃນການເຕີບໃຫຍ່ບໍ່ ຊັກຊ້າແບບໃດ? ຫລືບໍ່ຊັກຊ້າແບບໃດ?

4. ອ່ານໃນພຣະຄັມພີຕອນນີ້ 2:14-3:16 ແມ່ນຫຍັງຄືຄຸນນະພາບຂອງຄຣິສຕຽນທີ່ເຕີບໃຫຍ່ໃນບົດນີ້

ອ.ຈ. ບຸນໂຮມ ພົມມະຈັນ

# ບົດຮຽນທີ 4
# ພາກປະຕິບັດຂອງຜູ້ນຳໃນຖານະເປັນຜູ້ຮັບໃຊ້

---

| | |
|---|---|
| ຂໍ້ພຣະຄັມພີສຳລັບບົດຮຽນ: | 1 ໂກຣິນໂທ 4:1-14 |
| ຂໍ້ພຣະຄັມພີສຳລັບເບື້ອງຫລັງ: | 1 ໂກຣິນໂທ 4:1-21 |
| ຈຸດສຳຄັນຂອງບົດຮຽນນີ້: | ວຽກງານຂອງຄຣິສຕະຈັກຈະເດີນໄດ້ສະດວກ ເມື່ອຜູ້ນຳແລະສະມາຊິກໃນຄຣິສຕະຈັກປະຕິບັດໜ້າທີ່ຂອງຕົນດ້ວຍຄວາມຖ່ອມຕົວແລະນັບຖືຊຶ່ງກັນແລະກັນ. |
| ຄຳຖາມເພື່ອການສຳຣວດ: | ຜູ້ນຳແລະສະມາຊິກໃນຄຣິສຕະຈັກມີຄວາມສຳພັນກັນຢ່າງໃດ? |
| ຈຸດປະສົງຂອງບົດຮຽນນີ້: | ຜູ້ນຳແລະສະມາຊິກໃນຄຣິສຕະຈັກມີຄວາມສຳພັນກັນ ຕາມຫລັກຄຳສອນຂອງພຣະຄັມພີ. |

## ບົດຮຽນ

### ຄຳນຳ

ຊາວໂກຣິນໂທມີຈິດໃຈຈອງຫອງຍົກໂຕຂົ່ມເພິ່ນ ແລະໂອ້ອວດຕົວເອງ. ພວກເຂົາໄດ້ເຂົ້າໃຈຜິດໜ້າທີ່ຂອງຜູ້ຮັບໃຊ້ຂອງພຣະຄຣິດແລະຜູ້ປ້ອງກັນຮັກສາຄວາມເລິກລັບຂອງພຣະເຈົ້າ. ອັຄສາວົກໂປໂລໄດ້ຕັກເຕືອນພວກເຂົາໃຫ້ເຊົາໂອ້ອວດຕົວເອງ ແລະບໍ່ໃຫ້ມີຈິດໃຈຈອງຫອງອີກຕໍ່ໄປ. ໃຫ້ພວກເຂົາຮຽນເອົາແບບຢ່າງຂອງລາວໃນຖານະທີ່ເປັນບິດາຂອງພວກເຂົາໃນຂ່າວປະເສີດຂອງອົງພຣະເຢຊູຄຣິດ.

ໃນຂະນະທີ່ຂ້າພະເຈົ້າຍັງໜຸ່ມນ້ອຍ ຂ້າພະເຈົ້າບໍ່ມີຄວາມອົດທົນໃນການຟັງເທສນາ. ຖ້າຫາກນັກເທດມີຄຳຕລົກນຳຫລາຍໆຂ້າພະເຈົ້າຈຶ່ງນັ່ງຢູ່ຄົນໄດ້. ແຕ່ດຽວນີ້ຂ້າພະເຈົ້າເຕີບໃຫຍ່ແລ້ວ ຂ້າພະເຈົ້າມັກຟັງຄຳເທສນາແລະບາງຄັ້ງນັກເທດບາງຄົນມີຄຳຕລົກຫລາຍໂພດ ແລະເຮັດໃຫ້ຄຳເທສນາຂອງພຣະເຈົ້ານ້ອຍລົງ ຂ້າພະເຈົ້າກໍເກີດຄວາມລຳຄານ. ເມື່ອຂ້າພະເຈົ້າເຕີບໃຫຍ່ແລະແກ່ໂຕຂຶ້ນ ການສັ່ງຊາບົດເທສນາຂອງຂ້າພະເຈົ້າກໍແຕກຕ່າງໄປແລະດີຂຶ້ນ. ສະນັ້ນ ເຫດດຽວກັນທີ່ເກີດຂຶ້ນກັບຊາວໂກຣິນໂທ ເມື່ອພວກເຂົາຍັງບໍ່ທັນເຕີບໃຫຍ່ໃນພຣະຄຣິດ ຈຶ່ງເຮັດໃຫ້ພວກເຂົາມີການຕັດສິນຖານະຂອງພວກອັຄສາວົກຜິດໄປ.

### ການຕັດສິນຜູ້ນຳຄຣິສຕຽນເປັນພາຣະຂອງພຣະຜູ້ເປັນເຈົ້າ (4:1-5)

ຖ້າຄຣິສຕຽນຊາວໂກຣິນໂທຄິດວ່າຄວາມສຳຄັນໃນການຕຶກຕອງເບິ່ງຜູ້ນຳຂອງພວກເຂົາ, ພວກເຂົາຄວນຈະຕຶກຕອງເບິ່ງຜູ້ນຳຂອງພວກເຂົາດັ່ງນີ້: ພວກເຂົາເປັນ "ຜູ້ຮັບໃຊ້ ຂອງພຣະຄຣິດ ທັງເປັນ ຜູ້ປ້ອງກັນຮັກສາ ຂໍ້ເລິກລັບຂອງພຣະເຈົ້າ" (4:1). ພຣະເຢຊູຄຣິດຊົງເປັນອົງພຣະຜູ້ເປັນເຈົ້າ, ໂປໂລ, ອາໂປໂລ, ແລະເປໂຕຊົງເປັນຜູ້ຮັບໃຊ້ຂອງພຣະຄຣິດ. ຄວາມຈິງແລະຂໍ້ເລິກລັບຂອງພຣະເຈົ້າໄດ້ຊົງເປີດເຜີຍແລ້ວໃນຂ່າວປະເສີດ. ຜູ້ນຳຄຣິສຕຽນເປັນຜູ້ເບິ່ງແຍງແລະເປັນຜູ້ປ້ອງກັນຮັກສາຄວາມເລິກລັບນັ້ນ.

ຜູ້ປ້ອງກັນຮັກສາຈະຕ້ອງເປັນ "ຄົນສັດຊື່" (4:2). ຄວາມສັດຊື່ເປັນຫລັກເຄົ້າອັນສຳຄັນຂອງຜູ້ປ້ອງກັນຮັກສາ ເຊັ່ນເຫັນໄດ້ໃນໂປໂລຫລືອາໂປໂລ. ຢ່າງໃດກໍຕາມ, ໂປໂລໄດ້ກ່າວວ່າຊາວໂກຣິນໂທຫລືມະນຸດຜູ້ໃດຈະຕັດສິນຫລືເບິ່ງລາວແບບໃດກໍຕາມ ລາວເຫັນວ່າເປັນເຣື່ອງເລັກນ້ອຍ. ເຖິງແມ່ນວ່າລາວຈະຢູ່ໃນສະພາບໃດກໍຕາມ ແມ່ນລາວຈະຕ້ອງໃຫ້ການຕໍ່ອົງພຣະຜູ້ເປັນເຈົ້າຢູ່ແລ້ວ. ບໍ່ໝາຍຄວາມວ່າລາວບໍ່ຟັງຄວາມຄິດເຫັນຂອງຜູ້ໃດ ແຕ່ວ່າຄວາມຄິດເຫັນຫລືການຕັດ

ສິນຂອງມະນຸດເປັນເຣື່ອງເລັກນ້ອຍໃນສະພາບທີ່ລາວຢືນຢັດຢູ່ (4:3).

ແນ່ນອນ ລາວກ່າວວ່າ "ເຮົາບໍ່ຮູ້ວ່າເຮົາມີຜິດສິ່ງໃດ" (4:4). ເຖິງວ່າລາວບໍ່ຮູ້ວ່າລາວມີຜິດສິ່ງໃດ ແຕ່ລາວຮູ້ແນ່ນອນວ່າລາວຈະຕ້ອງໃຫ້ການຕໍ່ອົງພຣະຜູ້ເປັນເຈົ້າ (4:4). ສະນັ້ນແຫລະ ເມື່ອພວກເຮົາຮູ້ວ່າ ພວກເຮົາຈະຕ້ອງຖືກພິພາກສາ, ໂປໂລຈຶ່ງເຕືອນພວກເຮົາ ແລະຊາວໂກຣິນໂທຢ່າໄດ້ມີນິສັຍຕັດສິນຄົນອື່ນ ໂດຍບໍ່ຮູ້ເຣື່ອງລາວຢ່າງຄັກແນ່ເຖິງຄວາມສາມາດແລະສະຖານະການຂອງຜູ້ນຳຂອງພວກເຂົາ. ແທນທີ່ຈະກ່າວວ່າ "ຈົນກວ່າອົງພຣະຜູ້ເປັນເຈົ້າຈະສະເດັດມາພຣະອົງຈະຊົງເປີດເຜີຍຄວາມລັບທີ່ເຊື່ອງໄວ້ໃນຄວາມມືດໃຫ້ແຈ່ມແຈ້ງ ແລະຈະຊົງເຜີຍຄວາມຄາດໝາຍໃນໃຈມະນຸດດ້ວຍ" (4:5).

ໂປໂລເຊື່ອວ່າພຣະຜູ້ເປັນເຈົ້າເປັນຜູ້ຊົງລິເລີ່ມພາຣະກິດຂອງພຣະອົງໂດຍການຊົງໄຖ່ແລະການພິພາກສາດ້ວຍການສິ້ນພຣະຊົນຂອງພຣະຄຣິດຈະຄອບຄອງທຸກໆຄຳເວົ້າແລະການກະທຳຂອງລາວ. ຄຳຕິຕຽນຫລືຄຳຍົກຍ້ອງຂອງຊາວໂກຣິນໂທຈະບໍ່ກະທົບກະເທືອນລາວເລີຍ. ພຣະຄຣິດຜູ້ຊົງຄືນພຣະຊົນໄດ້ມອບໝາຍພາຣະກິດຂອງພຣະອົງໃຫ້ລາວ. ລາວຈະເປັນຜູ້ໃຫ້ການໃນທຸກສິ່ງທີ່ລາວໄດ້ກະທຳແກ່ພຣະຜູ້ເປັນເຈົ້າເທົ່ານັ້ນ. ໃນວັນພິພາກສາທຸກຄົນຈະໄດ້ຮັບຄຳຊົມເຊີຍ ຫລື ຄຳຕິຕຽນຈາກພຣະເຈົ້າ (4:5).

## <u>ຜູ້ນຳຄຣິສຕຽນ: ເປັນຄົນໂງ່ເພື່ອເຫັນແກ່ພຣະຄຣິດ, ເປັນຜູ້ເສັຽສະລະເພື່ອຄົນອື່ນເຫມືອນດັ່ງບິດາມານດາ</u> (4:6-14)

ໂປໂລກ່າວເຖິງຄວາມແຕກແຍກໃນຖ້າມກາງຊາວໂກຣິນໂທ ແລະໜ້າທີ່ພາຣະກິດ ແລະຕຳແໜ່ງຂອງອັຄສາວົກ. ລາວໄດ້ນຳເຣື່ອງອາໂປໂລ ແລະລາວມາກ່າວຕໍ່ພວກເຂົາກໍເພື່ອຜົນປໂຍດຂອງພວກເຂົາ. ເພື່ອພວກເຂົາຈະບໍ່ຍົກຜູ້ນຳຄົນນຶ່ງຂຶ້ນແລະຂົ່ມຜູ້ນຶ່ງ (4:6).

ຄວາມຈິງແລ້ວ ພວກເຂົາໄດ້ຍົກນັກເທດຜູ້ທີ່ພວກເຂົາມັກຂຶ້ນ ຈຶ່ງເປັນການສະແດງອອກໃຫ້ເຫັນວ່າພວກເຂົາຍັງບໍ່ທັນໃຫຍ່ເທື່ອ. ພວກເຂົາຍົກຕົວເອງຂຶ້ນແລະຂົ່ມຜູ້ອື່ນ ແລະພວກເຂົາມີຈິດໃຈໂອ້ອວດ. ໂປໂລໄດ້ຖາມພວກເຂົາ "ຜູ້ໃດໄດ້ເຮັດໃຫ້ພວກເຈົ້າຕ່າງກັບຄົນອື່ນ?" ເຫດຜົນອັນໃດທີ່ຜູ້ໃດຜູ້ນຶ່ງ ຫລືຄົນກຸ່ມໃດກຸ່ມນຶ່ງໂອ້ອວດວ່າຕົນດີກວ່າຜູ້ອື່ນ? ທຸກສິ່ງທີ່ພວກເຂົາໄດ້ຮັບໃນພຣະຄຣິດນັ້ນແມ່ນໄດ້ມາຈາກຜູ້ໃດຜູ້ນຶ່ງ. ຂ່າວປະເສີດໄດ້ປະກາດໄປ ພວກເຂົາໄດ້ຮັບຄວາມລອດພົ້ນໂດຍພຣະຄຸນຈາກພຣະຜູ້ເປັນເຈົ້າ ແມ່ນມາຈາກການປະກາດແລະຄຳສັ່ງສອນຂອງພວກອັຄສາວົກ. ເຫດສັນໃດພວກເຂົາຈຶ່ງໂອ້ອວດຈອງຫອງ ຈົນລືມໄປເສັຽວ່າພວກເຂົາເປັນຜູ້ໄດ້ຮັບຜົນປໂຍດນັ້ນ ຍ້ອນຄວາມສັດຊື່ໃນການປະຄອງຜູ້ໃດຜູ້ນຶ່ງໃນຖ້າມກາງພວກອັຄສາວົກ(4:7).

ຊາວໂກຣິນໂທໄດ້ຮັບເຣື່ອງຄວາມຈິງຂອງພຣະຜູ້ເປັນເຈົ້າໂດຍຜ່ານທາງພຣະເຢຊູຄຣິດຢ່າງລົ້ນເຫລືອ. ພວກເຂົາໄດ້ຮັບຄວາມຮັ່ງມີບໍຣິບູນຝ່າຍຈິດວິນຍານ ຄືເປັນຜູ້ໄດ້ຮັບມໍຣະດົກຂອງຣາຊອານາຈັກຂອງພຣະຜູ້ເປັນເຈົ້າ (4:8). ພວກເຂົາໄດ້ຂຶ້ນສເວີຍຣາດ ເພາະວ່າພວກເຂົາໄດ້ເຂົ້າພາກສ່ວນເປັນຜູ້ໄດ້ຮັບມໍຣະດົກກັບພຣະຄຣິດ. ໂປໂລໃຊ້ຄຳເວົ້າສຽດສີໃສ່ພວກເຂົາ ກໍເພື່ອຢາກໃຫ້ພວກເຂົາຮູ້ສຶກຕົວໃນຄຳເວົ້າທີ່ໂອ້ອວດຈອງຫອງຂອງພວກເຂົາ. ພວກເຂົາເຊື່ອວ່າພວກເຂົາໄດ້ຮັບຄວາມລອດພົ້ນແລະພຣະພອນດ້ວຍຕົນເອງ ໂດຍປາສຈາກການປະກາດຂ່າວປະເສີດຂອງຜູ້ຮັບໃຊ້ຂອງອົງພຣະຜູ້ເປັນເຈົ້າຄົນໃດຄົນນຶ່ງ. ໂປໂລກ່າວວ່າ "ດຽວນີ້ເຈົ້າທັງຫລາຍກໍອີ່ມແລ້ວຫນໍ, ຮັ່ງມີບໍຣິບູນແລ້ວຫນໍ, ໄດ້ຂຶ້ນສເວີຍຣາດໂດຍຮ່ວມກັບພວກເຮົາແລ້ວຫນໍ ແມ່ນຢູ່, ເຮົາກໍປາຖນາຢາກໃຫ້ເຈົ້າທັງຫລາຍໄດ້ຂຶ້ນສເວີຍຣາດ ເພື່ອພວກເຮົາຈະໄດ້ຂຶ້ນສເວີຍຣາດດ້ວຍກັນກັບພວກເຈົ້າ" (4:8).

ຊາວໂກຣິນໂທໄດ້ເບິ່ງຂ້າມພວກອັຄສາວົກແລະພວກເຂົາບໍ່ໃຫ້ກຽດພວກອັຄສາວົກ. ພວກອັຄສາວົກເປັນ "ເຫມືອນຄົນຖືກໂທດເຖິງຕາຍ ແລະ ພວກເຂົາເປັນເຫມືອນຕົວລະຄອນໃຫ້ຈັກກະວານຄືເທວະດາແລະມະນຸດຊົມ" (4:9). ໂປໂລກ່າວຕໍ່ໄປວ່າ "ພວກເຮົາເປັນເຫມືອນຄົນໂງ່ເພາະເຫັນແກ່ພຣະຄຣິດ" ກໍເພື່ອໃຫ້ຊາວໂກຣິນໂທມີສະຕິປັນຍາໃນພຣະຄຣິດ". ເມື່ອພວກອັຄສາວົກ "ອ່ອນກຳລັງ" ກໍເພື່ອໃຫ້ຊາວໂກຣິນໂທ "ມີກຳລັງ". ເມື່ອຊາວໂກຣິນໂທ" ມີຍົດສັກ" ແຕ່ພວກອັຄສາວົກເປັນຄົນ "ອັປຍົດ" (4:10).

ແຕ່ຄວາມຈິງແລ້ວ, ພຣະຄຣິດເປັນຜູ້ຊົງເລືອກໂປໂລໃຫ້ເປັນອັຄສາວົກ. ພຣະອົງຊົງກ່າວຕໍ່ອານາເນັຽວ່າພຣະອົງໄດ້ເລືອກໂປໂລໃຫ້ເປັນພາຊະນະຂອງພຣະອົງ ເພື່ອນຳພຣະນາມຂອງພຣະອົງໄປເຖິງຄົນຕ່າງຊາດ, ກະສັດແລະຊົນຊາດຢິວ. ລາວຈະໄດ້ຮັບຄວາມທຸກຍາກລຳບາກກໍເພາະເຫັນແກ່ພຣະນາມຂອງພຣະອົງ (ກິຈການ 9:15-16, 14:21-22). ລາວເຄີຍຂຽນໄປຫາຊາວໂກໂລຊາຍວ່າໃນຖານະເປັນອັຄສາວົກ ລາວຈະຕ້ອງທົນທຸກລຳບາກທີ່ພຣະຄຣິດໄດ້ຮັບ ກໍເພາະເຫັນແກ່ພຣະກາຍຂອງພຣະອົງຄືຄຣິສຕະຈັກ (ໂກໂລຊາຍ 1:24). ຄຣິສຕຽນຈະຕ້ອງທົນທຸກລຳບາກໃນໂລກອັນຊົ່ວຮ້າຍ. ຕາມແຜນການຂອງພຣະເຈົ້າ ອັຄສາວົກຈະຕ້ອງທົນທຸກລຳບາກຫລາຍກວ່າຄຣິສຕະຈັກໄດ້ຮັບ.

ອັຄສາວົກຈະບໍ່ໄດ້ຮັບການຮັບຕ້ອນຢ່າງດີ ແລະພວກເຂົາບໍ່ມີບ່ອນພັກພາອາສັຍເປັນຫລັກແຫລ່ງ ໃນຊີວິດຂອງເຂົາ. ພວກເຂົາໄດ້ຮັບຄວາມອຶດຫິວ, ຂາດເຄື່ອງນຸ່ງຫົ່ມ, ແລະຖືກຄົນດູຫມິ່ນປະມາດວ່າເປັນຄົນຕ່ຳຕ້ອຍ (4:11). ແທນທີ່ພວກເຂົາຈະໄດ້ຮັບການລ້ຽງດູຢ່າງດີ, ແຕ່ພວກເຂົາຕ້ອງອົດສາເຮັດການຫນັກຫນ່ວງລ້ຽງຊີບດ້ວຍເຫື່ອແຮງຂອງເຂົາເອງ (4:12). ເຫມືອນດັ່ງພຣະຄຣິດ, ເມື່ອຖືກປ້ອຍດ່າພວກເຂົາກໍໃຫ້ພອນ, ເມື່ອຖືກຂົ່ມເຫງພວກເຂົາອົດທົນເອົາ. ເມື່ອຖືກນິນທາປມາດພວກເຂົາຊອກຫາທາງປອງດອງ. ພວກເຂົາຍອມເປັນຄົນໂງ່ ເພາະເຫັນແກ່ພຣະຄຣິດ ພວກເຂົາຈຶ່ງເປັນເຫມືອນ " ຂີ້ເຫຍື່ອຂອງໂລກ, ເປັນເຫມືອນຂອງເສດຈາກສິ່ງສາຣະພັດທີ່ໂລກເລືອກຖິ້ມ". ເຫດການຢ່າງນີ້ເປັນໄປຕລອດຊົ່ວຊີວິດຂອງການຮັບໃຊ້ຂອງພວກອັຄສາວົກ (4:9-13).

ທຸກຢ່າງທີ່ໂປໂລກ່າວໄປນັ້ນ ລາວບໍ່ໄດ້ມີເຈຕນາຈະເຮັດໃຫ້ພວກເຂົາລະອາຍ ຫລືທັບຖົມພວກເຂົາ. ແຕ່ລາວໄດ້ສອນພວກເຂົາເຫມືອນດັ່ງລູກຂອງລາວເອງ ເພື່ອໃຫ້ພວກເຂົາມີການປ່ຽນແປງ. ຈິງແທ້ ອາດຈະມີຫລາຍຄົນມາກໍ່ຂຶ້ນຢູ່ເທິງຮາກຖານທີ່ໂປໂລໄດ້ວາງໄວ້ແລ້ວ ຄົນອື່ນເປັນຜູ້ສອນ ແຕ່ວ່າໂປໂລເປັນເຫມືອນບິດາຂອງຊາວໂກຣິນໂທໃນຄວາມເຊື່ອ (4:15). ລາວໄດ້ເປັນຜູ້ວາງຮາກ ຫລືຜູ້ລິເລີ່ມ (4:14-15). ໃນຖານະເປັນບິດາຂອງພວກເຂົາ ລາວຈຶ່ງມີສິດທີ່ສັ່ງສອນລູກຂອງລາວ.

<u>ຄຳຖາມ</u>

1. ແມ່ນຫຍັງຄືສິ່ງວັດແທກຄວາມສຳເຣັດໃນໂລກນີ້? ໃຫ້ສົມທຽບຄວາມສຳເຣັດຕາມຄວາມເຫັນຂອງຊາວໂລກກັບການບັນລະຍາຍຂອງໂປໂລໃນໂກຣິນໂທ 4:9-13. ພວກເຮົາຈະໃຊ້ຊີວິດຂອງພວກເຮົາໃຫ້ມີມາດຕະຖານສູງໃນທາງສິນທັມ ແລະໃນຂະນະດຽວກັນໃຫ້ມີຄວາມສຳເຣັດອີກດ້ວຍໄດ້ຢ່າງໃດ?

2. ໂປໂລໄດ້ຍົກຖານະຂອງລາວເປັນບິດາຂອງຊາວໂກຣິນໂທ (4:15). ລາວມີຄຸນສົມບັດອັນໃດໃນຖານະທີ່ເປັນບິດາຂອງພວກເຂົາຕາມການບັນລະຍາຍຂອງລາວໃນ 1 ໂກຣິນໂທ ບົດທີ 4?

3. ໂປໂລໄດ້ກ່າວຕໍ່ຊາວໂກຣິນໂທວ່າ " ການທີ່ເຈົ້າທັງຫລາຍຫລືມະນຸດຜູ້ໃດຈະຕັດສິນຕົວເຮົານັ້ນ ເຮົາເຫັນວ່າເປັນເຣື່ອງເລັກນ້ອຍ" (4:3). ການວາງຕົວຫລືອຸປະນິສັຍຂອງພວກເຮົາມີຄວາມສຳຄັນຢ່າງໃດຕໍ່ສາຍຕາຂອງສັງຄົມ?

4. ແນ່ນອນ  ໂປໂລຢາກຮູ້ແທ້ວ່າຊາວໂກຣິນໂທມີຄວາມຄິດເຫັນຢ່າງໃດກ່ຽວກັບລາວ.    ຖ້າບໍ່ດັ່ງນັ້ນ ລາວຄົງຈະບໍ່ຂຽນ 1 ໂກຣິນໂທ ບົດທີ 1-4  ຊຶ່ງເປັນຈົດໝາຍມາຫາບທາມພວກເຂົາເພື່ອສ້າງຄວາມເຂົ້າໃຈກັນໃຫ້ດີຂຶ້ນ.  ສໍາລັບພວກເຮົາແລ້ວ ພວກເຮົາຈະເຮັດຢ່າງໃດໃນສອງກໍຣະນີນີ້:  (1) ພວກເຮົາຈະຕ້ອງຟັງຄວາມຄິດເຫັນຂອງມະນຸດ; (2) ສິ່ງສໍາຄັນທີ່ສຸດ ພຣະຜູ້ເປັນເຈົ້າຈະມີຄວາມເຫັນຢ່າງໃດໃນຕົວເຮົາ?

ອ.ຈ. ບຸນເຮັ່ງ ພົງປຣະພັນ

# ບົດຮຽນທີ 5
# ໃຊ້ຊີວິດຄຣິສຕຽນໃນໂລກທີ່ຂາດສິນທັມ

---

<u>ຂໍ້ພຣະຄັມພີສໍາລັບບົດຮຽນ:</u> 1 ໂກຣິນໂທ 5:1-11; 6:9-20

<u>ຂໍ້ພຣະຄັມພີສໍາລັບເບື້ອງຫລັງ:</u> 1 ໂກຣິນໂທ 5:1-6:20

<u>ຈຸດສໍາຄັນຂອງບົດຮຽນນີ້:</u> ຄຣິສຕຽນຈະຕ້ອງໃຊ້ຊີວິດຝຶກຝົນຕົນເອງໃຫ້ຢູ່ໃນຄວາມຊອບທັມ, ໃຫ້ລະນຶກສເມີວ່າຄວາມລອດພົ້ນມີຜົນສະທ້ອນຊີວິດປະຈໍາວັນຂອງພວກເຮົາ, ຮ່ວມທັງວ່າ ເຮົາຈະເຮັດຢ່າງໃດກັບຮ່າງກາຍຂອງພວກເຮົາ.

<u>ຄໍາຖາມເພື່ອການສໍາຫລວດ:</u> ຂ້າພະເຈົ້າເປັນຄຣິສຕຽນ, ແຕ່ມີຫຍັງຜິດປົກກະຕິກັບຂ້າພະເຈົ້າ?

<u>ຈຸດປະສົງຂອງບົດຮຽນນີ້:</u> ປະຕິບັດຕາມຫລັກຄໍາສອນເຣື່ອງຄວາມຊອບທັມໃນຄຣິສຕະຈັກແລະໃນຊີວິດປະຈໍາວັນຕາມຫລັກຄໍາສອນຈາກອັຄສາວົກໂປໂລ.

## <u>ບົດຮຽນ</u>

<u>ຄໍານໍາ</u>

ມີຈິດໃຈ, ຮ່າງກາຍ, ແລະຈິດວິນຍານທີ່ຂາວສະອາດບໍຣິສຸດຈະຊ່ອຍໃຫ້ຄຣິສຕຽນເອົາຊະນະສັງຄົມອັນຜິດສິນທັມໄດ້ຢ່າງແນ່ນອນ.

<u>ຂ່າວເລົ່າລືກັນ</u> (5:1-5)

ເມື່ອມີຂ່າວເລົ່າລືກັນ ຊຶ່ງເປັນຂ່າວທີ່ນໍາຄວາມອັບອາຍມາສູ່ຄຣິສຕະຈັກເມືອງໂກຣິນໂທ. ຂ່າວຂອງສະມາຊິກໃນຄຣິສຕະຈັກໄດ້ກະທໍາໃນສິ່ງທີ່ນໍາຄວາມເສື່ອມເສັຽມາສູ່ພຣະກາຍຂອງພຣະຄຣິດ. ສະມາຊິກຄົນນັ້ນຈະຕ້ອງຖືກນໍາມາພິຈາຣະນາ ນັ້ນຄືເຣື່ອງລາວທີ່ໂປໂລຈະໄດ້ກ່າວຕໍ່ໄປ.

ການກະທໍາຂອງສະມາຊິກຄົນນັ້ນເປັນການຜິດ ເຖິງແມ່ນວ່າໃນພວກຄົນຕ່າງຊາດກໍບໍ່ເຄີຍມີ. ສະມາຊິກຄົນນັ້ນ "ໄດ້ເອົາແມ່ນ້າຂອງຕົນມາເປັນເມັຽ" (5:1). ທ່ານເຄີຍໄດ້ຍິນເຣື່ອງລາວຢ່າງນີ້ເກີດຂຶ້ນມາກ່ອນບໍ່? ເປັນເຣື່ອງທີ່ບໍ່ຫນ້າເຊື່ອເລີຍ ຍິ່ງໄປກວ່ານັ້ນລາວເປັນຄຣິສຕຽນອີກດ້ວຍ. ຄວາມອະທັມບໍ່ຄວນເກີດຂຶ້ນໃນທ່າມກາງໄພ່ພົນຂອງພຣະເຈົ້າເລີຍ ແລະເຣື່ອງການຜິດຊາຍຍິງເກີດຂຶ້ນມີຢູ່ມາຕັ້ງແຕ່ສມັຍຂອງໂປໂລຈົນເຖິງທຸກວັນນີ້.

ໂປໂລໄດ້ນໍາເຣື່ອງລາວດັ່ງກ່າວຂຶ້ນເຖິງຄຣິສຕະຈັກຂອງຊາວເມືອງໂກຣິນໂທ. ໃນຂະນະທີ່ມີເຫດການເກີດຂຶ້ນ ຄຣິສຕຽນໃນຄຣິສຕະຈັກນັ້ນ "ແທນທີ່ຈະເປັນທຸກຮ້ອນໃຈ" ພວກເຂົາຊໍ້າຍັງ "ອວດຕົວຂຶ້ນ" ແລະຖືກັນວ່າເປັນເຣື່ອງເລັກນ້ອຍບໍ່ສໍາຄັນ (5:2).

ພຣະຄຣິດໄດ້ຮັບຄວາມໂສກເສົ້າ ເມື່ອລູກຂອງພຣະອົງເຫັນພ້ອມໃນສິ່ງທີ່ຜິດໂດຍມິດງຽບຢູ່. ນີ້ແມ່ນກິຈການຂອງຊາຕານຢູ່ໃນຄຣິສຕະຈັກ. ມີຫລາຍຄຣິສຕະຈັກໃນສມັຍປະຈຸບັນນີ້ບໍ່ໄດ້ວາງກົດວິນັຍຢ່າງເດັດຂາດກ່ຽວກັບເຣື່ອງຜິດສິນທັມ. ສະມາຊິກພຽງແຕ່ເວົ້າເຜີນໆໄປແລ້ວກໍແລ້ວໄປ ຫລືປ່ຽນໄປເປັນສະມາຊິກຢູ່ຄຣິສຕະຈັກໃຫມ່. ຄຣິສຕະຈັກຂອງເມືອງໂກຣິນໂທບໍ່ໄດ້ນໍາເຣື່ອງຜິດສິນທັມຂອງສະມາຊິກຄົນນັ້ນ ຂຶ້ນມາຕັດສິນລົງໂທດຕາມຄວາມຜິດຂອງລາວ ແລະທາງຄຣິສຕະຈັກບໍ່ໄດ້ກະທໍາສິ່ງໃດເລີຍ. ພວກເຮົາກໍເຊັ່ນດຽວກັນບໍ່ໄດ້ວາງຂໍ້ລະບຽບເຄັ່ງຄັດກັບເຣື່ອງຜິດສິນທັມຕໍ່ໄພ່

ພິນຂອງພຣະເຈົ້າ.

ຂໍ້ສຳຄັນໃນບົດທີ 5:3-5 ໂປໂລປະກາດໄປວ່າລາວໄດ້ມອບຊາຍຜູ້ເຮັດຜິດສິນທຳໄວ້ໃຫ້ຊາຕານ. ລາວໄດ້ກ່າວຕໍ່ພວກເຂົາວ່າ ເຖິງວ່າຕົວຂອງລາວບໍ່ໄດ້ຢູ່ກັບພວກເຂົາກໍຈິງ, ແຕ່ວ່າໃຈຂອງລາວໄດ້ຢູ່ກັບພວກເຂົາ ພ້ອມທັງຣິດອຳນາດຂອງພຣະເຢຊູກໍຮ່ວມຢູ່ດ້ວຍ (5:3). ລາວໄດ້ຮັບອຳນາດຈາກພຣະວິນຍານບໍຣິສຸດຈຶ່ງໄດ້ຕັດສິນລົງໂທດຊາຍຄົນນີ້. ຊາຍຄົນນີ້ບໍ່ໄດ້ເດີນຕາມນ້ຳພຣະທັຍຂອງອົງພຣະຜູ້ເປັນເຈົ້າຕໍ່ໄປລາວຈຶ່ງຖືກມອບໄວ້ໃຫ້ຊາຕານ.

ໂປໂລແນະນຳໃຫ້ຄຣິສຕະຈັກເມືອງໂກຣິນໃຫ້ນຳຜູ້ຕ້ອງຫາມາຕັດສິນລົງໂທດ (5:4). ກ່ອນຈະມີການຕັດສິນ ທາງຄຣິສຕະຈັກຈະຕ້ອງມີເງື່ອນໄຂຢູ່ສາມຢ່າງ - (1) ໃຈຂອງໂປໂລຢູ່ກັບທີ່ປະຊຸມ; (2) ຣິດອຳນາດພຣະເຢຊູຈະຕ້ອງສະຖິດຢູ່ໃນທີ່ປະຊຸມ; (3) ທາງຄຣິສຕະຈັກຈະຕ້ອງພ້ອມພຽງຮຽງໜ້າກັນຕັດສິນ ດ້ວຍອຳນາດຂອງອົງພຣະເຢຊູຄຣິດເຈົ້າ.

ຄຳແນະນຳອັນສຸດທ້າຍຄືທາງຄຣິສຕະຈັກຈົ່ງມອບຜູ້ນັ້ນໄວ້ໃຫ້ຊາຕານ (5:5). ທາງຄຣິສຕະຈັກຈະຕ້ອງເອົາຈິງເອົາຈັງໃນເຣື່ອງທີ່ເກີດຂຶ້ນ ແລະເຫັນພ້ອມແລະປະຕິບັດຕາມຄຳແນະນຳຂອງໂປໂລ. ຄຳວ່າ " ຈົ່ງມອບຜູ້ນັ້ນໄວ້ໃຫ້ຊາຕານ " ມີຄວາມໝາຍຢ່າງໃດ? ກໍຣະນີທີນຶ່ງ ອາດຈະມີຄວາມໝາຍວ່າ ຄຣິສຕະຈັກຈະຕ້ອງຕັດຜູ້ທີ່ເຮັດຜິດການຢ່າງນັ້ນອອກເສັຽຈາກພວກເຂົາ (5:2). ກໍຣະນີທີສອງ ຜູ້ກະທຳຜິດຈະຕ້ອງຖືກລົງໂທດເໝືອນກັບເຫດການທີ່ເກີດຂຶ້ນໃນກິຈການ 5:1-11; 13:9-11. ຂໍ້ຄວາມດັ່ງກ່າວຈະພົບໄດ້ໃນ 1 ຕີໂມທຽວ 1:20. ຂໍ້ຄວາມເລົ່ານີ້ຈະມີຄວາມໝາຍຢ່າງໃດກໍຕາມ ແຕ່ວ່າ ໂປໂລມີເປົ້າໝາຍ ເພື່ອໃຫ້ຈິດວິນຍານຂອງຜູ້ທີ່ກະທຳຜິດນັ້ນໄດ້ພົ້ນໃນວັນຂອງອົງພຣະຜູ້ເປັນເຈົ້າ (1 ໂກຣິນໂທ 5:5). ໃນ 2 ໂກຣິນໂທ 7:9-12 ໄດ້ປາກົດໃຫ້ເຫັນວ່າ ອຳນາດຄຳສັ່ງຂອງໂປໂລແລະຈາກການປະຕິບັດຂອງຄຣິສຕະຈັກມີຜົນດີສະທ້ອນໃຫ້ເຫັນ.

<u>ພາກປະຕິບັດຂອງຊີວິດຄຣິສຕຽນ</u> (5:6-11)

ຈາກເຣື່ອງຂອງຜູ້ເຮັດຜິດຊາຍຍິງ ໂປໂລໄດ້ກັ້ຽວມາເຣື່ອງການອວດອ້າງຂອງຊາວໂກຣິນໂທ. ການອວດອ້າງບໍ່ເປັນການດີສຳລັບຄຣິສຕຽນແລະຄຣິສຕະຈັກ. ມັນເປັນເໝືອນເຊື້ອແປ່ງແຕ່ໜ້ອຍດຽວ (5:6), ຄືກັບວ່າບໍ່ມີຫຍັງ, ແຕ່ວ່າມັນສາມາດເປັນຜົນສະທ້ອນມາສູ່ທຸກງແງ່ຊີວິດຂອງຄຣິສຕະຈັກ.

ເຣື່ອງຜິດຊາຍຍິງໄດ້ເກີດຂຶ້ນໃນຄຣິສຕະຈັກ ແຕ່ວ່າຊາວໂກຣິນໂທຍັງອວດຕົວຢູ່. ເບິ່ງເໝືອນວ່າຊາວໂກຣິນໂທໄດ້ໂອ້ອວດຕົວພວກເຂົາເອງວ່າ ເຣື່ອງຜິດຊາຍຍິງບໍ່ມີຜົນສະທ້ອນຕໍ່ຊີວິດຝ່າຍຈິດວິນຍານຂອງພວກເຂົາ.

ໂປໂລໄດ້ໜູນໃຈພວກເຂົາໃຫ້ຊຳຣະເຊື້ອແປ້ງເກົ່າອອກເສັຽ (5:7). ໃນແນວຄິດຂອງລາວ ລາວໄດ້ເຫັນເມື່ອຊາວຢິວສເລີມສລອງວັນປັສຄາ ຫລືວ່າວັນເຂົ້າຈີ່ບໍ່ມີເຊື້ອແປ້ງ ພວກເຂົາຈະປັດກວດເຮືອນຊານ ແລະນຳເອົາເຂົ້າຈີ່ທີ່ມີເຊື້ອແປ້ງແລະເຂົ້າຈີ່ເກົ່າໄປຖິ້ມຈົນໝົດ ກ່ອນຈະເຖິງວັນສລອງປັສຄາ (ອົບພະຍົບ 12:15). ໂປໂລໄດ້ໃຫ້ພອນພວກເຂົາເພື່ອພວກເຂົາຈະ "ເປັນເໝືອນບໍ່ມີເຊື້ອແປ້ງ" ໃຫ້ເປັນທີ່ບໍຣິສຸດຕໍ່ພຣະພັກຂອງອົງພຣະຜູ້ເປັນເຈົ້າ. ລາວໃຫ້ພວກເຂົາລະນຶກສເມີວ່າ ພຣະຄຣິດຊົງເປັນພຣະເມສາຂອງປັສຄາ. ພຣະຄຣິດໄດ້ສິ້ນພຣະຊົນໃນການໄຖ່ບາບຂອງພວກເຂົາ; ສະນັ້ນ ພວກເຂົາຈະຕ້ອງໃຊ້ຊີວິດທີ່ບໍຣິສຸດໃນຖານະທີ່ເປັນຄຣິສຕຽນ. ການຖືກທົດລອງໃຫ້ເຮັດບາບໄປໃນທາງຜິດສິນທຳນັ້ນໄດ້ຢູ່ອ້ອມຂ້າງອ້ອມແອວຂອງພວກເຂົາ ແຕ່ພວກເຂົາຈະໄດ້ຮັບຊັຍຊະນະ.

ພວກເຮົາຜູ້ທີ່ຢູ່ໃນສັຕະວັດທີຊາວເອັດຈົ່ງຈຳໄວ້ວ່າ ພວກເຮົາກໍຢູ່ໃນຖ້າມກາງໂລກທີ່ມີຄວາມບາບ, ແຕ່ວ່າມີພຣະອົງ

ນີ້ງ, ພຣະເຢຊູຄຣິດ, ພຣະອົງສາມາດຮັກສາພວກເຮົາໄວ້ ເພື່ອບໍ່ໃຫ້ພວກເຮົາເຂົ້າໄປໃນການທົດລອງຈາກການຜິດສິນທັມນາງປະການ. ພວກເຮົາຈະຕ້ອງຮັກສາຕົວຂອງພວກເຮົາໃຫ້ບໍຣິສຸດຈາກການຜິດສິນທັມທຸກຢ່າງ. ນອກເໜືອໄປຈາກນັ້ນ ພຣະຄຣິດຊຶ່ງເປັນພຣະເມສາຂອງອົງພຣະຜູ້ເປັນເຈົ້າ ໄດ້ສິ້ນພຣະຊົນຂອງພຣະອົງເພື່ອເປັນການໄຖ່ບາບແລະສະສາງລ້າງຄວາມຜິດບາບຂອງພວກເຮົາຈົນໝົດສິ້ນຈາກເຊື້ອແປ້ງອັນເກົ່າ, ຄືບາບໃນຊີວິດເກົ່ານັ້ນເອງ.

ໂປໂລໄດ້ຮຽກຮ້ອງໃຫ້ຊາວໂກຣິນໂທ "ຈົ່ງຖືປັສຄານັ້ນ" (5:8). ໝາຍຄວາມວ່າເປັນການສັຣເສີນເຣື່ອງຄວາມພົ້ນແລະຄວາມຫວັງໃນຊີວິດອັນຕລອດໄປເປັນນິດ. ຄຣິສຕຽນຈະບໍ່ຢູ່ໃນເຊື້ອແປ້ງເກົ່າ (ຄວາມບາບ). ພວກເຮົາໄດ້ຖືກນຳໄປສູ່ຊີວິດແຫ່ງ "ຄວາມສັດຊື່" ແລະ "ຄວາມຈິງ" (5:8). "ຄວາມສັດຊື່" ໝາຍເຖິງຄວາມບໍຣິສຸດໃຈ ແລະ "ຄວາມຈິງ" ໝາຍເຖິງບໍ່ມີການຫລອກລວງ, ການແກ້ງທຳ, ຫລືໜ້າຊື່ໃຈຄົດ. ຊີວິດໃໝ່ໃນພຣະຄຣິດຈະເປັນຊີວິດຄຣິສຕຽນທີ່ບໍ່ເຮັດໃຫ້ຄຣິສຕະຈັກ, ພຣະຄຣິດ, ຫລືຣາຊອານາຈັກຂອງພຣະອົງເສື່ອມເສັຽ.

ໃນບົດທີ 5:9 ໂປໂລໄດ້ທວນຄວາມຈຳຂອງຊາວໂກຣິນໂທວ່າ ລາວໄດ້ຂຽນຈົດໝາຍບອກພວກເຂົາກ່ຽວກັບເຣື່ອງຜິດສິນທັມ. ເຣື່ອງນີ້ອາດຈະໝາຍເຖິງເຣື່ອງດຽວກັນທີ່ໄດ້ກ່າວມາແລ້ວ. ບາງຄົນຄິດວ່າ ອາດຈະເປັນເຣື່ອງອື່ນທີ່ເກີດຂຶ້ນກ່ອນໜ້າແລ້ວ.

ໃຫ້ກັບມາເບິ່ງບົດທີ 5:9-11. ໂປໂລໄດ້ອະທິບາຍໃຫ້ຊາວໂກຣິນໂທເຂົ້າໃຈວ່າ ລາວບໍ່ໄດ້ບອກໃຫ້ພວກເຂົາເຊົາຕິດຕໍ່ກັບຄົນທີ່ບໍ່ເປັນຄຣິສຕຽນ. ມັນເປັນໄປບໍ່ໄດ້ດອກ ຖ້າເປັນຢ່າງນັ້ນ ຄຣິສຕຽນຈະຕ້ອງອອກໄປເສັຽຈາກໂລກນີ້. ລາວໝາຍເຖິງ ຢ່າໄດ້ຄົບກັບຄຣິສຕຽນທີ່ເຮັດຜິດສິນທັມຢູ່.

ສຳລັບຄົນພາຍນອກຂອງຄຣິສຕະຈັກ ປະໄວ້ໃຫ້ເປັນພາຣະຂອງພຣະຜູ້ເປັນເຈົ້າ. ພຣະອົງຈະເປັນຜູ້ຕັດສິນພວກເຂົາເອງ. ແຕ່ສຳລັບພາຍໃນຄຣິສຕະຈັກ ມັນເປັນໜ້າທີ່ຮັບຜິດຊອບ ຈຳເປັນແທ້ຈະຕ້ອງຮັກສາໃຫ້ຄຣິສຕະຈັກນັ້ນບໍຣິສຸດໂດຍປາສຈາກຄວາມເປິດເປື້ອນຂອງການຜິດສິລທັມ.ຖ້າຫາກວ່າ ຈະປະໃຫ້ຄຣິສຕຽນພາຍໃນຄຣິສຕະຈັກເຮັດຜິດສິລທັມຢູ່ໂດຍບໍ່ມີການຕັດສິນລົງໂທດຕາມກົດລະບຽບວິນັຍແລ້ວ ຈະເຮັດໃຫ້ຄຳພະຍານຂອງຄຣິສຕະຈັກນັ້ນ ບໍ່ມີປະສິດທິພາບໃນການປະກາດຂ່າວປະເສີດ. ຄຣິສຕະຈັກຈະຕ້ອງອະທິຖານໃຫ້ຫລາຍໆ ກ່ອນຈະຕັດສິນລົງໂທດຕາມກົດຣະບຽບວິນັຍຕາມຄຳພະຍານຂອງຜູ້ກ່າວຫາ ແທນທີ່ຈະເປັນຄວາມຈິງແຕ່ເປັນການທຳຮ້າຍຜູ້ອື່ນ.

<u>ຈຳໄດ້ບໍ່ເຈົ້າເຄີຍເປັນຄົນປະເພດໃດ?</u> (6:9-11)

ໂປໂລເຕືອນຄວາມຈຳເຖິງຊີວິດເກົ່າຂອງຄຣິສຕຽນຊາວໂກຣິນໂທ. ເປັນເຣື່ອງທັມມະດາ ບາງຄັ້ງບາງຄາວຄຣິສຕຽນໄດ້ທວນຄິດເຖິງຊີວິດເກົ່າຂອງພວກເຂົາ ກ່ອນພວກເຂົາໄດ້ມາຕັດສິນໃຈຮັບເຊື່ອພຣະຄຣິດ. ແຕ່ເຖິງຢ່າງໃດກໍຕາມຄຣິສຕຽນບໍ່ໄດ້ມີຊີວິດຢູ່ໃນສະພາບເກົ່າແລ້ວ. ພວກເຮົາມີຊີວິດທີ່ເຮັດແຕ່ສິ່ງທີ່ໜ້ານັບຖື, ສິ່ງທີ່ຍຸດຕິທັມ, ສິ່ງທີ່ບໍຣິສຸດ, ສິ່ງທີ່ເລີດລ້ຳ, ແລະສິ່ງທີ່ຄວນເປັນການສັຣເສີນ (ຟີລິບປອຍ 4:4-8).

ໂປໂລໄດ້ເຕືອນຄຣິສຕຽນຊາວໂກຣິນໂທວ່າ ພວກເຂົາຈະເອົາຊີວິດເກົ່າມາໃຊ້ບໍ່ໄດ້. ບໍ່ໝາຍຄວາມວ່າເມື່ອມາເປັນຄຣິສຕຽນແລ້ວຢາກເຮັດຢ່າງໃດກໍໄດ້ຕາມໃຈຕົວເອງ.

ໂປໂລໄດ້ນຳເຣື່ອງບັນຫາກ່ຽວກັບການຜິດສິນທັມມາເຕືອນພວກເຂົາ. ເຣື່ອງຜິດສິນທັມທາງດ້ານເພດສັມພັນກັນເປັນພັຍຕໍ່ ຜູ້ຊາຍ, ຜູ້ຍິງ, ເດັກນ້ອຍ ແລະຄຣິສຕະຈັກ. ບໍ່ວ່າຈະເກີດຂຶ້ນໃນເມືອງໂກຣິນໂທ ຫລືໃນເມືອງຂອງທ່ານກໍຕາມພຣະທັມຂອງພຣະເຈົ້າໄດ້ກ່າວເດັດຂາດວ່າເປັນສິ່ງທີ່ຜິດສິນທັມ.ຈະເຮັດຢ່າງໃດຈຶ່ງຈະແກ້ໄຂບັນຫານີ້ໄດ້? ອັຄສາວົກ

ໂປໂລໄດ້ກ່າວວ່າ ບັນຫານີ້ຈະຕ້ອງນຳມາເປີດເຜີຍໃຫ້ຮັບຮູ້ກັນ. ລາວໄດ້ນຳອອກມາບັນລະຍາຍໃຫ້ເຫັນໃນ 1 ໂກຣິນໂທ 5:9-11 ເລີ້ມແຕ່ຄົນຫລິ້ນຊູ ພາສາອັງກິດໃຊ້ຄຳວ່າ (fornicators) ມີຄວາມຫມາຍວ່າ ຜູ້ຊາຍ ຫລືຜູ້ຍິງມີເພດສໍາພັນກ່ອນແຕ່ງງານ, ຕໍ່ມາພາສາລາວໃຊ້ຄຳວ່າ ຄົນຜິດຈາກຜົວເມັຽ ພາສາອັງກິດໃຊ້ຄຳວ່າ (adulterers) ແລະຕໍ່ໄປຈົນເຖິງຄົນໃຊ້ເຄື່ອງມືນເມົາ. ຄຣິສຕຽນໃນເມືອງໂກຣິນໂທຍັງກະທຳດັ່ງນັ້ນຢູ່. ການກະທຳດັ່ງກ່າວຈະຕ້ອງຍຸດຕິລົງຫລັງຈາກມາເປັນຄຣິສຕຽນ. ຖ້າຫາກວ່າພວກເຂົາເຂົ້າມາໃນຄຣິສຕະຈັກແລ້ວ ພວກເຂົາຈະຕ້ອງຕິດຕາມພຣະຜູ້ເປັນເຈົ້າຂອງຄຣິສຕະຈັກ.

ຂໍ້ 11 ເປັນພຣະທັມທອນຄວາມຈົດຈຳທີ່ອ່ອນຊ້ອນຫລາຍ "ແຕ່ເຈົ້າທັງຫລາຍໄດ້ຮັບການຊົງຊຳຣະແລ້ວ." ບໍ່ມີໃຜຈະປະຕິເສດໄດ້ວ່າ ເມື່ອກ່ອນພວກເຮົາເຄີຍໃຊ້ຊີວິດຢູ່ໃນຄວາມເປິະເປື້ອນດ້ວຍຄວາມບາບຂອງໂລກນີ້. ແຕ່ວ່າພວກເຮົາໄດ້ຖືກຊຳຣະແລ້ວ, ຖືກເຮັດໃຫ້ບໍຣິສຸດ, ແລະຖືວ່າເປັນຜູ້ຊອບທັມ. ພວກເຮົາໄດ້ຖືກລ້າງຈາກຄວາມເປິະເປື້ອນຂອງຄວາມບາບແລ້ວ.

<u>ທຸກສິ່ງທຸກຢ່າງນັ້ນມີຣາຄາສູງຫລາຍໃນວັນນີ້</u> (6:12-20)
ໃນບົດຮຽນນີ້ໄດ້ສອນເຖິງເສຣີພາບຂອງຄຣິສຕຽນທີ່ມີຂອບເຂດ. ພຣະຄຣິດໄດ້ຊົງປະທານຊີວິດໃຫ້ແກ່ພວກເຮົາ ແລະພຣະອົງຊົງເປັນເຈົ້າຂອງໃນການປະພຶດຂອງພວກເຮົາ. ຄວາມສໍາພັນລະຫວ່າງພວກເຮົາກັບພຣະຄຣິດໂດຍຜ່ານທາງພຣະວິນຍານບໍຣິສຸດ ມີພື້ນຖານຢູ່ສອງຢ່າງ ຄື ຖ້າພວກເຮົາເປັນຂອງພຣະຄຣິດ ພວກເຮົາຈະຕ້ອງເຊື່ອຟັງພຣະອົງ. ຄຣິສຕຽນໃນເມືອງໂກຣິນໂທມີຄວາມຄິດວ່າ ພວກເຂົາມີເສຣີພາບ ແລະຈະເຮັດຫຍັງກໍເຮັດຕາມໃຈຂອງພວກເຂົາ. ພວກເຂົາມີຄວາມຮູ້ສຶກວ່າ ສິ່ງພາຍນອກ ຫລື ການປະພຶດພາຍນອກຈະບໍ່ມີຜົນສະທ້ອນເຖິງເສຣີພາບຂອງຝ່າຍຈິດວິນຍານ (6:13). ໂປໂລຈຶ່ງໄດ້ອະທິບາຍບັນຍັດຂອງຊາວຢິວແລະການປະຕິບັດຂອງຄົນນອກສາສນາ ໂດຍໃຊ້ຫລັກຄຳສອນຂອງອົງພຣະເຢຊູ ເມື່ອພຣະອົງສັ່ງສອນສາວົກຂອງພຣະອົງ (ມາຣະໂກ 7:14-23). ບໍ່ແມ່ນສິ່ງທີ່ກິນລົງໄປດອກເຮັດໃຫ້ມະນຸດຊົ່ວມົວຫມອງ ແຕ່ແມ່ນສິ່ງພາຍໃນ ຄື ຈິດໃຈອັນຊົ່ວຮ້າຍຂອງມະນຸດນັ້ນ ເຮັດໃຫ້ມະນຸດຊົ່ວມົວຫມອງ. ໃນທີ່ສຸດ ພຣະຜູ້ເປັນເຈົ້າຈະເປັນຜູ້ຊົງໃຫ້ທັງທ້ອງ (ຮ່າງກາຍ) ແລະອາຫານກໍສູນຫາຍໄປ.

ພຣະຜູ້ເປັນເຈົ້າໄດ້ຊົງບັນດານໃຫ້ພຣະຄຣິດເປັນຄືນມາ ແລະ ພຣະຊົງບັນດານໃຫ້ພວກເຮົາເປັນຄືນມາໃຫມ່ (6:14). ສະນັ້ນ ຮ່າງກາຍໃຫມ່ນີ້ຈຶ່ງມີໄວ້ສຳລັບພຣະຄຣິດ ບໍ່ແມ່ນມີໄວ້ສຳລັບຄວາມກິນເປັນໃຫຍ່ ຫລື ມີໄວ້ໃນທາງຜິດສິນທັມ. ຮ່າງກາຍຂອງພວກເຮົາເປັນອະວັຍວະຂອງພຣະຄຣິດ. ພວກເຮົາຈະເອົາອະວັຍວະຂອງພຣະຄຣິດໄປເກືອກກົ້ວກັບການເຮັດຜິດສິນທັມທາງດ້ານເພດສໍາພັນບໍ່ໄດ້. ມີເພດສໍາພັນນອກຈາກການແຕ່ງງານ ເປັນສິ່ງທີ່ຜິດຕໍ່ຄວາມຜູກພັນຝ່າຍຈິດວິນຍານ (6:15-16).

ໂປໂລຮ້ອງຂໍໃຫ້ພວກເຂົາຫລີກຫນີເສັຽຈາກການຫລິ້ນຊູ້ (6:18). ຜູ້ທີ່ຫລິ້ນຊູ້ກໍເຮັດຜິດບາບຕໍ່ຮ່າງກາຍຂອງຕົນເອງ ຕໍ່ຄົນອື່ນແລະຕໍ່ພຣະຜູ້ເປັນເຈົ້າ ເພາະວ່າຮ່າງກາຍຂອງຕົນນັ້ນເປັນພຣະວິຫານຂອງພຣະເຈົ້າ. ການກະທຳດັ່ງກ່າວໄດ້ນຳຄວາມເສື່ອມເສັຽມາສູ່ຕົນເອງແລະທຳຮ້າຍຄວາມຮັກທີ່ເຄີຍຜູກພັນກັນມາ.

ຫລັກຫມັ້ນລັກສະນະຂອງຄວາມສໍາພັນລະຫວ່າງຕົວເຮົາກັບພຣະຜູ້ເປັນເຈົ້ານັ້ນ ຄືວ່າ ພວກເຮົາບໍ່ແມ່ນເຈົ້າຂອງຕົວເຮົາເອງ. ຮ່າງກາຍຂອງພວກເຮົາເປັນພຣະວິຫານຂອງພຣະວິນຍານບໍຣິສຸດ. ພວກເຮົາຈະຕ້ອງຮັກສາຮ່າງກາຍນີ້ບໍ່ໃຫ້ເກີດຄວາມຊົ່ວມົວຫມອງ. ບໍ່ແມ່ນຈະໃຊ້ຮ່າງກາຍນີ້ເພີດເພີນຕາມກິເລດຕັນຫາທີ່ຊົ່ວຮ້າຍ. ຮ່າງກາຍນີ້ຈະຕ້ອງໃຊ້ໄວ້ຮັບໃຊ້ພຣະຜູ້ເປັນເຈົ້າ. ພຣະອົງໄດ້ຊົງຊື້ພວກເຮົາທັງຫລາຍໄວ້ແລ້ວດ້ວຍລາຄາສູງ ເຫດສັນນັ້ນຈຶ່ງຖວາຍພຣະກຽດຕໍ່ພຣະເຈົ້າດ້ວຍຮ່າງກາຍຂອງພວກເຮົາ (6:20).

<u>ຄຳຖາມ</u>

1. ຄວາມບາບທີ່ມີຢູ່ໃນຄຣິສຕະຈັກເມືອງໂກຣິນໂທ ມີຄວາມແຕກຕ່າງຢ່າງໃດ ກັບຄວາມບາບທີ່ມີຢູ່ໃນຄຣິສຕະຈັກສມັຍນີ້? ຖ້າຫາກມີຄວາມແຕກຕ່າງ ມັນເປັນແບບໃດ ທ່ານຈຶ່ງຄິດຢ່າງນັ້ນ?

2. ເມື່ອຄົນອື່ນພົວພັນກັບການຜິດຊາຍຍິງ ມັນເປັນເຣື່ອງຂອງເຂົາບໍ່ແມ່ນບໍ?

3. ທ່ານມີວິທີທາງອັນໃດ ທີ່ຈະນຳເຣື່ອງການຜິດສິນທັມທາງເພດສັມພັນມາສູ່ຄຣິສຕະຈັກ ເພື່ອໃຫ້ທາງຄຣິສຕະຈັກເຫັນວ່າເປັນການເຮັດບາບຢ່າງຮ້າຍກາດ?

4. ຄຣິສຕະຈັກຈະຫລີກລ້ຽງ ເພື່ອບໍ່ໃຫ້ກາຍເປັນເຫມືອນຟາຣີຊາຍໃນການວາງກົດລະບຽບວິນັຍໄດ້ຢ່າງໃດ?

# ແຕ່ງກະໄດ້ ບໍ່ແຕ່ງກະດີ
# ບົດຮຽນບົດທີ 6

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> 1 ໂກຣິນໂທ 7:1-17, 25-35

<u>ຂໍ້ພຣະຄັມພີທັງໝົດສຳລັບບົດຮຽນນີ້:</u> 1 ໂກຣິນໂທ 7:1-40

<u>ຈຸດສຳຄັນຂອງບົດຮຽນນີ້</u>: ເພື່ອບອກໃຫ້ຮູ້ວ່າຈະແຕ່ງງານຫລືເປັນໂສດກໍຕາມ ຄຣິສຕຽນຈະຕ້ອງຢູ່ເພື່ອຖວາຍກຽດແກ່ພຣະເຈົ້າ.

<u>ຄຳຖາມເພື່ອການສຳຣວດ</u> ເຮົາຈະໃຫ້ຊີວິດການແຕ່ງງານ ແລະຊີວິດທີ່ເປັນໂສດຖວາຍພຣະກຽດແກ່ພຣະເຈົ້າໄດ້ຢ່າງໃດ?

<u>ຈຸດປະສົງຂອງບົດຮຽນນີ້:</u> ໜູນໃຊ້ຊີວິດທີ່ແຕ່ງງານຫລືເປັນໂສດໃຫ້ຖືກຕ້ອງຕາມພຣະປະສົງຂອງພຣະເຈົ້າ.

<u>ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນ</u>

- ພຣະຄັມພີເທົ່ານັ້ນເປັນແຜນທີ່ນຳທາງແຫ່ງຊີວິດ ແລະເປັນຣິດອຳນາດໃນການປະກາດຂອງພວກເຮົາ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນເຕີບໂຕ.
- ໃຫ້ທຸກຄົນເຂົ້າໃຈວ່າ ມະນຸດທຸກຄົນເປັນສິ່ງພຣະທັດຂອງພຣະເຈົ້າ.
- ເຮັດໃຫ້ຄອບຄົວຮັກແພງກັນດ້ວຍຄວາມຮັກຊຶ່ງມາຈາກພຣະເຈົ້າ.

ທ່ານອາຈເຄີຍໄດ້ຍິນຜູ້ເຖົ້າເພິ່ນເວົ້າເຣື່ອງການແຕ່ງງານດັ່ງນີ້, "ເອົາຜົວເອົາເມັຽນີ້ ເອົາກະດີ, ໄປມີຜູ້ຫາ ມາມີຜູ້ແຕ່ງ, ບໍ່ເອົາກະດີ ໄປບໍ່ຄາມາບໍ່ຂ້ອງ" ເປັນຄຳເວົ້າທີ່ກົງໄປກົງມາແບບຄຳຕອບບໍ່ແນ່ນອນເພື່ອເອົາອົກເອົາໃຈຜູ້ທີ່ຍັງເປັນໂສດ ແລະຜູ້ທີ່ແຕ່ງງານແລ້ວ. ທ່ານອາຈານໂປໂລໄດ້ສອນຄຣິສຕຽນໃນເມືອງໂກຣິນໂທໃນການຈະຢູ່ເປັນໂສດເລີຍ ຫລືແຕ່ງງານກໍຄວນຣະມັດຣະວັງ, ໃຫ້ໜູນໃຊ້ຊີວິດຂອງຕົນເປັນທີ່ຖວາຍກຽດແກ່ພຣະເຈົ້າ.

<u>ແຕ່ງກະດີ</u> (7:1-17)

ຄຣິສຕຽນໃນເມືອງໂກຣິນໂທຂຽນຈົດໝາຍຖາມໂປໂລຫລາຍປະການກ່ຽວກັບເຣື່ອງການແຕ່ງງານແລະຢູ່ເປັນໂສດຕລອດຊີວິດ, ເຖິງຢ່າງໃດກໍດີທ່ານອາຈານໂປໂລກໍບໍ່ຕອບຄຳຖາມຢ່າງແນ່ນອນ ແຕ່ເຮົາພໍຈະສລູບໄດ້ວ່າຄຳແນະນຳຂອງທ່ານຂ້ອນຂ້າງໜັກໄປທາງແຕ່ງງານຫລາຍກວ່າ. ຈົ່ງສັງເກດຄຳຕອບໂປໂລຕອບວ່າ "ການທີ່ຜູ້ຊາຍບໍ່ຖືກ ຕ້ອງ ກ່ຽວຂ້ອງກັບແມ່ຍິງກໍດີຢູ່. ແຕ່ເພື່ອປ້ອງກັນການຫລິ້ນຊູ້ ຜູ້ຊາຍທຸກຄົນຄວນມີເມັຽຂອງຕົນແລະແມ່ຍິງທຸກຄົນ ຄວນມີ ຜົວຂອງຕົນ" (ຂໍ້ 1-2). ເມື່ອເຮົາອ່ານແລ້ວເຫັນວ່າໂປໂລຢາກໃຫ້ທຸກຄົນແຕ່ງງານເພາະການແຕ່ງງານເປັນ ການຖືກຕ້ອງໃນສາຍພຣະເນດຂອງພຣະເຈົ້າທີ່ຊາຍຍິງຈະຕ້ອງຢູ່ກິນນຳກັນ, ຕົວຢ່າງໃນເວລາແຣກທີ່ພຣະເຈົ້າສ້າງໂລກໃນພຣະທັມປະຖົມມະການ ໂດຍສະເພາະຢ່າງຍິ່ງຕອນພຣະເຈົ້າສ້າງທ້າວອາດາມແລະນາງເອວາ. "ພຣະຜູ້ເປັນເຈົ້າ ຊົງກ່າວວ່າ ບໍ່ເປັນການສົມຄວນທີ່ຈະໃຫ້ຜູ້ຊາຍຢູ່ໂດດດ່ຽວເຊັ່ນນີ້ ເຮົາຄວນຫາຜູ້ຊ່ວຍທີ່ເໝາະສົມໃຫ້ລາວ. ເມື່ອ ເປັນດັ່ງນັ້ນ ພຣະຜູ້ເປັນເຈົ້າຈຶ່ງຊົງເຮັດໃຫ້ຜູ້ຊາຍນອນຫລັບສນິດ ໃນຂະນະທີ່ນອນຫລັບຢູ່ນັ້ນ

ພຣະອົງຊົງເອົາກະ ດູກຂ້າງຊີກນຶ່ງຂອງລາວອອກມາ ແລ້ວຊົງເຮັດໃຫ້ເນື້ອໜັງຈອດກັນດັ່ງເດີມ ພຣະອົງຊົງເອົາກະ ດູກຂ້າງນັ້ນມາສ້າງ ເປັນຜູ້ຍິງ ເມື່ອສ້າງແລ້ວພຣະອົງກໍຊົງມອບຍິງນັ້ນແກ່ລາວ" (ປະຖົມມະການ 2: 18-22). ໝາຍຄວາມວ່າພຣະ ເຈົ້າໃຫ້ອາດາມແລະເອວາແຕ່ງງານກັນ.

ກັບຄືນມາສັງເກດຄຳຕອບຂອງໂປໂລທີ່ຕອບວ່າ "ການຜູ້ຊາຍບໍ່ຖືກຕ້ອງກ່ຽວຂ້ອງກັບແມ່ຍິງກໍດີຢູ່" (ຂໍ້ 1). ມີຄວາມໝາຍວ່າ ການທີ່ຜູ້ຊາຍບໍ່ແຕະຕ້ອງຜູ້ຍິງອີງຕາມພຣະຄັມພີພາສາອັງກິດສບັບຄິງເຈມມີຄວາມໝາຍເຊັ່ນ ນັ້ນ. ອີກບ່ອນນຶ່ງທີ່ສຳຄັນໂປໂລກ່າວວ່າ "ແຕ່ເພື່ອປ້ອງກັນການຫລິ້ນຊູ້ ຜູ້ຊາຍທຸກຄົນຄວນມີເມັຽຂອງຕົນ ແລະແມ່ ຍິງ ທຸກຄົນຄວນມີ ຜົວຂອງຕົນ" (ຂໍ້ 1-2). ເພາະວ່າການສຳພັດແຕະຕ້ອງຮ່ວມເພດກ່ອນແຕ່ງງານນັ້ນ ຖືວ່າເປັນ ການ ຫລິ້ນຊູ້, ຍິ່ງໄປກວ່ານັ້ນພຣະເຢຊູເອງຊົງກ່າວວ່າ "ຜູ້ໃດເບິ່ງແມ່ຍິງດ້ວຍໃຈກຳໜັດໃນຍິງນັ້ນ ຜູ້ນັ້ນໄດ້ຫລິ້ນ ຊູ້ໃນ ໃຈກັບຍິງນັ້ນແລ້ວ" (ມັດທາຍ 5: 28).

ຫາກມີການແຕ່ງງານກັນແລ້ວຄອບຄົວຜົວເມັຽຕ້ອງເປັນຮ່າງກາຍດຽວກັນ ຈະເຮັດສິ່ງໃດ, ຈະໄປຈະມາ ທາງໃດກໍຕ້ອງມີການຕົກລົງກັນຄັກແນ່. ເພາະການແຕ່ງງານເປັນການຜູກມັດສອງຊີວິດໃຫ້ເປັນຊີວິດດຽວກັນຕາມ ນ້ຳພຣະທັຍຂອງອົງ ພຣະຜູ້ເປັນເຈົ້າ ເພາະຜູ້ຍິງເອງໄດ້ເກີດມາຈາກກະດູກຂ້າງຜູ້ຊາຍ ສ່ວນຜູ້ຊາຍເກີດມາຈາກດິນ ດັ່ງນັ້ນຜູ້ຍິງອາດຈະເປັນເພດອ່ອນແອກວ່າຜູ້ຊາຍແດ່ເປັນຂອງທັມມະດາ. ເມື່ອທັງສອງເປັນຜົວເມັຽກັນແລ້ວໂປໂລ ສັ່ງວ່າ "ເມັຽບໍ່ມີອຳນາດ ເໜືອຮ່າງກາຍຂອງຕົນ ແຕ່ອຳນາດນັ້ນຢູ່ກັບຜົວ. ຢ່າງດຽວກັນ ຜົວບໍ່ມີອຳນາດເໜືອ ຮ່າງກາຍຂອງຕົນ ແຕ່ອຳນາດ ນັ້ນຢູ່ນຳເມັຽ" (ຂໍ້ 4). ຊຶ່ງໝາຍຄວາມວ່າທັງສອງມີອຳນາດໃນຮ່າງກາຍຊຶ່ງ ກັນແລະກັນສເມີກັນ, ດັ່ງນັ້ນຜົວຫລື ເມັຽບໍ່ສາມາດເວົ້າວ່າ ນີ້ແມ່ນຕົວຂ້ອຍເອງ ຂ້ອຍຢາກໄປໃສກໍໄປ. ໂປໂລຍັງ ແນະນຳຕໍ່ໄປເຖິງເຣື່ອງການຢູ່ກິນຮ່ວມເພດດັ່ງນີ້: "ຢ່າປະຕິເສດໃນການຢູ່ຮ່ວມກັນ" (ຂໍ້ 5ກ). ເປັນຫຍັງໂປໂລຈຶ່ງ ແນະນຳແນວນັ້ນທ່ານອ້າງເຫດຜົນວ່າ "ເພື່ອບໍ່ໃຫ້ຊາຕານຊັກຈູງໃຫ້ເຮັດຜິດເພາະຕົນອົດບໍ່ໄດ້" (ຂໍ້ 5ຂ). ຄຳແນະ ນຳຂອງໂປໂລບໍ່ແມ່ນດີແຕ່ເວລານັ້ນຂ້າພະເຈົ້າເຂົ້າໃຈວ່າຍັງດີຫລາຍໃນເວລານີ້ເຊັ່ນກັນ.

ທ່ານອາຈານໂປໂລເອງກໍບໍ່ໄດ້ມີເມັຽອີງຕາມຄຳເວົ້າຂອງທ່ານ ແລະອີງຕາມພຣະຄັມພີແລ້ວເຮົາບໍ່ເຫັນພຣະ ຄັມພີບອກເຮົາວ່າທ່ານມີເມັຽ. ທ່ານກ່າວຕໍ່ໄປວ່າ "ເຮົາຂໍກ່າວແກ່ຄົນທີ່ຍັງເປັນໂສດແລະພວກແມ່ໝ້າຍວ່າ ຖ້າເຂົາ ຈະຢູ່ເໝືອນເຮົາກໍດີແລ້ວ. ແຕ່ຖ້າເຂົາອົດໃຈບໍ່ໄດ້ກໍໃຫ້ເຂົາແຕ່ງງານເສັຽ ເພາະການແຕ່ງງານນັ້ນດີກວ່າມີໃຈເຜົາ ດ້ວຍການຣາຄະ" (ຂໍ້ 8). ເຮົາພໍຈະເຂົ້າໃຈໃນຄຳແນະນຳຂອງໂປໂລວ່າຢູ່ເປັນໂສດກໍດີ ຫາກອົດໃຈໄດ້. ແຕ່ຫາກ ໃຜຜູ້ນຶ່ງຍັງເປັນໂສດ ຫລືພວກຍິງໝ້າຍທີ່ຍັງໜຸ່ມແລະຍັງມີໄຟແຫ່ງຣະຄະຢູ່ກໍຄວນແຕ່ງງານເສັຽດີກວ່າຈະມີຣາຄະ ໃນໃຈເຮັດໃຫ້ເປັນຄວາມບາບໂດຍການຫລິ້ນຊູທາງໃຈ.

"ສ່ວນຄົນທີ່ແຕ່ງງານແລ້ວ ເຮົາຂໍສັ່ງ ບໍ່ແມ່ນເຮົາສັ່ງເອງ ແຕ່ພຣະຜູ້ເປັນເຈົ້າຊົງບັນຊາວ່າຢ່າໃຫ້ເມັຽປະຜົວ. ແຕ່ຖ້ານາງຫາກປະຜົວໄປ ຢ່າໃຫ້ນາງເອົາຜົວໃໝ່ ຫລືບໍ່ດັ່ງນັ້ນກໍໃຫ້ນາງຄືນດີກັບຜົວອີກ ແລະຂໍຢ່າໃຫ້ຜົວປະຮ້າງ ເມັຽ" (ຂໍ້ 10-11). ໂປໂລແນະນຳຄົນທີ່ແຕ່ງງານໄປແລ້ວຄວນເຮັດດັ່ງນີ້ ເພາະສິ່ງທີ່ໂປໂລແນະນຳນັ້ນເປັນພຣະ ບັນຊາຂອງອົງພຣະຜູເປັນເຈົ້າ. ຫາກຜົວເມັຽເຮົາທັງຫລາຍເຮັດຕາມຄຳແນະນຳຂອງທ່ານອາຈານໂປໂລເຮົາກໍເຮັດ ການນີ້ຖວາຍກຽດແກ່ພຣະເຈົ້າແລ້ວແລະພວກລູກໆຂອງພວກເຮົາກໍຈະບໍ່ເປັນລູກທີ່ມີຫລາຍພໍ່ຫລືຫລາຍແມ່. ລາງຄົນ ໃນກຸ່ມຄຣິສຕຽນພາກັນເຂົ້າໃຈຜິດເຣື່ອງການທຽມແອກ, ຄູ່ຜົວເມັຽຫລາຍຄົນບໍ່ໄດ້ເຊື່ອໃນພຣະເຈົ້າທັງສອງຄົນຈຶ່ງ ຄິດວ່າຈະຕ້ອງປະຮ້າງກັນເພາະຄວາມເຊື່ອແຕກຕ່າງກັນ. ກ່ຽວກັບເຣື່ອງນີ້ໂປໂລແນະນຳວ່າ "ຖ້າພີ່ນ້ອງຄົນໃດມີ ເມັຽທີ່ບໍ່ເຊື່ອໃນອົງພຣະຄຣິດ ແຕ່ນາງພໍໃຈຈະຢູ່ກັບຜົວນັ້ນ ຜົວບໍ່ຄວນປະຮ້າງນາງ. ຖ້າຍິງຄົນໃດທີ່ມີຜົວທີ່ບໍ່ເຊື່ອໃນ ອົງພຣະຄຣິດ ແຕ່ຜົວກໍພໍໃຈຈະຢູ່ກັບເມັຽນັ້ນ ເມັຽບໍ່ຄວນຢ່າຮ້າງຜົວນັ້ນ" (ຂໍ້ 12-13). ຫາກຜູ້ບໍ່ມີຄວາມເຊື່ອສມັກໃຈ

ແຍກກັນແທ້ ໂປໂລແນະນຳດັ່ງນີ້ "ແຕ່ຖ້າຜູ້ທີ່ບໍ່ມີຄວາມເຊື່ອຈະແຍກຕົວອອກໄປກໍຈົ່ງໃຫ້ເພິ່ນໄປເຣື່ອງຢ່າງນີ້ບໍ່ຈຳເປັນທີ່ພີ່ນ້ອງຊາຍຍິງຈະຜູກມັດຈຳໃຈໃຫ້ຢູ່ດ້ວຍກັນ" (ຂໍ້ 15).

<u>ບໍ່ແຕ່ງກະດີ</u> (7: 25-35)

ຊາຍຫລືຍິງໃດຫາກບໍ່ມີໃຈຢາກປ່ຽນສິ່ງທີ່ຕົນເອງຢາກເຮັດຕາມໃຈຊອບ ໂດຍບໍ່ມີໃຜຫຍຸ້ງກ່ຽວຖ່ວງດຶງໃນການໄປການມາຂອງຕົນ ແລະຫາກຊາຍຫລືຍິງນັ້ນອົດກັ້ນໃນການຮ່ວມເພດໄດ້ຕລອດເຖິງທາງກາຍ, ວາຈາແລະຈິດໃຈແທ້ຈິງແລ້ວຢູ່ເປັນໂສດກໍດີກວ່າເພາະວ່າ <u>ໄປຈະບໍ່ຄາ ມາບໍ່ຂ້ອງ</u> ຢູ່ໃນຫ້ອງເຮືອນຫໍຄົນດຽວ ຄັນຢາກກິນຫຍັງກໍເຮັດກິນເອງ ບໍ່ຢາກກໍບໍ່ຕ້ອງເຮັດ ນີ້ຄືຜົນດີຂອງການຢູ່ຜູ້ດຽວ. ທ່ານອາຈານໂປໂລເອງຍອມຮັບວ່າທ່ານເອງບໍ່ໄດ້ຮັບຄຳສັ່ງກ່ຽວກັບເຣື່ອງຊາຍໂສດ ຫລືຍິງໂສດ. ທ່ານກ່າວວ່າ "ເຣື່ອງຄົນໂສດນັ້ນເຮົາບໍ່ໄດ້ຮັບພຣະບັນຊາຈາກອົງພຣະຜູ້ເປັນເຈົ້າ ແຕ່ເຮົາຂໍອອກຄວາມເຫັນໃນຖານະທີ່ເປັນຜູ້ໄດ້ຮັບພຣະຄຸນຈາກອົງພຣະຜູ້ເປັນເຈົ້າ ໃຫ້ເປັນຜູ້ທີ່ໄວ້ໃຈໄດ້" (ຂໍ້ 25). ການທີ່ໂປໂລກ່າວເຊັ່ນນີ້ບໍ່ໄດ້ຫມາຍຄວາມວ່າຄຳເວົ້າຂອງທ່ານບໍ່ໄດ້ມາຈາກພຣະເຈົ້າ ແຕ່ຫມາຍຄວາມວ່າທ່ານບໍ່ໄດ້ຮັບຄຳສັ່ງໃຫ້ເວົ້າເຣື່ອງນີ້ໂດຍສເພາະ.

ຜູ້ຊາຍຫລາຍຄົນຄິດວ່າມີຄອບຄົວມີຄວາມຫຍຸ້ງຍາກຫລາຍຢ່າງ ເປັນຕົ້ນວ່າບໍ່ໄດ້ໃຈຕົນເອງຈຶ່ງຄິດຢາກປະຮ້າງເມັຽຂອງຕົນເຣື່ອນີ້ໂປໂລອອກຄຳເຫັນວ່າ "ຖ້າເຈົ້າມີເມັຽແລ້ວ ຢ່າຊອກຫາທາງແຍກຈາກນາງ ແຕ່ຖ້າແຍກຈາກເມັຽແລ້ວ ຢ່າຊອກຫາເມັຽໃຫມ່" (ຂໍ້ 27). ເມື່ອເຮົາສັງເກດຄຳເວົ້າຂອງໂປໂລເຮົາເຫັນວ່າໂປໂລເຂົ້າໃຈ ວ່າມີຜູ້ຊາຍຫລາຍຄົນຫາທາງປະເມັຽ. ຄຳວ່າຫາທາງທີ່ໂປໂລກ່າວນັ້ນຫມາຍເຖິງການວາງແຜນປະຮ້າງຫລືຊອກເຣື່ອງໃສ່ເມັຽເພື່ອຈະປະຮ້າງ ຫລືຫາໂອກາດຕອນເມັຽມີຄວາມຜິດແລ້ວປະຮ້າງ. ໂປໂລກ່າວວ່າ "ເຮົາກ່າວເຊັ່ນນີ້ກໍເພື່ອປໂຍດຂອງເຈົ້າທັງຫລາຍເອງ ບໍ່ແມ່ນຈະຫ້າງແຮ້ວໃສ່ພວກເຈົ້າ" (ຂໍ້ 35ກ).

ອີກຕອນສຳຄັນຕອນນຶ່ງໂປໂລໄດ້ແນະນຳໃນການປະຕິບັດຕໍ່ຄູ່ຫມັ້ນວ່າ "ຖ້າຊາຍໃດມີຄູ່ຫມັ້ນເປັນສາວປອດ ແລະຮູ້ສຶກວ່າຕົນຈະປະຕິບັດຕໍ່ຄູ່ຫມັ້ນຢ່າງສົມຄວນບໍ່ໄດ້ແລ້ວ ຖ້າມີໃຈຮ້ອນແຮງຈຶ່ງຕ້ອງເຮັດຢ່າງໃດຢ່າງນຶ່ງ ກໍໃຫ້ເຂົາເຮັດຕາມຄວາມປາຖນາຄື ໃຫ້ເຂົາແຕ່ງງານເສັຽບໍ່ຜິດອັນໃດ" (ຂໍ້ 36). ໂປໂລຫມາຍຄວາມວ່າ ເມື່ອບ່າວ ສາວຫມັ້ນກັນໄວ້ແລ້ວແຕ່ຍັງບໍ່ເຖິງກຳນົດມື້ແຕ່ງງານເທື່ອນັ້ນຫາກທັງສອງພ້ອມທີ່ຈະຮ່ວມເພດກັນນັ້ນ ຈົ່ງຈັດງານ ແຕ່ງງານໃຫ້ເຂົາກ່ອນເວລາບໍ່ຜິດຫຍັງ ແຕ່ຫາກບໍ່ໃຫ້ເຂົາແຕ່ງງານເທື່ອແຕ່ຮ່ວມເພດກັນກ່ອນແຕ່ງງານນັ້ນຜິດ ເພາະຍັງບໍ່ທັນແຕ່ງງານກັນເປັນຜົວເມັຽກັນເທື່ອ.

"ແຕ່ຖ້າຊາຍໃດຕັ້ງໃຈຄັກແນ່ ແລະເຫັນວ່າບໍ່ມີຄວາມຈຳເປັນ ແຕ່ອາດບັງຄັບໃຈຕົນເອງໄດ້ ດ້ວຍຕັ້ງໃຈວ່າຈະໃຫ້ຍິງນັ້ນເປັນຄູ່ຫມັ້ນຕໍ່ໄປຜູ້ນັ້ນກໍເຮັດການດີຢູ່" (ຂໍ້ 37). ຫມາຍຄວາມວ່າຊາຍທີ່ມີຄູ່ຫມັ້ນແລ້ວຕັ້ງໃຈຄັກແນ່ວ່າຈະບໍ່ແຕະຕ້ອງນາງຈົນເຖິງວັນແຕ່ງງານ ເຖິງແມ່ນວ່າຈະເປັນເວລາຍາວນານປານໃດກໍຕາມ, ຈະລໍຄອຍວັນນັ້ນເປັນວັນນັ້ນ, ຈະເຮັດໃຫ້ຕຽງສົມຣົດຂອງຕົນເປັນທີ່ເທີດທູນຖວາຍກຽດແກ່ພຣະເຈົ້າໂດຍການບໍ່ຍອມລ່ວງເກີນກົດຣະບຽບ. ອາຈານໂປໂລຍ້ອງຍໍວ່າ "ຜູ້ນັ້ນກໍເຮັດດີຢູ່" (ຂໍ້ 38ຂ). ຖ້າເຮົາສັງເກດຄຳວ່າເຮັດດີຢູ່ເຮົາຈະເຫັນວ່າຍັງມີອັນອື່ນດີກວ່ານັ້ນອີກ, ໂປໂລກ່າວຕໍ່ໄປວ່າ "ເຫດສັນນັ້ນຜູ້ໃດແຕ່ງງານກັບຄູ່ຫມັ້ນຂອງຕົນກໍເຮັດດີຢູ່ ແຕ່ຜູ້ບໍ່ແຕ່ງງານນັ້ນກໍເຮັດດີກວ່າ" (ຂໍ້ 38).

ໃນຕອນທ້າຍໂປໂລກ່າວວ່າ "ຕາບໃດຜົວຍັງມີຊີວິດຢູ່ ເມັຽຕ້ອງຢູ່ກັບຜົວ ຖ້າຜົວນາງຕາຍນາງກໍເປັນອິສຣະຈະແຕ່ງງານກັບຊາຍໃດກໍໄດ້ຕາມໃຈ ແຕ່ຕ້ອງແຕ່ງງານກັບຜູ້ທີ່ເຊື່ອໃນອົງພຣະຜູ້ເປັນເຈົ້າ. ແຕ່ຕາມເຮົາເຫັນວ່າຖ້ານາງຢູ່ຜູ້ດຽວກໍຈະເປັນສຸກກວ່າ ແລະເຮົາຄິດວ່າພຣະວິນຍານຂອງພຣະເຈົ້າຊົງສະຖິດກັບເຮົາດ້ວຍ" (ຂໍ້ 39-40).

ໂປໂລສລຸບໃນຕອນທ້າຍຂ້ອນຂ້າງໜັກໄປທາງເປັນໂສດດີກວ່າແຕ່ງງານ ເພາະທ່ານກ່າວວ່າຫາກຜົວຍັງບໍ່ທັນຕາຍ ເມັຽຈະຕ້ອງຢູ່ກັບຜົວໃນທຸກກໍຣະນີ ແຕ່ຫລັງຈາກຜົວຕາຍແລ້ວແຕ່ງງານກັບໃຜກໍໄດ້ ທ່ານໝາຍຄວາມວ່າແຕ່ງກັບຊາຍໂສດ ບໍ່ແມ່ນຊາຍທີ່ມີເມັຽແລ້ວ ຍິ່ງໄປກວ່ານັ້ນໂປໂລແນະນຳອີກວ່າ ຢູ່ຜູ້ດຽວກໍເປັນສຸກກວ່າເພາະວ່າຈະໄດ້ເປັນອິສຣະ ຫລືເປັນເອກະຣາດບໍ່ມີໃຜບັງຄັບ ແລະໂປໂລຍັງຄິດວ່າຊີວິດເປັນໂສດພຣະເຈົ້າກໍຊົງສະຖິດຢູ່ດ້ວຍ ສເມີກັນກັບຄົນທີ່ມີຜົວຫລືເມັຽ ດັ່ງນັ້ນເປັນໂສດຫລືມີຄອບຄົວກໍຕາມຈົ່ງເຮັດໃຫ້ຊີວິດຂອງຕົນເປັນທີ່ຖວາຍກຽດ ແກ່ພຣະເຈົ້າ.

<u>ຄຳຖາມ</u>

1. ທ່ານຈະເອົາຊີວິດເປັນໂສດ ຫລືຊີວິດທີ່ແຕ່ງງານຂອງທ່ານຖວາຍກຽດແກ່ພຣະເຈົ້າຢ່າງໃດ?

2. ຖານະທ່ານເປັນຄົນມີຄອບຄົວທ່ານຢາກໃຫ້ໂບດເຮົາປະຕິບັດແນວໃດກັບທ່ານ?

3. ຖານະທີ່ທ່ານເປັນຄົນໂສດທ່ານຢາກໃຫ້ໂບດເຮົາປະຕິບັດຢ່າງໃດກັບທ່ານ?

4. ເຮັດແນວໃດຈະໃຫ້ຊີວິດການແຕ່ງງານຂອງເຮົາໝັ້ນຄົງຈົນເຖິງວັນສຸດທ້າຍ?

# ບົດຮຽນທີ 7
# ເຣື່ອງທີ່ ຍັງສົງສັຍ

<u>ຂໍ້ພຣະຄັມພີສໍາລັບບົດຮຽນນີ້:</u> 1 ໂກຣິນໂທ 8:1-13; 9:19-26; 10:14-33
<u>ຂໍ້ພຣະຄັມພີສໍາລັບເບື້ອງຫຼັງ:</u> 1 ໂກຣິນໂທ 8:1--11:1
<u>ຈຸດສໍາຄັນຂອງບົດຮຽນນີ້:</u> ເຖິງເຮົາຈະຮູ້ວ່າການປະພຶດນັ້ນບໍ່ໄດ້ຜິດຕໍ່ຄໍາສອນ, ພວກເຮົາທີ່ເປັນຄຣິສຕຽນຈະຕ້ອງບໍ່ເຮັດໃນສິ່ງທີ່ພາໃຫ້ຄົນອື່ນສະດຸດໃຈ ຫລືໃນສິ່ງທີ່ຈະບໍ່ເປັນພະຍານອັນດີງາມກັບຄົນຂ້າງນອກ.

<u>ຄໍາຖາມເພື່ອການສໍາຣວດ:</u> ມີຫລັກການອັນໃດທີ່ຈະຊ່ວຍນໍາທາງ ໃນເມື່ອພວກເຮົາບໍ່ແນ່ໃຈໃນຄໍາສອນ?
<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອຈະຮູ້ຫລັກການຈາກພຣະທັມທີ່ຈະຊ່ວຍ ເມື່ອມີການສົງສັຍວ່າຈະເລືອກສິ່ງໃດແທ້.

<u>ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:</u>

- ພຣະຄັມພີຄືຫລັກສໍາຄັນສໍາລັບຊີວິດ ແລະການຮັບໃຊ້.
- ເວົ້າເຣື່ອງຂ່າວປະເສີດກັບຄົນທັງຫລາຍ.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ເຫັນທຸກຄົນວ່າສໍາຄັນ ເພາະພຣະເຈົ້າຊົງເປັນຜູ້ສ້າງມະນຸດ.

## <u>ຄໍານໍາ</u>

ຄຣິສຕຽນຄວນໃຊ້ເສຣີພາບເຣື່ອງການປະພຶດຂອງຕົນໄປໃນທາງທີ່ຈະບໍ່ເຮັດໃຫ້ຄົນອື່ນໆສະດຸດໃຈ. ພວກເຮົາມີບັນຫາຫລາຍຢ່າງໃນຊີວິດປະຈໍາວັນ. ບັນຫາບາງຢ່າງກໍຫາຄໍາຕອບໄດ້ງ່າຍໆ, ແຕ່ບັນຫາບາງຢ່າງກໍມີຄໍາຕອບທີ່ເຮັດໃຫ້ເກີດຄວາມສົງສັຍເພີ້ມຂື້ນ. ຕົວຢ່າງ: ຄຣິສຕຽນຄວນເບິ່ງໜັງທີ່ໝາຍ (R) ບໍ່? ຄຣິສຕຽນຄວນເຮັດການວັນອາທິດບໍ່? ຜູ້ຊາຍຄຣິສຕຽນຄວນໃສ່ຕຸ້ມຫູບໍ່? ຄຣິສຕຽນຄວນສັກລາຍບໍ່? ການຫາຄໍາຕອບໃນພຣະທັມສໍາລັບຄໍາຖາມ ເຫລົ່ານີ້ອາດຈະເຮັດໃຫ້ມີຄໍາຖາມ ຫລືຄວາມສົງສັຍຫລາຍຂື້ນ. ບົດຮຽນພາກນີ້ ຈະເວົ້າເຖິງເຣື່ອງບາງຢ່າງທີ່ຖືວ່າເປັນ "ເຣື່ອງທີ່ຍັງສົງສັຍຢູ່" ຫລືເປັນເຣື່ອງທີ່ພຣະຄັມພີບໍ່ໄດ້ກໍານົດໄວ້ຢ່າງແຈ່ມແຈ້ງ.

### <u>ເຣື່ອງຄວາມຮູ້ (8:1-13)</u>

ໃນພຣະທັມ 1 ໂກຣິນໂທ 8:1-13, ໂປໂລເວົ້າເຖິງເຣື່ອງຄຣິສຕຽນຊື້ຊີ້ນຕາມຕລາດຊຶ່ງອາດຈະເປັນຊີ້ນທີ່ເຂົາເອົາບູຊາພຣະທຽມມາແລ້ວ. ໂປໂລໄດ້ສັຣເສີນຄຣິສຕຽນທີ່ມີຄວາມຮູ້ຄວາມສລາດແຕ່ທ່ານໄດ້ເຕືອນເຂົາເຈົ້າວ່າຄວາມຮູ້ທີ່ຂາດຄວາມຮັກນັ້ນເປັນອັນຕະລາຍ. ຊີ້ນທີ່ຄົນນໍາມາເປັນເຄື່ອງຖວາຍຜີ ຖືກແບ່ງອອກເປັນສາມສ່ວນ: ສ່ວນນຶ່ງເປັນຂອງນັກທັມ; ຖ້າເຂົາບໍ່ຕ້ອງການຊີ້ນນັ້ນເຂົາສາມາດນໍາໄປຂາຍທີ່ຕລາດ. ສ່ວນສອງເປັນສ່ວນເພື່ອຖວາຍຜີ. ສ່ວນທີສາມ ເປັນສ່ວນຂອງຜູ້ທີ່ນໍາຊີ້ນມາຖວາຍ. ຄໍາຖາມ: ຖ້າຄຣິສຕຽນຊື້ຊີ້ນຈາກຕລາດຫລືຖືກເຊີນໄປກິນເຂົ້າທີ່ບ້ານຂອງ ຄົນບໍ່ເຊື່ອໃນພຣະເຈົ້າ, ພວກເຂົາຄວນກິນຊີ້ນນັ້ນບໍ່? ໂປໂລຕອບວ່າ "ອາຫານບໍ່ແມ່ນສິ່ງທີ່ເຮັດໃຫ້ພວກເຮົາເປັນທີ່ຊອບພຣະທັຍຂອງພຣະເຈົ້າ ຖ້າບໍ່ກິນເຮົາກໍບໍ່ໄດ້ຊົ່ວລົງ ຖ້າກິນເຮົາກໍບໍ່ໄດ້ດີຂື້ນ (8:8).

ກ່ອນການມາເປັນຄຣິສຕຽນຊາວໂກຣິນໂທເຄີຍເຊື່ອຖືພຣະທຽມ; ການກິນຊີ້ນທີ່ຊື້ຈາກຕລາດເຮັດໃຫ້ເຂົາເຈົ້າຄິດເຖິງພວກຜີທັງຫລາຍເພາະເຂົາເຈົ້າຮູ້ວ່າຊີ້ນເຫລົ່ານັ້ນແມ່ນມາຈາກບ່ອນຖວາຍຜີ. ຄຣິສຕຽນທີ່ເຂັ້ມແຂງແລ້ວໃນໂກຣິນໂທ ຮູ້ວ່າພວກເຂົາເຈົ້າບໍ່ໄດ້ຢູ່ໃຕ້ອຳນາດຂອງພວກຜີທັງຫລາຍ; ແຕ່ຄວາມຮູ້ເຫລົ່ານີ້ສາມາດກາຍເປັນຈຸດສະດຸດສຳລັບ ຄຣິສຕຽນທີ່ຍັງອ່ອນແອຢູ່ (8:9-13). ໂປໂລເຕືອນຄຣິສຕຽນທີ່ຮູ້ຫລາຍແລ້ວ ບໍ່ໃຫ້ໃຊ້ເສລີພາບຂອງຕົນໃນທາງຜິດ. ຖ້າຄຣິສຕຽນທີ່ອ່ອນແອເຫັນຄຣິສຕຽນຜູ້ທີ່ເຂັ້ມແຂງແລ້ວກິນຊີ້ນທີ່ຖືກຖວາຍຜີ ເຂົາອາດຈະກິນເໝືອນກັນພ້ອມຈະ ຄິດວ່າຜີເຫລົ່ານັ້ນສັກສິດແທ້. ຄຣິສຕຽນທຸກຄົນຄວນລະວັງການປະພຶດຂອງຕົນ ເພາະການປະພຶດນັ້ນສາມາດເຮັດໃຫ້ ຜູ້ທີ່ຍັງອ່ອນແອທັງຫລາຍຫລົງໄປເຮັດຄວາມຜິດບາບ (8:12-13).

## ເສຣີຊົນຍອມເປັນທາດຮັບໃຊ້ (9:19-26)

ໂປໂລບອກໃນຕອນນີ້ວ່າ ຜູ້ຕິດຕາມພຣະຄຣິດທຸກຄົນຄືທາດຮັບໃຊ້; ຄຣິສຕຽນຄືຜູ້ທີ່ມີເສຣີພາບແຕ່ໃນຂະນະດຽວກັນຄຣິສຕຽນກໍຍອມຕົວເປັນຜູ້ຮັບໃຊ້ຂອງຄົນທົ່ວໄປ. ຄົນທີ່ບໍ່ເຊື່ອໃນພຣະເຈົ້າອາດຈະຄິດວ່າພວກຕົນມີເສຣີພາບ, ແຕ່ຄວາມຈິງແລ້ວພວກເຂົາກຳລັງເປັນທາດຂອງຄວາມຜິດບາບ. ຄຣິສຕຽນເປັນຜູ້ທີ່ມີເສຣີພາບຈາກຄວາມຜິດບາບ (ໂຣມ 8:2) ແລະຈາກກົດຂອງພຣະບັນຍັດ (ຄາລາເຕັຽ 5:1). ແຕ່ຄຣິສຕຽນແມ່ນຂ້າທາດຂອງພຣະຄຣິດ (1 ກຣທ 7:22). ໂປໂລຮັບໃຊ້ຄຣິສຕະຈັກທີ່ໂກຣິນ; ທ່ານມີສິດໃນການດື່ມກິນເໝືອນຄົນອື່ນໆ (9:1-5). ເພື່ອຫລີກເວັ້ນການຕຳນິ, ໂປໂລປະກອບອາຊີບເພື່ອລ້ຽງຕົນເອງ. ທ່ານປະຕິເສດຕົວເອງແຕ່ໄດ້ຮັກສາເສຣີພາບໄວ້; ໂປໂລຕ້ອງການທີ່ຈະຮັບໃຊ້ທຸກໆຄົນ (9:19-26). ທ່ານປະກາດຂ່າວປະເສີດກັບຄົນຍິວ ແລະກັບພວກຕ່າງຊາດດ້ວຍ (ໂຣມ 1:16).

ການເປັນຄຣິສຕຽນບໍ່ແມ່ນການມີອິສຣະຈາກພຣະເຈົ້າແຕ່ເປັນການຖືກຈຳຈອງຢູ່ກັບພຣະເຈົ້າ. ເມື່ອພວກເຮົາຮຽນຮູ້ແລະເຮັດຕາມຄວາມຈິງຂອງພຣະເຈົ້າ, ພວກເຮົາຈຶ່ງຈະໄດ້ເປັນຜູ້ທີ່ມີອິສຣະພາບທີ່ແທ້ຈິງ (ໂຢຮັນ 8:32). ເພາະເສຣີພາບທີ່ໂປໂລມີໃນພຣະຄຣິດ ແລະການຍອມເປັນທາດຂອງພຣະຄຣິດ, ເຂົາຈຶ່ງສາມາດປະກາດກັບຊາວຍິວທີ່ບໍ່ເປັນຄຣິສຕຽນໂດຍບໍ່ຕ້ອງກັບໄປຢູ່ໃຕ້ພຣະບັນຍັດຂອງຄົນຍິວ.

ການປະຕິເສດຕົວເອງແລະການມີຄວາມໝັ້ນພຽນເປັນສິ່ງຈຳເປັນສຳລັບການແຂ່ງຂັນເພື່ອຊີງລາງວັນ. ໃນເກມກິລາຫລາຍຄົນແລ່ນແຂ່ງກັນ ແຕ່ຄົນທີ່ໄດ້ຮັບລາງວັນມີແຕ່ຄົນດຽວ; ໃນຊີວິດຄຣິສຕຽນ, ທຸກຄົນແລ່ນດ້ວຍກັນ ແລະທຸກໆຄົນຈະໄດ້ຮັບລາງວັນ. ໂປໂລໃຫ້ຕົວຢ່າງໃນເລື່ອງນີ້ວ່າ "ເຮົາກໍທຸບຕີຮ່າງກາຍຂອງເຮົາໃຫ້ມັນແຂງຢູ່ຄານີເພາະຢ້ານວ່າເມື່ອເຮົາໄດ້ປະກາດແກ່ຄົນອື່ນແລ້ວ ເຮົາເອງຈະຖືກຂ້າຊື່ອອກຈາກການແຂ່ງຂັນ (9:27). ສຳລັບໂປໂລເອງ ການບັງຄັບຕົວເອງມີຄວາມສຳຄັນກວ່າການອ້າງສິດທິທັງຫລາຍ.

## ຈອກຂອງຜີຫລືຈອກຂອງພຣະເຈົ້າ (10:14-22)

ຖ້າຄຣິສຕຽນຖືກເຊີນໄປໃນງານຂອງພວກທີ່ຂາບໄຫວ້ພຣະທຽມ, ພວກຄຣິສຕຽນຄວນຮ່ວມການໄຫວ້ວອນນັ້ນບໍ່? ໂປໂລໃຫ້ລາຍລະອຽດໂດຍປຽບທຽບການຖວາຍພຣະທຽມ ແລະພິທີສິນມະຫາສນິດດັ່ງຕໍ່ໄປນີ້: ພວກໄຫວ້ພຣະທຽມທຳການຖວາຍໃຫ້ກັບຜີ ແຕ່ພວກຮັບສິນມະຫາສນິດ ເຮັດເພື່ອລະນຶກເຖິງການຖວາຍອົງພຣະເຢຊູເພື່ອຄວາມບາບຂອງພວກເຂົາ. ບຸກຄົນຜູ້ນຶ່ງບໍ່ສາມາດທີ່ຈະນະມັສການພຣະຄຣິດແລະນະມັສການຜີໄປພ້ອມໆກັນ. ການຮ່ວມໂຕະກັບຜີແມ່ນການປະຕິເສດພຣະຄຣິດ ແລະການຮ່ວມໂຕະກັບພຣະຄຣິດແມ່ນການປະຕິເສດຜີ. ມັນເປັນໄປບໍ່ໄດ້ທີ່ບຸກຄົນໃດຄົນນຶ່ງຈະເຮັດທັງສອງຢ່າງ. ໂປໂລບອກຄຣິສຕຽນທັງຫລາຍໃຫ້ຫລີກໜີຈາກການໄຫວ້ພຣະທຽມແລະບໍ່ໃຫ້ເຮັດໃນສິ່ງໃດທີ່ເຫັນວ່າເປັນການເຮັດຜິດບາບ. ຄຣິສຕຽນບໍ່ຕ້ອງມີສ່ວນຮ່ວມໃນການໄຫວ້ ຫລືຖວາຍພຣະທຽມ.

## ການຮັບຄວາມເຊື້ອເຊີນ (10:23-33)

ຖ້າຄົນບໍ່ເປັນຄຣິສຕຽນເຊີນຄຣິສຕຽນໄປກິນເຂົ້າບ້ານ ແລ້ວເອົາຊີ້ນທີ່ຖວາຍພຣະທຽມແລ້ວມາສູ່ກິນ, ຄຣິສຕຽນຄວນກິນອາຫານນັ້ນບໍ່? ໂປໂລອະທິບາຍວ່າ, "ເຮົາເຮັດສາຣະພັດໄດ້ ບໍ່ມີໃຜຫ້າມ" ແຕ່ບໍ່ແມ່ນທຸກສິ່ງທີ່ເຮັດໄດ້ນັ້ນເປັນປໂຍດ (10:23). ໂປໂລເຕືອນວ່າຄຣິສຕຽນເປັນຜູ້ທີ່ໄດ້ຮັບອິສຣະພາບແລ້ວ ແຕ່ຈົ່ງລະວັງໃນການໃຊ້ສິດເສຣີພາບນັ້ນເພາະວ່າອິສຣະພາບຂອງທ່ານອາດຈະເຮັດໃຫ້ຄົນອື່ນຊູນສະດຸດໃຈ.

ໂປໂລເຕືອນຄຣິສຕຽນຈົ່ງເປັນຜູ້ທີ່ເຫັນແກ່ຜົນ ປໂຍດຂອງຄົນອື່ນ (10:24). ເວລາທ່ານເປັນແຂກຖືກເຊີນຢ່າໄປຖາມວ່າຊີ້ນນັ້ນຊື້ມາຈາກໃສ; "ສິ່ງໃດທີ່ເຂົາຈັດໃຫ້ ກິນກໍກິນໄດ້" (10:25-27). ພຣະເຈົ້າຊົງສ້າງທຸກຢ່າງໄວ້ເພື່ອມະນຸດ; ທຸກສິ່ງທີ່ພຣະເຈົ້າຊົງສ້າງນັ້ນຖືວ່າດີໝົດ. ແຕ່ຖ້າເຈົ້າພາບປະກາດວ່າ "ເຊີນມາກິນຊີ້ນທີ່ຖວາຍຜີເດີ," ຄຣິສຕຽນກໍບໍ່ຄວນກິນເພາະຢ້ານຄົນກຳລັງເບິ່ງຈະຊູນສະດຸດ. (ອ່ານລາຍລະອຽດເພີ້ມເຕີມໃນພຣະທັມກິຈການ 15:29).

ບົດຮຽນນີ້ຕອບຄຳສົງສັຍຂອງທ່ານບໍ່? ທ່ານອາດຈະສົງສັຍເຣື່ອງອາຫານການກິນ ຫລືເຣື່ອງອື່ນໆ, ພຣະເຢຊູສາມາດໃຫ້ຄຳຕອບກັບຜູ້ທີ່ມີຄວາມສົງສັຍ. ພຣະອົງຈະບໍ່ປ່ອຍໃຫ້ພວກເຮົາດຳເນີນຊີວິດຢູ່ໃນຄວາມສົງສັຍອີກຕໍ່ໄປ, ແຕ່ຈະໃຫ້ມີຄວາມເຊື່ອໝັ້ນໃນພຣະທັມຄຳສອນ.

ຄຳຖາມ:

1. ເວລາທ່ານເກີດຄວາມສົງສັຍ, ທ່ານຕັດສິນໃຈແນວໃດ? ທ່ານໃຊ້ສິດເສຣີພາບຂອງທ່ານບໍ? ຫລືທ່ານຊອກຫາຄຳຕອບໃນພຣະຄັມພີ? ທ່ານພິຈາຣະນາເບິ່ງຜົນສະທ້ອນກັບຄົນອື່ນຈາກການຕັດສິນໃຈນັ້ນບໍ່? ທ່ານຖາມຕົວເອງສເມີບໍ່ວ່າສິ່ງໃດທີ່ທ່ານຄວນຫລືບໍ່ຄວນເຮັດ?

2. ທ່ານຄິດວ່າຄຳຖາມໃນຂໍ້ຜ່ານມານັ້ນຖືກກັບສະພາບຂອງທ່ານບໍ່? ຫລືວ່າທ່ານມີຄຳຕອບທີ່ດີກ່ວານັ້ນ? ຄຳຕອບຂອງທ່ານໄດ້ຜົນຕລອດໄປບໍ່?

3. ທ່ານຕັດສິນໃຈທຸກຢ່າງເພາະທ່ານມີສິດທີ່ຈະເຮັດຫຍັງກໍໄດ້ ຫລື ທ່ານຄິດຫາຄົນອື່ນທຸກໆຄັ້ງທີ່ທ່ານຈະຕັດສິນໃຈແນວໃດແນວນຶ່ງ?

# ບົດຮຽນທີ 8
# ການນະມັສການບອກເຖິງຕົວທ່ານແນວໃດ?

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> 1 ໂກຣິນໂທ 11:2-16
<u>ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:</u> 1 ໂກຣິນໂທ 11:2-16
<u>ຈຸດສຳຄັນຂອງບົດຮຽນນີ້:</u> ການປະພຶດຂອງຜູ້ນະມັສການຄວນຈະເປັນພະຍານທີ່ດີສຳລັບຄົນໃນສມັຍຂອງຜູ້ນັ້ນ.
<u>ຄຳຖາມເພື່ອການສຳຣວດ:</u> ຜູ້ນະມັສການຈະປະພຶດຕົນແນວໃດເພື່ອຈະໄດ້ເປັນພະຍານທີ່ດີໃຫ້ກັບຄົນໃນສມັຍຂອງພວກເຂົາ?
<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອອະທິບາຍຄຳສອນຂອງໂປໂລສຳລັບຜູ້ຍິງແລະຜູ້ຊາຍໃນເວລານະມັສການ ແລະເພື່ອຈະໄດ້ຮູ້ວິທີການເພື່ອນຳມາໃຊ້ໃນຄຣິສຕະຈັກຂອງພວກເຮົາ.

<u>ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:</u>

- ພຣະຄັມພີຄືຫລັກສຳຄັນສຳລັບຊີວິດແລະການຮັບໃຊ້.
- ເວົ້າເຣື່ອງຂ່າວປະເສີດກັບຄົນທັງຫລາຍ.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ໃຫ້ທຸກຄົນໃນຄອບຄົວຂອງພຣະເຈົ້າມີສ່ວນໃນການບໍຣິຫານແລະການຮັບໃຊ້.
- ເຫັນທຸກຄົນວ່າສຳຄັນເພາະພຣະເຈົ້າຊົງເປັນຜູ້ສ້າງມະນຸດ.

<u>ຄຳນຳ</u>

ແບບການນະມັສການເປັນເຣື່ອງທີ່ຄຣິສຕຽນໄດ້ຖົກຖຽງກັນມາທຸກຍຸກທຸກສມັຍ. ສິ່ງສຳຄັນທີ່ລືມບໍ່ໄດ້ຄື ການປະພຶດຕົວຂອງຜູ້ນະມັສການ, ທັງຊາຍແລະຍິງ, ຈະຕ້ອງເປັນພະຍານທີ່ດີສຳລັບຄົນທັງຫລາຍໃນຍຸກຂອງພວກເຮົາ. ການນະມັສການທີ່ແທ້ແມ່ນພຣະເຈົ້າເປັນຜູ້ເບິ່ງແລະຜູ້ນະມັສການເປັນຕົວສະແດງ. ສິດຍາພິບານ ແລະຜູ້ນຳນະມັສການບໍ່ແມ່ນຕົວສະແດງແຕ່ແມ່ນຜູ້ນຳພາ ຫລືຜູ້ສັ່ງສອນ. ພຣະເຈົ້າບໍ່ພຽງແຕ່ໃຫ້ຄະແນນສິດຍາພິບານເວລາເທສນາເທົ່ານັ້ນ, ພຣະອົງຊົງໃຫ້ຄະແນນຜູ້ນະມັສການດ້ວຍ. ຄຳແນະນຳເຣື່ອງການນະມັສການຂອງໂປໂລສຳລັບຄຣິສຕະຈັກທີ່ໂກຣິນໂທຍັງ ເປັນພຣະທັມຄຳສອນເຣື່ອງການນະມັສການສຳລັບພວກເຮົາໃນສມັຍນີ້.

<u>ການນະມັສການໃນພຣະຄັມພີ (11:2)</u>
ໂປໂລເລີ້ມພຣະທັມຕອນນີ້ດ້ວຍການຊົມເຊີຍຄຣິສຕຽນທີ່ໂກຣິນໂທ, ໂປໂລສະແດງຄວາມຍິນດີທີ່ພວກເຂົາໄດ້ລະນຶກເຖິງຜູ້ ຮັບໃຊ້, "ເຮົາຊົມເຊີຍເຈົ້າທັງຫລາຍເພາະພວກເຈົ້າລະນຶກເຖິງເຮົາໃນທຸກສິ່ງ." ທ່ານໄດ້ໝາຍເຖິງຄຳສັ່ງສອນທີ່ໄດ້ໃຫ້ ໄວ້ກັບພວກເຂົາ. ໂປໂລໄດ້ສ້າງໂບດທີ່ເມືອງໂກຣິນໃນຕອນທ່ານໄດ້ອອກປະກາດພຣະທັມຄັ້ງທີສອງ (ກິຈການ 18: 1-18). ໂປໂລອາດຈະເຄີຍຂຽນຈົດໝາຍຫາຄຣິສຕະຈັກແຫ່ງນີ້ກ່ອນການຂຽນພຣະທັມ 1 ໂກຣິນໂທ (ເບິ່ງ 1 ໂກຣິນ ໂທ 5:9). ຄຣິສຕຽນທີ່ໂກຣິນໄດ້ "ຕັ້ງໝັ້ນ" ໃນຄຳສັ່ງສອນແລະໄດ້ພາກັນປະຕິບັດຕາມ "ຄຳສັ່ງສອນ" ທຸກຢ່າງທີ່ໂປ ໂລໄດ້ສອນພວກເຂົາ.

ໂປໂລຊົມຊື່ນຍິນດີທີ່ໄດ້ເຫັນຄຣິສຕຽນໃນເມືອງໂກຣິນ ພາກັນຕັ້ງໝັ້ນແລະປະຕິບັດຕາມຄຳສັ່ງສອນ. ພຣະເຈົ້າຈະຊົມຊື່ນຍິນດີໃນພວກເຮົາເຊັ່ນກັນ ຖ້າພວກເຮົາຕັ້ງໝັ້ນໃນພຣະທັມຂອງພຣະອົງ. ພວກເຮົາຄວນມີການສຳຮວດເບິ່ງທຸກໆຢ່າງ ແລະເຮັດຕາມທຸກໆຢ່າງທີ່ພຣະເຈົ້າຕັດກັບພວກເຮົາ ໂດຍສເພາະໃນເວລານະມັສການ. ຄຳເທສນາທີ່ທ່ານໄດ້ຍິນອອກມາຈາກພຣະທັມຄັມພີບໍ່? ເພງທີ່ຮ້ອງໃນເວລານະມັສການເວົ້າເຖິງພຣະທັມບໍ່? ຄຳອະທິຖານຂອງພວກເຮົາຖືກຕາມນ້ຳພຣະທັຍບໍ່? ການຖວາຍຂອງພວກເຮົາຖືກຕາມຄຳສອນໃນພຣະຄັມພີບໍ່? ພວກເຮົາຕອບຮັບການນະມັສການຢ່າງສົມຄວນບໍ່? ຖ້າຄຣິສຕຽນທີ່ໂກຣິນສາມາດນະມັສການພຣະເຈົ້າຕາມແບບໃນພຣະຄັມພີ, ພວກເຮົາກໍຄວນຈະເຮັດໄດ້ເຊັ່ນກັນ.

## ເຫັນຄວາມສຳຄັນຂອງຜູ້ນະມັສການດ້ວຍກັນ (11:3)

ຄຳເວົ້າຂອງໂປໂລໃນຂໍ້ 3 ນີ້ມີຄວາມສຳຄັນຫລາຍສຳລັບການນະມັສການ ແລະການຮັບໃຊ້ທີ່ແທ້ຈິງ. "ແຕ່ເຮົາຢາກໃຫ້ທ່ານທັງຫລາຍເຂົ້າໃຈວ່າ ພຣະຄຣິດຊົງເປັນປະມຸກຂອງຜູ້ຊາຍທຸກຄົນ, ແລະຜູ້ຊາຍເປັນປະມຸກຂອງຜູ້ຍິງ, ແລະປະມຸກຂອງພຣະຄຣິດກໍຄືພຣະເຈົ້າ." ຄຳວ່າ "ປະມຸກ" ໝາຍຄວາມວ່າແນວໃດໃນທີ່ນີ້? ຫລາຍຄົນຖືວ່າການເປັນປະມຸກຄືການຢູ່ເໜືອຜູ້ອື່ນ. ແຕ່ສຳລັບຄົນໃນສມັຍນັ້ນ "ປະມຸກ" ບໍ່ໄດ້ໝາຍເຖິງການຢູ່ເໜືອຫລືຍິ່ງໃຫຍ່ກ່ວາ. ໂປໂລບໍ່ໄດ້ໝາຍຄວາມວ່າຜູ້ຍິງຕ່ຳຕ້ອຍກວ່າຜູ້ຊາຍໃນເວລານະມັສການ; ເພາະໃນຄາລາເຕັຽ 3:28 ໂປໂລກ່າວວ່າ "ຈະບໍ່ເປັນຊາດຢິວຫລືຄົນຕ່າງຊາດ, ຈະບໍ່ເປັນຂ້ອຍຂ້າຫລືເປັນອິສຣະ, ຈະບໍ່ເປັນຊາຍຫລືຍິງເພາະເຈົ້າທັງຫລາຍເປັນອັນນຶ່ງອັນດຽວກັນໃນພຣະຄຣິດຄື ພຣະເຢຊູ." ໂປໂລບອກວ່າຊາຍແລະຍິງມີຖານະສເມີກັນແລະຂາດກັນບໍ່ໄດ້ (1 ກຣທ 11:11).

ຂໍ້ຄວາມທີ່ວ່າ "ພຣະປະມຸກຂອງພຣະຄຣິດກໍຄືພຣະເຈົ້າ" ບໍ່ໄດ້ໝາຍຄວາມວ່າພຣະບຸດຕ້ອຍຕ່ຳກ່ວາພຣະບິດາເພາະພຣະທັມໂຢຮັນ 1:1 ບອກວ່າ "ເມື່ອຕົ້ນເດີມນັ້ນພຣະທັມຊົງເປັນຢູ່ແລ້ວ ພຣະທັມນັ້ນຊົງສະຖິດຢູ່ກັບພຣະເຈົ້າ ພຣະທັມນັ້ນແຫລະ ຊົງເປັນພຣະເຈົ້າ." ພຣະສັນຍາໃໝ່ສອນວ່າພຣະເຢຊູຄຣິດ ມີຖານະເທົ່າທຽມກັນກັບພຣະບິດາ.

ນັກສາສນາຫລາຍຄົນຄິດວ່າ "ຜູ້ຊາຍເປັນປະມຸກຂອງຜູ້ຍິງ" ອາດຈະໝາຍເຖິງການເປັນຜູ້ນຳຫລາຍກ່ວາຄວາມໝາຍອື່ນໆ. ພຣະທັມສອນໄວ້ວ່າຜູ້ຊາຍຈະຕ້ອງເປັນຜູ້ນຳດ້ານຈິດວິນຍານສຳລັບຜູ້ຍິງ. ໃນພຣະທັມ ຂໍ້ 11:5, "ແຕ່ຜູ້ຍິງທີ່ກຳລັງໄຫວ້ວອນຫລືປະກາດພຣະທັມໂດຍບໍ່ໃຊ້ຜ້າປົກຫົວ..." ໂປໂລເຕືອນເຣື່ອງຜູ້ຍິງທີ່ນຳພາການນະມັສການ ແລະບໍ່ໄດ້ເວົ້າເຖິງຖານະຂອງຊາຍແລະຍິງ. ສນັ້ນໃນການນະມັສການພວກເຮົາຈະຕ້ອງເຫັນວ່າທຸກຄົນສຳຄັນເທົ່າກັນ; ພວກເຮົາບໍ່ຄວນຈະມີການແບ່ງແຍກຜົວພັນ ຫລືວ່າແບ່ງແຍກເພດໃນເວລານະມັສການ. ຖ້າພວກເຮົາຈະນະມັສການໃຫ້ຖືກຕ້ອງຕາມຄຳສອນໃນພຣະທັມຄັມພີ, ພວກເຮົາທຸກໆຄົນຈະຕ້ອງນະມັສການຮ່ວມກັນ. ເມື່ອພວກເຮົາໄດ້ເຂົ້າເຖິງພຣະເຈົ້າ, ພວກເຮົາກໍຈະໄດ້ເຂົ້າໃກ້ຊິ່ງກັນແລະກັນ. ເວລາໃດພວກເຮົາແບ່ງແຍກກັນ, ການເປັນພະຍານແລະການຮັບໃຊ້ຂອງພວກເຮົາຈະບໍ່ເກີດຜົນເທົ່າທີ່ຄວນ.

## ຢ່າລືມພວກທີ່ກຳລັງເບິ່ງທ່ານ (11:4-15)

ບັນຫາເຣື່ອງຈະປົກຫົວຫລືບໍ່ເວລາໄຫວ້ວອນຫລືປະກາດພຣະທັມນັ້ນອາດຈະບໍ່ມີຄວາມໝາຍຫຍັງສຳລັບພວກເຮົາຄະນະບັບຕິສໃນສມັຍນີ້; ແຕ່ຄຳຕອບທີ່ໂປໂລໄດ້ໃຫ້ໄວ້ໃນພຣະທັມຕອນນີ້ຍັງເປັນຄຳຕອບທີ່ໃຊ້ໄດ້ສຳລັບຄຣິສຕຽນທັງຫລາຍ. ການປະກາດພຣະທັມໝາຍເຖິງການເທສນາ. ໂປໂລບອກວ່າຖ້າຜູ້ຊາຍຄົນໃດປົກຫົວເວລາໄຫວ້ວອນຫລືປະກາດພຣະທັມໃນກາງຊຸມຊົນ, ຜູ້ຊາຍຄົນນັ້ນ "ກໍເຮັດເສັຽກຽດແກ່ປະມຸກຂອງຕົນ." ເພາະຜູ້ຊາຍໄດ້ຖືກສ້າງຂຶ້ນມາຕາມແບບພຣະລັກສນະແລະພຣະກຽດຂອງພຣະເຈົ້າ (11:7). ຜູ້ຊາຍທີ່ໄວ້ຜົມຍາວກໍເຮັດໃຫ້ຕົນເສັຽກຽດ (11:14).

ໃນຂະນະດຽວກັນ, ຜູ້ຍິງຄົນໃດທີ່ບໍ່ປົກຫົວເວລາໄຫວ້ວອນຫລືປະກາດພຣະທັມ, ຜູ້ຍິງຄົນນັ້ນ "ກໍເຮັດເສັຽກຽດແກ່ປະມຸກຂອງຕົນ" ເໝືອນກັບວ່າຕົນໄດ້ແຖຫົວແລ້ວ (11:5). ການແຖຫົວເປັນການເສັຽກຽດແກ່ຕົນ. ຕາມປະເພນີແລ້ວຜູ້ຍິງຈະຕ້ອງປົກຫົວດ້ວຍຜ້າເວລາອອກໄປໃນທີ່ຊຸມຊົນ. ຜົວມີສິດຢ່າຮ້າງເມັຽຜູ້ທີ່ບໍ່ປົກຫົວເວລາອອກໄປໃນທີ່ຊຸມຊົນ ແລະຜູ້ຊາຍມີສິດຮຽກເອົາຄ່າສິນສອດຄືນໄດ້. ສນັ້ນໂປໂລຈຶ່ງເຫັນວ່າການໃຊ້ຜ້າປົກຫົວໃນເວລານະມັສການນີ້ສຳຄັນຫລາຍ. ການທີ່ຜູ້ຍິງເທສນາໂດຍບໍ່ປົກຫົວນັ້ນ, ເປັນການເຮັດໃຫ້ຜົວຂອງນາງເສັຽກຽດ; ຖ້ານາງແຖຫົວເລີຍກໍຄົງຈະດີກວ່າ (11:6). ການແຖຫົວແມ່ນການເສັຽກຽດທີ່ສຸດໃນສມັຍນັ້ນ; ຜູ້ຍິງຂ້າທາດ, ໂສເພນີ, ແລະຜູ້ຍິງທີ່ນອກໃຈຜົວຈະຕ້ອງຖືກແຖຫົວທຸກຄົນ. ຜູ້ຍິງຈະຕ້ອງປົກຫົວເວລາເຂົ້ານຳພາການໄຫວ້ວອນຫລືການເທສນາ. ການປະພຶດເຊັ່ນນີ້ເປັນການຮັກສາ "ເຄື່ອງໝາຍ ແຫ່ງອຳນາດ" ທີ່ຫົວຂອງນາງ (11:10).

ສນັ້ນພວກເຮົາຄວນລະມັດລະວັງເວລານະມັສການ; ເພາະການນະມັສການຂອງພວກເຮົາອາດຈະກະທົບກະເທືອນການນະມັສການຂອງຄົນອື່ນໆ ຫລືຄວາມເຂົ້າໃຈຂອງຜູ້ທີ່ກຳລັງເບິ່ງເຮົາຢູ່. ພຣະເຈົ້າເບິ່ງພວກເຮົາເວລາພວກເຮົານະມັສການ; ຄົນອື່ນໆກໍເບິ່ງເຮົາເຊັ່ນດຽວກັນ.

<u>ຢ່າໃຫ້ມີການແບ່ງແຍກ (11:16)</u>

ໂປໂລສລຸບຄຳສອນໃນຕອນນີ້ວ່າ, "ແຕ່ຖ້າຜູ້ໃດຈະຖຽງໃນຂໍ້ນີ້ ຝ່າຍເຮົາແລະໝູ່ຄຣິສຕະຈັກຂອງພຣະເຈົ້າ ບໍ່ຮັບເອົາທັມນຽມຖຽງກັນຢ່າງນັ້ນ." ທ່ານເວົ້າເຊັ່ນນັ້ນກໍເພາະວ່າໃນຄຣິສຕະຈັກທີ່ເມືອງໂກຣິນຕອນນັ້ນມີການຖົກຖຽງກັນຢ່າງຫລວງຫລາຍຈົນເຮັດໃຫ້ມີການແບ່ງແຍກກັນ. ການໂຕ້ຖຽງກັນເຣື່ອງແບບນະມັສການກໍຍັງມີຢູ່ໃນປັດຈຸບັນ. ບາງກຸ່ມມັກການນະມັສການແບບມູນເດີມ ແລະອີກກຸ່ມນຶ່ງມັກການນະມັສການແບບທັນສມັຍ. ບາງຄົນມັກຟັງການເທສນາແບບເປັນຂໍ້ໆໄປຕາມພຣະຄັມພີ; ບາງຄົນມັກຟັງການເທສນາແບບເປັນຫົວຂໍ້. ບາງກຸ່ມມັກໃຊ້ເຄື່ອງດົນຕຣີ ແລະ ອີກກຸ່ມນຶ່ງກໍບໍ່ມັກໃຊ້ເຄື່ອງຫຍັງເລີຍ. ໂປໂລເຕືອນບໍ່ໃຫ້ຜິດຖຽງກັນເຣື່ອງການນະມັສການເພາະຈະເຮັດໃຫ້ພຣະເຈົ້າ ເສັຽພຣະທັຍພ້ອມຈະເຮັດໃຫ້ເສັຽຜົນໃນການເປັນພະຍານກັບຊາວໂລກທີ່ກຳລັງຈ້ອງຕາເບິ່ງພວກເຮົາຢູ່.

<u>ຄຳຖາມ:</u>

1. ພວກເຮົາຖືເອົາພຣະທັມຄັມພີເປັນຫລັກສຳຄັນສຳລັບຊີວິດແລະການຮັບໃຊ້. ຈົ່ງສຳຣວດເບິ່ງວ່າການນະມັສການໃນຄຣິສຕະຈັກຂອງທ່ານຖືກຕ້ອງຕາມພຣະຄັມພີບໍ່. ມີສິ່ງໃດທີ່ຖືກຕ້ອງ? ມີສິ່ງໃດທີ່ທ່ານຍັງມີຄຳຖາມຢູ່? ທ່ານໃຊ້ຫລັກການໃນພຣະທັມເປັນເຄື່ອງສຳຣວດການນະມັສການຂອງທ່ານເອງບໍ່?

2. ພວກເຮົາເຫັນວ່າທຸກຄົນສຳຄັນເພາະທຸກຄົນໄດ້ຖືກສາງຂຶ້ນມາຕາມພຣະລັກສນະຂອງພຣະເຈົ້າ. ມີຄົນກຸ່ມໃດບໍ່ທີ່ທ່ານບໍ່ປະສົງໃຫ້ມາຮ່ວມໃນການນະມັສການທີ່ຄຣິສຕະຈັກຂອງທ່ານ? ທ່ານຈະເຮັດແນວໃດເພື່ອໃຫ້ຄົນກຸ່ມນັ້ນມາຮ່ວມໄດ້?

3. ພວກເຮົາຢາກເຫັນທຸກຄົນໃນຄອບຄົວຂອງພຣະເຈົ້າມີສ່ວນໃນການບໍຣິຫານແລະການຮັບໃຊ້. ຄົນທຸກກຸ່ມມີສ່ວນເຣື່ອງການນຳພາການນະມັສການໃນຄຣິສຕະຈັກຂອງທ່ານບໍ່? ອາຍຸ, ເພດ, ແລະລຳດັບຊີວິດ? ມີຫຍັງແດ່ທີ່ທ່ານສາມາດເຮັດໄດ້ເພື່ອໃຫ້ມີຄວາມເປັນນ້ຳນຶ່ງໃຈດຽວກັນໃນການອະທິຖານ?

4. ພວກເຮົາພຍາຍາມທີ່ຈະສ້າງຄວາມເຊື່ອໃຫ້ສົມບຸນແລະເຂັ້ມແຂງ. ການແບ່ງແຍກສາມາດທຳລາຍຈິດວິນຍານ

ແຫ່ງການນະມັສການ. ໃນຄຣິສຕະຈັກຂອງທ່ານມີການແບ່ງແຍກກັນບໍ່? ມີໃຜບໍ່ທີ່ທ່ານບໍ່ມັກຢູ່ໃນໂບດຂອງທ່ານ? ມີຫຍັງແດ່ທີ່ທ່ານສາມາດເຮັດໄດ້ເພື່ອເສີມສ້າງຄວາມສາມັກຄີໃນກຸ່ມຂອງທ່ານ?

5. ພວກເຮົາຢາກເວົ້າເຣື່ອງຂ່າວປະເສີດໃຫ້ທຸກໆຄົນຟັງ. ເວລາຄົນທີ່ບໍ່ຮູ້ພຣະເຈົ້າໄດ້ເຫັນການນະມັສການໃນຄຣິສຕະຈັກຂອງທ່ານ, ພວກເຂົາມີຄວາມຄິດເຫັນແນວໃດ? ຜູ້ນຳຂອງທ່ານໄດ້ຈັດຣະບຽບການນະມັສການໂດຍຄິດເຫັນຄົນທີ່ຍັງບໍ່ເຊື່ອຫລືບໍ່? ມີຫຍັງແດ່ທີ່ພວກທ່ານສາມາດເຮັດໄດ້ເຣື່ອງການນະມັສການເພື່ອຈະດຶງດູດຄົນທີ່ຍັງບໍ່ເຊື່ອໃຫ້ເຂົ້າມາຫາພຣະເຈົ້າ?

# ບົດຮຽນທີ 9
# ເຣື່ອງສິນມະຫາສນິດ

<u>ຂໍ້ພຣະຄັມພີສໍາລັບບົດຮຽນນີ້:</u> 1 ໂກຣິນໂທ 11:17-34
<u>ຂໍ້ພຣະຄັມພີສໍາລັບເບື້ອງຫຼັງ:</u> 1 ໂກຣິນໂທ 11:17-34
<u>ຈຸດສໍາຄັນຂອງບົດຮຽນນີ້:</u> ຄຣິສຕຽນຈະຕ້ອງສເລີມສລອງສິນມະຫາສນິດດ້ວຍຄວາມໂຄຣົບ ແລະຄວາມສາມັກຄີກັບຄຣິສຕຽນຄົນອື່ນໆ ເພາະເປັນໂອກາດເພື່ອການລະນຶກເຖິງພຣະຄຣິດຜູ້ທີ່ໄດ້ຖວາຍພຣະຊົນຂອງພຣະອົງເອງເພື່ອພວກເຂົາທັງຫລາຍ.
<u>ຄໍາຖາມເພື່ອການສໍາຣວດ:</u> ການຖືສິນມະຫາສນິດທີ່ແທ້ມີລັກສນະແນວໃດ?
<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອສໍາຣວດເບິ່ງຕົວຂອງທ່ານເອງໃນການຖືສິນມະຫາສນິດ ແລະເພື່ອຈະໄດ້ແກ້ໄຂໃຫ້ຖືກຕ້ອງຕາມຄໍາສັ່ງສອນຂອງໂປໂລໃນບົດຮຽນນີ້.

<u>ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:</u>

- ພຣະຄັມພີຄືຫລັກສໍາຄັນສໍາລັບຊີວິດແລະການຮັບໃຊ້.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ເຫັນທຸກຄົນວ່າສໍາຄັນເພາະພຣະເຈົ້າຊົງເປັນຜູ້ສ້າງມະນຸດ.

<u>ຄໍານໍາ</u>

ພິທີສິນມະຫາສນິດເປັນຈຸດສູນກາງຂອງການນະມັສການສໍາລັບຄຣິສຕຽນ. ການສລອງທີ່ຖືກຕ້ອງຈະຊ່ວຍໃຫ້ເຮົາເປັນອັນນຶ່ງອັນດຽວກັນໃນພຣະຄຣິດ, ໃຫ້ເຮົາໄດ້ຖວາຍພຣະກຽດແດ່ພຣະເຈົ້າ, ໃຫ້ເຮົາໄດ້ເປັນພະຍານໃຫ້ກັບຊາວໂລກ, ແລະໃຫ້ພວກເຮົາໄດ້ສໍາຣວດຕົນເອງຝ່າຍຈິດວິນຍານ. ສິນມະຫາສນິດບໍ່ແມ່ນເຣື່ອງເຂົ້າຈີ່ແລະນໍ້າອະງຸ່ນ, ແຕ່ພຣະເຢຊູຜູ້ຊົງສະຖາປະນາພິທີລະນຶກນີ້ເປັນຜູ້ສັ່ງສອນວິທີສລອງໃຫ້ພວກເຮົາ.

<u>ເຂົ້າຮ່ວມໂຕະດ້ວຍຄວາມສາມັກຄີ (11:17-22)</u>
ໂປໂລເຣີ່ມບົດຮຽນພາກນີ້ໂດຍຄໍາຕ້ອງຕິວ່າ "ການປະຊຸມກັນຂອງພວກເຈົ້າບໍ່ໄດ້ຈະເຣີນຂຶ້ນ ແຕ່ໄດ້ຜົນໜ້ອຍລົງ" (11: 17). ໂປໂລປ່ຽນຈາກເຣື່ອງຜູ້ນໍາການນະມັສການມາເຖິງເຣື່ອງການປະພຶດໃນເວລານະມັສການ. ບັນຫາເຣື່ອງການ ນະມັສການທີ່ເມືອງໂກຣິນແມ່ນການບໍ່ສາມັກຄີກັນ. ຄໍາຕອບສໍາລັບບັນຫານັ້ນແມ່ນການຖືສິນມະຫາສນິດ. ໂປໂລໄດ້ ຍິນເຣື່ອງການແຕກເປັນພັກເປັນພວກຂອງຄຣິສຕະຈັກໃນເວລາເຂົ້າຮ່ວມໂຕະ; ຄົນຮັ່ງມີພາກັນກິນອາຫານຂອງພວກ ຕົນໂດຍບໍ່ ໄດ້ຄິດເຫັນຄົນຍາກຈົນທີ່ບໍ່ມີອາຫານຈະກິນ (11:22). ໂປໂລເຕືອນພວກເຂົາວ່າ "ພວກເຈົ້າດູໝິ່ນຄຣິສຕະຈັກຂອງພຣະເຈົ້າ ແລະເຮັດໃຫ້ຄົນທີ່ຂັດສົນໄດ້ຮັບຄວາມອັບອາຍ" (11:22). ຄໍາຕອບສໍາລັບບັນຫານັ້ນແມ່ນການຖື ສິນມະຫາສນິດ. ການຖືສິນມະຫາສນິດສະແດງເຖິງຄວາມສາມັກຄີ. ພຣະເຢຊູໄດ້ສລອງສິນມະຫາສນິດຄັ້ງທໍາອິດກັບ ສາວົກຂອງພຣະອົງ. ພຣະອົງໄດ້ເຂົ້າຮ່ວມໂຕະບ່ອນດຽວກັບພວກເຂົາ. ຄະນະບັບຕິດສລອງສິນມະຫາສນິດຕາມແບບ ຢ່າງທີ່ພຣະເຢຊູໄດ້ສລອງກັບພວກສາວົກ. ພວກເຮົາຮັບເອົາອາຫານຈາກໂຕະດຽວກັນ ເພາະພວກເຮົາແມ່ນຄອບຄົວ ດຽວກັນ. ພວກເຮົາຕັ້ງໂຕະຢູ່ພື້ນ ເພາະອາຫານນັ້ນເປັນຂອງຄົນທັງໝົດ. ພວກເຮົາບໍຣິການຊຶ່ງກັນແລະກັນເໝືອນ ພວກສາວົກຂອງພຣະເຢຊູໄດ້ເຮັດ ເພາະພວກເຮົາແຕ່ລະຄົນແມ່ນປະໂຣຫິດແລະຜູ້ຮັບໃຊ້ດ້ວຍ

ກັນ.

ກ່ອນທ່ານຈະຮັບສິນມະຫາສນິດເທື່ອໜ້າຢ່າລືມອະທິຖານເພື່ອພີ່ນ້ອງຄຣິສຕຽນຂອງທ່ານ. ອະທິຖານໃຫ້ພຣະເຈົ້າຍົກເອົາຄວາມແຕກແຍກທີ່ມີຢູ່ໃນຄຣິສຕະຈັກອອກໄປ. ຄືນດີກັບຄຣິສຕຽນທີ່ເຄີຍຜິດຖຽງກັນ. ຮັບສິນມະຫາສນິດຮ່ວມກັນດ້ວຍຄວາມສາມັກຄີ ເພື່ອພຣະອົງຜູ້ເປັນເຈົ້າຂອງອາຫານນັ້ນຈະໄດ້ພໍພຣະທັຍ.

## ຖວາຍກຽດແດ່ພຣະເຢຊູທີ່ໂຕະຂອງພຣະອົງ (11:23-25)

ໂປໂລໃຫ້ລາຍລະອຽດເຣື່ອງສິນມະຫາສນິດວ່າ "ເຣື່ອງທີ່ເຮົາໄດ້ມອບໃຫ້ເຈົ້າທັງຫລາຍນັ້ນ ເຮົາໄດ້ຮັບຈາກອົງພຣະຜູ້ເປັນເຈົ້າ" (11:23). ຄໍາຖາມມີຢູ່ວ່າ, ໂປໂລໄດ້ຮຽນຮູ້ເຣື່ອງສິນມະຫາສນິດຈາກພວກສາວົກທີ່ໄດ້ຮ່ວມໂຕະກັບພຣະເຢຊູ ຫລືວ່າພຣະເຢຊູໄດ້ເປີດເຜີຍໃຫ້ເຂົາຮູ້ເປັນທາງສ່ວນຕົວ. ແຕ່ພວກເຮົາຮູ້ແນ່ນອນວ່າພຣະເຢຊູໄດ້ຊົງເປີດເຜີຍຫລາຍໆຢ່າງຜ່ານໂປໂລ ເພື່ອໄພ່ພົນຂອງພຣະອົງ.

ພຣະທັມ 1 ໂກຣິນໂທ ຊຶ່ງໂປໂລເປັນຄົນຂຽນ ເປັນປຶ້ມຫົວທໍາອິດທີ່ບັລຍາຍເຣື່ອງສິນມະຫາສນິດໂດຍລະອຽດ ແລະມີພຣະຄໍາຂອງພຣະເຢຊູ ຄວາມຕໍ່ຄວາມ. ພຣະອົງຊົງກ່າວວ່າ "ນີ້ແຫລະ, ຄືກາຍຂອງເຮົາຊຶ່ງໃຫ້ສໍາລັບພວກເຈົ້າ ຈົ່ງເຮັດຢ່າງນີ້ໃຫ້ເປັນທີ່ລະນຶກເຖິງເຮົາ" (11:24). ຫລັງຈາກອາຫານແລ້ວພຣະອົງຊົງກ່າວວ່າ "ຈອກນີ້ຄືຄໍາສັນຍາໃໝ່ໂດຍເລືອດຂອງເຮົາ ເມື່ອເຈົ້າດື່ມຈອກນີ້ເວລາໃດ ຈົ່ງດື່ມເປັນທີ່ລະນຶກເຖິງເຮົາ" (11:25). ພຣະທັມສອງຂໍ້ນີ້ມີຄວາມໝາຍທີ່ສຸດສໍາລັບຄຣິສຕຽນ ແລະສົມຄວນທີ່ຈະຕ້ອງໄດ້ຮັບການພິຈາຣະນາເພີ້ມເຕີມ.

ພຣະເຢຊູຊົງໃຊ້ຄໍາສົມມຸດໃນການສັ່ງສອນຂອງພຣະອົງຢູ່ສເມີ; ເມື່ອພຣະອົງບອກວ່າເຂົ້າຈີ່ຄືກາຍຂອງພຣະອົງ,ພວກເຮົາຮູ້ວ່າພຣະເຢຊູໃຊ້ຄໍາສົມມຸດ. ພຣະອົງເຄີຍເວົ້າຫລາຍເທື່ອວ່າ "ເຮົານີ້ແຫລະ, ເປັນປະຕູຂອງແກະທັງຫລາຍ" (ໂຢຮັນ 10:7); "ເຮົານີ້ແຫລະ, ເປັນຜູ້ລ້ຽງແກະທີ່ດີ" (ໂຢຮັນ 10:11); "ເຮົາເປັນເຄືອອະງຸ່ນອັນແທ້ຈິງ" (ໂຢຮັນ 15:1). ສນັ້ນພວກເຮົາພໍສລຸບໄດ້ວ່າພຣະເຢຊູບໍ່ໄດ້ໝາຍຄວາມວ່າເຂົ້າຈີ່ຄືເນື້ອກາຍຂອງພຣະອົງ. ມີພວກຜູ້ເຊື່ອໃນບາງຄະນະເຂົ້າໃຈວ່າ ເຂົາເຈົ້າໄດ້ກິນເນື້ອກາຍຂອງພຣະຄຣິດ ເວລາເຂົາເຈົ້າກິນເຂົ້າຈີ່ໃນພິທີສິນມະຫາສນິດ. ອີງຕາມຄໍາສອນໃນຕອນນີ້ພວກເຮົາຮູ້ວ່າການສລອງສິນມະຫາສນິດເປັນ **ພິທີລະນຶກ** ເຖິງພຣະເຢຊູ ໂດຍສເພາະການຍອມສະລະພຣະຊົນທີ່ເທິງໄມ້ກາງແຂນເພື່ອໄຖ່ຄວາມຜິດບາບຂອງພວກເຮົາ. ດັ່ງທີ່ພຣະອົງທີ່ກ່າວເຖິງໃນຂໍ້ 11:25 ວ່າ "ຈອກນີ້ຄືຄໍາສັນຍາໃໝ່ໂດຍເລືອດຂອງເຮົາ." ພຣະອົງໄດ້ຊົງສະລະເລືອດຂອງພຣະອົງເອງເພື່ອມະນຸດ. ຄຣິສຕຽນຄວນຈະລະນຶກເຖິງສິ່ງເຫລົ່ານີ້ໃນຊີວິດຂອງພວກເຂົາຢູ່ສເມີ.

## ເປັນພະຍານໃຫ້ກັບຊາວໂລກ (11:26)

ສິນມະຫາສນິດເປັນພິທີສໍາຄັນໃນການນະມັສການສໍາລັບຄຣິສຕຽນເພາະມັນເປັນເວລາສໍາລັບເຕົ້າໂຮມຄຣິສຕຽນໃຫ້ເປັນອັນນຶ່ງອັນດຽວກັນ ແລະເປັນເວລາເພື່ອລະນຶກເຖິງພຣະບຸດຂອງພຣະເຈົ້າ. ນອກນັ້ນພິທີສິນມະຫາສນິດຍັງເປັນເວລາສໍາລັບການເປັນພະຍານເຣື່ອງຄວາມຮັກຂອງພຣະເຈົ້າ; ໂປໂລເວົ້າໃນຕອນນຶ່ງວ່າ "ເມື່ອເຈົ້າທັງຫລາຍກິນເຂົ້າຈີ່ນີ້ ແລະດື່ມຈາກຈອກນີ້ເວລາໃດ ເຈົ້າກໍປະກາດການວາຍພຣະຊົນຂອງອົງພຣະຜູ້ເປັນເຈົ້າ ຈົນກວ່າພຣະອົງຈະສະເດັດມາ" (11:26). ເວລາໃດທ່ານຮັບສິນມະຫາສນິດທ່ານກໍໄດ້ບອກຊາວໂລກທັງຫລາຍວ່າທ່ານມີຄວາມເຊື່ອໃນພຣະເຢຊູຄຣິດ. ຊາວໂລກທັງຫລາຍຕ້ອງການຮູ້ຄວາມຈິງເຣື່ອງພຣະເຢຊູ. ພຣະເຢຊູໄດ້ສະລະພຣະຊົນເພື່ອຊາວໂລກທັງໝົດ; ພວກເຮົາຊາວຄຣິສຕຽນຈະຕ້ອງບອກທຸກຄົນໃຫ້ຮູ້ (11:26).

## ສຳຣວດເບິ່ງຈິດວິນຍານຂອງທ່ານ (11:27-34)

ການເຂົ້າຮ່ວມຮັບສິນມະຫາສນິດເປັນເວລາສຳລັບການສຳຣວດຕົນເອງ. ໂປໂລເຕືອນວ່າ "ຖ້າຜູ້ໃດກິນເຂົ້າຈີ່ ຫລືດື່ມຈາກຈອກຂອງອົງພຣະຜູ້ເປັນເຈົ້າຢ່າງບໍ່ສົມຄວນ ຜູ້ນັ້ນກໍຜິດຕໍ່ພຣະກາຍ ແລະຕໍ່ພຣະໂລຫິດຂອງອົງພຣະຜູ້ເປັນເຈົ້າ" (11:27). "ຢ່າງບໍ່ສົມຄວນ" ໃນທີ່ນີ້ໝາຍເຖິງຄວາມໂລບມາກ, ການເມົາເຫລົ້າ, ແລະການແຕກແຍກກັນ ດັ່ງທີ່ໂປໂລໄດ້ປະນາມມາກ່ອນແລ້ວ (11:21-22).

ພວກເຮົາຈະຮູ້ໄດ້ຢ່າງໃດວ່າເຮົາຕຽມພ້ອມທີ່ຈະເຂົ້າຮ່ວມໂຕະກັບພຣະເຈົ້າ? "ຂໍໃຫ້ທຸກຄົນພິຈາຣະນາເບິ່ງໃຈຂອງຕົນເອງ ແລ້ວຈຶ່ງກິນເຂົ້າຈີ່ແລະດື່ມນ້ຳຈາກຈອກນີ້" (11:28). ເພາະສິນມະຫາສນິດເປັນພິທີສຳຄັນ, ຜູ້ໃດບໍ່ພິຈາຣະນາເບິ່ງຄວາມບໍຣິສຸດຂອງຕົນເອງກ່ອນຈະຮັບສິນ ຜູ້ນັ້ນກໍນຳການພິພາກສາມາສູ່ຕົວຂອງເຂົາເອງ (11:29). ຫລາຍໆຄົນໃນຄຣິສຕະຈັກເມືອງໂກຣິນ ໄດ້ເກີດອ່ອນແຮງ, ລົ້ມປ່ວຍ, ແລະຕາຍໄປເພາະພວກເຂົາໄດ້ເຂົ້າຮ່ວມໂຕະຢ່າງບໍ່ສົມຄວນ (11:30). ເຫດການເລົ່ານີ້ອາດຈະເກີດຂຶ້ນໄດ້ກັບທຸກໆຄຣິຕະຈັກ. ໂປໂລໄດ້ເຕືອນໄວ້ວ່າ "ຖ້າເຮົາທັງຫລາຍພິຈາຣະນາເບິ່ງໃຈຂອງຕົນ ພວກເຮົາຈະບໍ່ຖືກການຊົງພິພາກສາ (11:31).

ຈົ່ງຕຽມຕົວໃຫ້ເໝາະສົມກ່ອນທີ່ທ່ານຈະເຂົ້າຮ່ວມໂຕະກັບພຣະຜູ້ເປັນເຈົ້າ. ທຸກຄົນໃນຄຣິສຕະຈັກຖືກຕ້ອງປອງດອງກັນບໍ່? ທ່ານຖືກຕ້ອງກັບທຸກຄົນໃນຄອບຄົວບໍ່? ທ່ານມີຄວາມຮູ້ບຸນຄຸນທີ່ພຣະເຢຊູໄດ້ຕາຍເພື່ອທ່ານບໍ່? ທ່ານເປັນພະຍານທີ່ດີໃຫ້ພຣະເຈົ້າບໍ່? ທ່ານໄດ້ສາຣະພາບຄວາມຜິດບາບຂອງທ່ານແລ້ວບໍ່? ພິທີສິນມະຫາສນິດເປັນພິທີເພື່ອພິສູດຈິດວິນຍານຂອງພວກເຮົາ. ຈິດວິນຍານຂອງທ່ານຢູ່ໃນສະພາບໃດ?

ຄຳຖາມ:

1. ເປັນຫຍັງພະຍານານຈຶ່ງພະຍາຍາມສ້າງຄວາມແຕກແຍກໃນກຸ່ມຂອງຜູ້ເຊື່ອ? ຄຣິສຕະຈັກຈະເຮັດແນວໃດເພື່ອໃຫ້ພິທີສິນມະຫາສນິດເປັນເວລາເພື່ອສ້າງຄວາມເປັນນ້ຳນຶ່ງໃຈດຽວກັນ ແລະເປັນເວລາສຳລັບການສາມັກຄີທັມ?

2. ພິທີສິນມະຫາສນິດສາມາດກາຍເປັນປະເພນີຂອງການນະມັສການໃນຄຣິສຕະຈັກ. ທ່ານຈະເຮັດແນວໃດເພື່ອໃຫ້ພິທີນີ້ເປັນເວລາເພື່ອຖວາຍກຽດພຣະຄຣິດຢ່າງແທ້ຈິງ? ທ່ານຈະນະມັສການພຣະເຈົ້າເປັນທາງສ່ວນຕົວໄດ້ຢ່າງໃດ ເວລາທ່ານຮ່ວມໃນພິທີຮັບສິນ?
3. ຄົນທີ່ບໍ່ເຄີຍເຂົ້າໂບດອາດຈະບໍ່ຮູ້ຄວາມໝາຍຂອງການຖືສິນມະຫາສນິດ. ຄຣິສຕະຈັກຈະອະທິບາຍໃຫ້ພວກເຂົາເຈົ້າໄດ້ເຂົ້າໃຈໄດ້ແນວໃດເວລາທ່ານປະກອບພິທີ? ທ່ານຈະອະທິບາຍຄວາມສຳຄັນຂອງສິນມະຫາສນິດນີ້ໃຫ້ໝູ່ເພື່ອນຂອງທ່ານຟັງຢ່າງໃດ?

4. ທ່ານຄິດວ່າຄົນສ່ວນຫລາຍໃນຄຣິສຕະຈັກຈະພິຈາຣະນາຕົວເອງຫລືບໍ່ ກ່ອນທີ່ພວກເຂົາເຈົ້າຈະຮັບສິນ? ຖ້າພວກເຂົາບໍ່ພິຈາຣະນາ, ທ່ານຄິດວ່າພວກເຂົາມີເຫດຜົນແນວໃດ? ທ່ານຈະຊ່ວຍຄຣິສຕະຈັກຂອງທ່ານໃຫ້ຕຽມຕົວໄດ້ຢ່າງໃດ? ທ່ານເອງໄດ້ຕຽມຕົວວິທີໃດ?

# ບົດຮຽນທີ 10
# ເຣື່ອງຂອງພຣະຣາຊທານ

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> 1 ໂກຣິນໂທ 12:4-31
<u>ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:</u> 1 ໂກຣິນໂທ 12:1-31
<u>ຈຸດສຳຄັນຂອງບົດຮຽນນີ້:</u> ພຣະເຈົ້າຊົງໂຜດປະທານໂດຍທາງພຣະວິນຍານ ຂອງພຣະຣາຊທານຕ່າງໆສຳລັບຄຣິສຕຽນແຕ່ລະຄົນເພື່ອປໂຍດຮ່ວມກັນ.
<u>ຄຳຖາມເພື່ອການສຳຣວດ:</u> ທ່ານໄດ້ໃຊ້ຂອງພຣະຣາຊທານທີ່ທ່ານໄດ້ຮັບເພື່ອຫຍັງແດ່?
<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອຈະຮູ້ວ່າພວກເຮົາຈະໃຊ້ຂອງພຣະຣາຊທານຢ່າງໃດ?

<u>ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:</u>

- ພຣະຄັມພີຄືຫລັກສຳຄັນສຳລັບຊີວິດແລະການຮັບໃຊ້.
- ເວົ້າເຣື່ອງຂ່າວປະເສີດກັບຄົນທັງຫລາຍ.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ໃຫ້ທຸກຄົນໃນຄອບຄົວຂອງພຣະເຈົ້າມີສ່ວນໃນການບໍຣິຫານແລະການຮັບໃຊ້.
- ເຫັນທຸກຄົນວ່າສຳຄັນເພາະພຣະເຈົ້າຊົງເປັນຜູ້ສ້າງມະນຸດ.

<u>ຄຳນຳ</u>

ພຣະເຈົ້າຊົງປະທານຂອງພຣະຣາຊທານໃຫ້ຄຣິສຕຽນແຕ່ລະຄົນຢ່າງໜ້ອຍນຶ່ງຢ່າງ. ຖ້າຢາກຈະໃຊ້ຂອງພຣະຣາຊທານໃຫ້ໄດ້ຜົນດີ, ເຮົາຈະຕ້ອງຮູ້ວ່າຂອງພຣະຣາຊທານຂອງເຮົາແມ່ນຫຍັງແລະໄດ້ຮັບມາເພື່ອຈຸດປະສົງແນວໃດ? ການໃຊ້ຂອງພຣະຣາຊທານທີ່ຖືກຕ້ອງຈະສ້າງຄວາມສາມັກຄີໃນຄອບຄົວຂອງພຣະເຈົ້າ. ພຣະເຈົ້າຊົງໃຫ້ຂອງພຣະຣາຊທານແກ່ທຸກຄົນເພື່ອການຮັບໃຊ້; ພຣະອົງບໍ່ໄດ້ແບ່ງແຍກລະຫວ່າງພວກອາຈານ ແລະພວກສະມາຊິກເພາະພຣະອົງຊົງເອີ້ນຄຣິສຕຽນທຸກຄົນໃຫ້ເປັນຜູ້ຮັບໃຊ້ຮ່ວມກັນ.

<u>ຮູ້ຂອງພຣະຣາຊທານຂອງທ່ານ (12:1-11,28-31)</u>

ໂປໂລເລີ້ມຕອບຄຳຖາມຂອງຄຣິສຕຽນທີ່ເມືອງໂກຣິນ ເຣື່ອງຂອງພຣະຣາຊທານດ້ວຍຂໍ້ຄວາມດັ່ງນີ້, "ພີ່ນ້ອງທັງຫລາຍເອີຍ, ເຮົາຢາກໃຫ້ພວກເຈົ້າ ເຂົ້າໃຈເຣື່ອງຂອງພຣະຣາຊທານ" (12:1). ທ່ານເຫັນວ່າເຣື່ອງຂອງພຣະຣາຊທານເປັນເຣື່ອງສຳຄັນໃນສມັຍນັ້ນ ແລະກໍຍັງເປັນເຣື່ອງສຳຄັນໃນສມັຍປັດຈຸບັນເຊັ່ນກັນ. ໂປໂລປະສົງທີ່ຈະໃຫ້ທຸກຄົນເຂົ້າໃຈສິ່ງສຳຄັນວ່າ "ຂອງພຣະຣາຊທານນັ້ນມີຕ່າງໆກັນ" (12:4), ແຕ່ມີພຣະເຈົ້າອົງດຽວທີ່ເປັນຜູ້ປະທານຂອງພຣະຣາຊທານເຫລົ່ານັ້ນ ໂດຍທາງພຣະວິນຍານບໍຣິສຸດຂອງພຣະອົງ (12:6-7).

ຂອງພຣະຣາຊທານຈາກພຣະເຈົ້າມີແນວໃດແດ່? ພຣະທັມຂໍ້ 7-11 ໄດ້ໃຫ້ລາຍລະອຽດດັ່ງນີ້: ສະຕິປັນຍາ--ການຮູ້ເຣື່ອງພຣະເຈົ້າແລະແນວທາງຂອງພຣະອົງ. ວິຊາຄວາມຮູ້--ການໃຊ້ສະຕິປັນຍາໃນຊີວິດປະຈຳວັນ. ຄວາມເຊື່ອ--

ໝາຍເຖິງການເຊື່ອແລະວາງໃຈໃນພຣະເຈົ້າສຳລັບເຫດການຕ່າງໆ. ອຳນາດໃຫ້ຄົນດີພຍາດ--ປົວຄົນໃຫ້ດີຈາກການເຈັບປ່ວຍດ້ວຍຣິດເດດຂອງພຣະເຈົ້າ. ອຳນາດເຮັດການອິດທິຣິດຕ່າງໆ--ພຣະເຈົ້າໃຊ້ໃຫ້ເຮັດສິ່ງອັສຈັນ. ປະກາດພຣະ ທັມ--ເປັນເຄື່ອງມືຂອງພຣະເຈົ້າສຳລັບການປະກາດຄວາມຈິງໃຫ້ກັບໄພ່ພົນຂອງພຣະເຈົ້າ. ຮູ້ຈັກສັງເກດວິນຍານ-- ຮູ້ຈັກເຣື່ອງຈິດວິນຍານວ່າເປັນຂອງແທ້ຫລືຂອງປອມ. ສຳລັບຂອງພຣະຣາຊທານເຣື່ອງການປາກພາສາແປກ ໆ ແລະ ການແປພາສາແປກ ໆ ຈະມີການພິຈາຣະນາກັນໃນຫົວຂໍ້ຕໍ່ໄປ.

ນອກນັ້ນຍັງມີຂອງພຣະຣາຊທານອີກບາງຢ່າງ(12:28-30) ທີ່ໂປໂລບໍ່ໄດ້ອະທິບາຍໃນຕອນນີ້ເຊັ່ນ: ອັຄສາວົກ--ຜູ້ທີ່ໄດ້ເປັນພຍານເຣື່ອງພຣະເຢຊູແລະຜູ້ໄດ້ເຫັນການຊົງຄືນພຣະຊົນຂອງພຣະອົງ. ອາຈານ--ແປພຣະທັມແລະສັ່ງສອນ. ຜູ້ອຸປຖັມ-- ຊ່ວຍເຫລືອຄົນອື່ນໃຫ້ໄດ້ຮັບໃຊ້. ຜູ້ປົກຄອງ--ບໍຣິຫານພາຣະກິດຂອງພຣະເຈົ້າ. ພຣະທັມ ເອເຟໂຊ 4:11 ໄດ້ກ່າວເຖິງ. ຜູ້ປະກາດຂ່າວປະເສີດ--ນຳຄົນໃຫ້ມາເຊື່ອ. ສິດຍາພິບານ--ຜູ້ລ້ຽງແລະດູແລເຣື່ອງຈິດວິນຍານ. ຈາກພຣະທັມໂຣມ 12:8 ພວກເຮົາໄດ້ເຫັນຂອງພຣະຣາຊທານກ່ຽວກັບການເຕືອນສະຕິ, ການບໍຣິຈາກ, ການຄຸ້ມ ຄອງ, ແລະ ການສະແດງຄວາມເມດຕາ. ຂອງພຣະຣາຊທານ ຫລືພຣະພອນທຸກຢ່າງທີ່ພຣະເຈົ້າປະທານແມ່ນເພື່ອການເສີມສ້າງໄພ່ ພົນຂອງພຣະເຈົ້າເພື່ອການຮັບໃຊ້ໃນຄຣິສຕະຈັກແລະໃນທົ່ວໂລກ. ຈົ່ງຮຽນຮູ້ຂອງພຣະຣາຊທານຂອງທ່ານແລ້ວຮັບ ໃຊ້ພຣະຜູ້ເປັນເຈົ້າ.

## <u>ເຂົ້າໃຈເຣື່ອງ "ພາສາແປກ" (12:10,28,30)</u>

ຂອງພຣະຣາຊທານສອງຢ່າງທີ່ສ້າງຄວາມສັບສົນມາໄດ້ຫລາຍສັດຕະວັດຕິ ການເວົ້າພາສາແປກ ແລະການແປພາສາແປກ. ຄຣິສຕຽນຫລາຍໆຄົນແລະຄຣິສຕະຈັກຫລາຍໆບ່ອນໃນສມັຍປັດຈຸບັນນີ້ກໍຍັງມີບັນຫາໃນເຣື່ອງນີ້. ຕາມຄວາມຈິງແລ້ວຂອງພຣະຣາຊທານການປາກພາສາແປກ ເປັນພອນພິເສດສຳລັບຄຣິສຕະຈັກທີ່ເມືອງໂກຣິນ. ເພາະມັນເປັນພາສາທີ່ບໍ່ມີໃຜຮູ້ຫລືເຂົ້າໃຈ, ແລະເປັນພາສາສຳລັບໃຊ້ໃນເວລານະມັສການສ່ວນຕົວ ແລະສ່ວນຣວມ. ເຊັ່ນ ສອງ ຫລືສາມຄົນຈະເວົ້າພາສາແປກ ແຕ່ປາກເທື່ອລະຄົນ ແລ້ວໃຫ້ຜູ້ມີພອນເຣື່ອງແປພາສາແປກເປັນຄົນແປວ່າ ພວກເຂົາເວົ້າຫຍັງ (14:27). ພຣະທັມໄດ້ກ່າວຕໍ່ໄປວ່າ "ຖ້າບໍ່ມີຜູ້ໃດແປໄດ້ ກໍໃຫ້ຄົນເຫລົ່ານັ້ນມິດຢູ່ໃນທີ່ປະຊຸມ" (14:27). ຈົ່ງເຮັດທຸກຢ່າງ "ເພື່ອໃຫ້ມີການຈະເຣີນຂຶ້ນ" (14:26).

ພາສາແປກທີ່ເມືອງໂກຣິນແຕກຕ່າງກັບພາສາແປກໃນວັນເພັນເຕຄໍສະເຕແນວໃດ? ພຣະທັມກິຈການ 2:4 ກ່າວວ່າ "ເຂົາເຫລົ່ານັ້ນ (ຄຣິສຕຽນ) ກໍເຕັມໄປດ້ວຍພຣະວິນຍານບໍຣິສຸດ ແລະຕັ້ງຕົ້ນປາກພາສາຕ່າງໆ ຕາມທີ່ພຣະວິນຍານຊົງໂຜດໃຫ້ເຂົາເວົ້າ." ໃນເມືອງໂກຣິນບໍ່ແມ່ນທຸກຄົນເວົ້າພາສາແປກ (1 ໂກຣິນໂທ 12:30). ໃນວັນເພັນເຕຄໍສະເຕ, ທຸກຄົນທີ່ໄດ້ຍິນພາສາແປກຕ່າງກໍເຂົ້າໃຈ (ກິຈການ 2:6); ແຕ່ໃນໂບດໂກຣິນໂທຈະຕ້ອງໃຊ້ຄົນແປ (1 ໂກຣິນໂທ 14: 27-28). ໃນວັນເພັນເຕຄໍສະເຕ, ພາສາແປກຊ່ວຍຄຣິຕຽນໃຫ້ປະກາດຂ່າວປະເສີດກັບຄົນທີ່ກຳລັງຫລົງທາງ (ກິຈການ 2:6,7,11); ແຕ່ທີ່ ໂກຣິນໂທ ພາສາແປກເຮັດໃຫ້ຄົນທີ່ບໍ່ຮູ້ພຣະເຈົ້າເກີດງົງ (1 ໂກຣິນໂທ 14:23). ພາສາແປກທີ່ເວົ້າກັນໃນວັນເພັນເຕຄໍສະເຕ ເປັນພາສາທີ່ຜູ້ເວົ້າບໍ່ເຄີຍໄດ້ຮຽນຮູ້ມາກ່ອນ. ພາສາແປກທີ່ໂກຣິນໂທບໍ່ແມ່ນພາສາຂອງມະນຸດແຕ່ເປັນພາສາຝ່າຍຈິດວິນຍານ (ພາສາສວັນ) ເພື່ອການອະທິຖານ ແລະການນະມັສການ.

ຄຣິສຕຽນທຸກຄົນໄດ້ຮັບຂອງປະທານເຣື່ອງການເວົ້າພາສາແປກບໍ່? ໂປໂລໄດ້ໃຫ້ຄຳຕອບໃນ 12:29-31 ວ່າ "ບໍ່." ພວກເຮົາໄດ້ຮຽນຮູ້ວ່າຜູ້ເຊື່ອໃໝ່ທີ່ກາຍຊາເຣັຽ (ກິຈການ 10:46) ແລະທີ່ ເອເຟໂຊ (ກິຈການ 19:6) ໄດ້ພາກັນເວົ້າພາສາແປກຫລັງຈາກໄດ້ຮັບພຣະວິນຍານ. ໃນຂະນະດຽວກັນເຮົາກໍຮູ້ວ່າ ພວກ 3000 ຄົນທີ່ມາຮັບເຊື່ອໃນວັນເພັນເຕຄໍສະເຕ ບໍ່ມີໃຜປາກພາສາແປກເລີຍ. ໂປໂລກໍບໍ່ໄດ້ເວົ້າພາສາແປກເວລາເຂົາຮັບເຊື່ອໃໝ່. ຄຣິສຕຽນຫລາຍໆຄົນທີ່ໄດ້ເຕັມດ້ວຍພຣະວິນຍານ ແຕ່ກໍບໍ່ເຄີຍເວົ້າພາສາແປກ (ກິຈການ 4:8,31; 7:55; 9:17; 13:9,52). ພາສາແປກ ຍັງເປັນ

ຂອງພຣະຣາຊທານຢ່າງນຶ່ງໃນສມັຍນີ້. ໂປໂລເຕືອນພວກເຮົາບໍ່ໃຫ້ຫ້າມການເວົ້າພາສາແປກ (1 ໂກຣິນໂທ 14:39). ແຕ່ຢ່າເຂົ້າໃຈຜິດວ່າ ຄຣິສຕຽນຈະຕ້ອງເວົ້າພາສາແປກ ຫລື ຄິດວ່າທຸກຄົນທີ່ເຕັມດ້ວຍພຣະວິນຍານຈະຕ້ອງເວົ້າພາສາແປກ. ສນັ້ນພວກເຮົາບໍ່ຄວນຈະຕໍານິຕິຕຽນຜູ້ທີ່ມີຂອງພຣະຣາຊທານ ຫລືພຣະພອນໃນເຣື່ອງນີ້.

## ຢືນຢັນເຖິງຄວາມສາມັກຄີ (12:12-13)

ຂອງພຣະຣາຊທານທີ່ເຮັດໃຫ້ມີການແຕກແຍກໃນຄຣິສຕະຈັກໂກຣິນໂທໃນສມັຍກ່ອນສາມາດນໍາຄວາມແຕກແຍກມາສູ່ຄຣິສຕະຈັກຂອງພວກເຮົາໃນສມັຍນີ້ເໝືອນກັນ. ສນັ້ນພວກເຮົາຄວນສຶກສາແລະເຂົ້າໃຈເຣື່ອງຂອງພຣະຣາຊທານນີ້ໃຫ້ດີ ແລະນໍາມາໃຊ້ເພື່ອເສີມສ້າງຄວາມເປັນອັນນຶ່ງອັນດຽວກັນໃນຄອບຄົວຂອງພຣະເຈົ້າ.

ໂປໂລໄດ້ກ່າວໃນໂກຣິນໂທ 12:12 ວ່າ "ເຖິງວ່າຮ່າງກາຍເປັນອັນດຽວ ກໍຍັງມີອະວັຍວະຫລາຍສ່ວນ ແລະອະວັຍວະເຫລົ່ານັ້ນ ແມ່ນຈະມີຫລາຍສ່ວນ ກໍຍັງເປັນກາຍດຽວກັນສັນໃດ ພຣະຄຣິດກໍຊົງເປັນສັນນັ້ນ." ລອງຄິດເບິ່ງພາກສ່ວນຕ່າງໆໃນຫ່າງກາຍຂອງເຮົາ; ພວກເຮົາຈະຫາສອງຢ່າງທີ່ຄືກັນໝົດທຸກແບບກໍບໍ່ມີເລີຍ. ມືແຕ່ລະຂ້າງກໍບໍ່ຄືກັນເພາະມືແຕ່ລະຂ້າງມີຄວາມສາມາດບໍ່ຄືກັນ. ອະວັຍວະທຸກພາກສ່ວນໃນຮ່າງກາຍຕ່າງກໍທໍາງານຮ່ວມກັນຢ່າງເປັນລະບຽບ. ເວລາໃດອະວັຍວະບາງຢ່າງເກີດບໍ່ເຮັດວຽກ, ພວກເຮົາກໍຈະເຈັບປ່ວຍລົງ.

ພວກເຮົາຊຶ່ງເປັນຄຣິສຕຽນເຖິງຈະມີຢູ່ດ້ວຍກັນຫລາຍໆຄົນ ແຕ່ພວກເຮົາກໍເປັນອັນດຽວກັນ: "ເຮົາທັງຫລາຍໄດ້ຮັບບັບຕິສະມາໂດຍພຣະວິນຍານອົງດຽວ ຈຶ່ງເຂົ້າເປັນກາຍດຽວກັນ" (12:13). ນີ້ຄືສັດຈະທັມທີ່ບໍ່ມີໃຜຈະປ່ຽນແປງໄດ້. ເມື່ອທ່ານໄດ້ຮຽນຮູ້ຂອງພຣະຣາຊທານທີ່ທ່ານໄດ້ຮັບ ກໍຈົ່ງໃຊ້ພຣະພອນນັ້ນໃນຄອບຄົວພຣະເຈົ້າເພື່ອພວກເຮົາຈະໄດ້ໄປນໍາຄົນທີ່ຍັງຫລົງທາງຢູ່ໃຫ້ໄດ້ມາພົບພຣະເຢຊູຄຣິດຜູ້ຊົງເປັນຫົນທາງນັ້ນ.

## ຍອມຮັບຄວາມແຕກຕ່າງກັນ (12:14-27)

ຄຣິສຕຽນສ່ວນຫລາຍຮູ້ວ່າເຂົາເຈົ້າໄດ້ຮັບຂອງພຣະຣາຊທານ ແລະຫລາຍຄົນກໍຮູ້ວ່າຄວາມເປັນອັນນຶ່ງອັນດຽວກັນເປັນສິ່ງຈໍາເປັນໃນການຮັບໃຊ້. ແຕ່ຫລາຍໆຄົນບໍ່ຮູ້ພາກສ່ວນຂອງຕົນເອງໃນຮ່າງກາຍນັ້ນ. ນອກນັ້ນຄຣິສຕະຈັກແຕ່ລະບ່ອນກໍເຕັມລົ້ນດ້ວຍພວກຜູ້ເຊື່ອທີ່ບໍ່ຮູ້ວ່າຕົນເອງຖືກເອີ້ນໃຫ້ມາເປັນຜູ້ຮັບໃຊ້, ສະມາຊິກສ່ວນຫລາຍຄິດວ່າການຮັບໃຊ້ເປັນໜ້າທີ່ຂອງພວກອາຈານ ຫລືພະນັກງານທີ່ຄຣິສຕະຈັກໄດ້ຈ້າງໄວ້ແລ້ວ.

ພວກເຮົາຕ້ອງການຊຶ່ງກັນແລະກັນ. ໂປໂລໄດ້ໃຫ້ຄວາມສົມມຸດເຣື່ອງຮ່າງກາຍຢ່າງແຈ່ມແຈ້ງໃນຂໍ້ 14-26. ຮ່າງກາຍຕ້ອງການຕີນ (12:16), ຕາ (12:21), ມື (12:21), ແລະຕີນທັງສອງຂ້າງ (12:21). ອະວັຍວະແຕ່ລະສ່ວນສໍາຄັນ, "ທີ່ຈິງອະວັຍວະສ່ວນທີ່ເຫັນວ່າອ່ອນແອ ເຮົາກໍຂາດເສັຽບໍ່ໄດ້" (12:22). ສິ່ງສໍາຄັນທີ່ພວກເຮົາຄວນຮູ້ກໍຄືວ່າຖ້າອະວັຍວະນຶ່ງເຈັບ ຮ່າງກາຍທັງໝົດກໍເຈັບດ້ວຍກັນ. ສນັ້ນຢ່າຖືວ່າທ່ານບໍ່ມີຄວາມສໍາຄັນ. ພຣະເຈົ້າຕ້ອງການຂອງພຣະຣາຊທານທັງໝົດເພື່ອການຮັບໃຊ້ ພຣະອົງຈຶ່ງໄດ້ປະທານໃຫ້ພວກເຮົາ.

ໃຫ້ທ່ານລອງຖາມຕົວເອງເບິ່ງວ່າ: ທ່ານຮູ້ແລະໃຊ້ຂອງພຣະຣາຊທານຂອງທ່ານບໍ່? ທ່ານໄດ້ໃຊ້ຂອງພຣະຣາຊທານເພື່ອສ້າງຄວາມເປັນອັນນຶ່ງອັນດຽວກັນໃນຄຣິສຕະຈັກຂອງພຣະເຈົ້າບໍ່? ຄໍາກອນຕອນນຶ່ງໄດ້ຂຽນໄວ້ວ່າ:

> ພຣະອົງບໍ່ມີມືອື່ນ ນອກຈາກມືຂອງພວກເຮົາທີ່ຈະທໍາງານຂອງພຣະອົງ;
> ພຣະອົງບໍ່ມີຕີນອື່ນ ນອກຈາກຕີນຂອງພວກເຮົາທີ່ຈະນໍາຄົນມາຫາງພຣະອົງ;

ພຣະອົງບໍ່ມີສຽງອື່ນ  ນອກຈາກສຽງຂອງພວກເຮົາທີ່ຈະບອກຄົນວ່າພຣະອົງໄດ້ຕາຍເພື່ອໃຜ;
ພຣະອົງບໍ່ມີຊີວິດອື່ນ  ນອກຈາກຊີວິດຂອງພວກເຮົາທີ່ຈະນຳຄົນມາເຊື່ອພຣະອົງ.

ຄຣິສຕຽນທຸກຄົນຄືຜູ້ຮັບໃຊ້, ຈົ່ງຈັບມືກັບ "ພວກຜູ້ຮັບໃຊ້" ຂອງພຣະເຈົ້າທັງເພື່ອພັນທະກິດຂອງພຣະເຈົ້າ.

<u>ຄຳຖາມ:</u>

1. ເປັນຫຍັງການໃຊ້ຂອງພຣະຣາຊທານຈຶ່ງສ້າງຄວາມແຕກແຍກໃນຄຣິສຕະຈັກ? ທ່ານຄວນຈະເຮັດແນວໃດແດ່ເພື່ອໃຫ້ການໃຊ້ຂອງພຣະຣາຊທານທີ່ທ່ານມີໄດ້ສອດຄ່ອງກັບຄຣິສຕຽນຄົນອື່ນໆ?

2. ມີຂອງພຣະຣາຊທານແນວໃດແດ່ທີ່ຄຣິສຕະຈັກຂອງທ່ານຍອມຮັບ? ມີຂອງພຣະຣາຊທານແນວໃດແດ່ທີ່ຄົນທັງຫລາຍບໍ່ມັກສົນໃຈ? ທ່ານຈະເຮັດແນວໃດເພື່ອໃຫ້ຄົນມາສົນໃຈໃນຂອງພຣະຣາຊທານອັນນັ້ນ?

3. ທ່ານຈະເຮັດແນວໃດເພື່ອຊ່ວຍໃຫ້ການໃຊ້ຂອງພຣະຣາຊທານຂອງທ່ານແລະຂອງຄົນອື່ນໆໃຫ້ເກີດຜົນຫລາຍຂຶ້ນ? ທ່ານຈະເຮັດແນວໃດເພື່ອຈະໃຫ້ມີການຮ່ວມມືກັນຫລາຍຂຶ້ນ?

4. ມີຫຍັງແດ່ທີ່ເຮັດໃຫ້ທ່ານຕ້ອງປະຕິເສດ "ການຊົງເອີ້ນ" ຂອງພຣະເຈົ້າ? ຈົ່ງອະທິຖານເພື່ອສິ່ງເຫລົ່ານັ້ນ, ຂໍພຣະເຈົ້າໃຫ້ຊ່ວຍທ່ານ, ຈົ່ງເຊື່ອຟັງພຣະເຈົ້າແລະປະຕິບັດໃນສິ່ງທີ່ພຣະອົງໄດ້ຊົງເອີ້ນທ່ານໃນມື້ນີ້.

# ການດຳຣົງຊີວິດທີ່ເປັນປໂຍດ
# ບົດຮຽນທີ 11

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> 1 ໂກຣິນໂທ 13:1-13

<u>ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້:</u> 1 ໂກຣິນໂທ 13:1-13

<u>ຈຸດສຳຄັນຂອງບົດຮຽນນີ້</u>: ເພື່ອບອກໃຫ້ຮູ້ວ່າການດຳຣົງຊີວິດທີ່ດີທີ່ສຸດນັ້ນແມ່ນການດຳຣົງຊີວິດຮັກຢ່າງພຣະຄຣິດຊົງຮັກ.

<u>ຄຳຖາມເພື່ອການສຳຣວດ</u> ຄວາມຮັກເປັນຮູບຮ່າງແນວໃດ? ຈະຮູ້ໄດ້ຢ່າງໃດວ່າຄວາມຮັກທີ່ອອກຈາກປາກນັ້ນມາຈາກໃຈ? ມັນແຕກຕ່າງກັນຢ່າງໃດໃນຣະຫວ່າງຮັກແລະບໍ່ຮັກ?

<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອສະແດງຄວາມຮັກຢ່າງພຣະເຈົ້າຊົງຮັກໃນໂບດຂອງເຮົາ, ໃນເຮືອນແລະໃນຊີວິດປະຈຳວັນຂອງເຮົາ.

<u>ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນ</u>

- ເອົາພຣະຄັມພີເປັນຣິດອຳນາດໃນການມີຊີວິດເພື່ອການປະກາດ
- ເສີມຂຍາຍຄວາມເຊື່ອເປັນກ້າວໆໄປ
- ເຫັນຄົນທຸກຄົນເປັນສີພຣະທັດຂອງພຣະເຈົ້າ
- ສົ່ງເສີມຄອບຄົວດ້ວຍຄວາມຮັກຊຶ່ງມາຈາກພຣະເຈົ້າ
- ປະຕິບັດຕາມຄຳສັ່ງຂອງພຣະເຢຊູທຸກດ້ານ

ພຣະເຈົ້າຊົງເປັນຕົວຢ່າງໃນເຣື່ອງຄວາມຮັກຄືພຣະອົງຊົງຮັກທຸກຄົນໂດຍບໍ່ເລືອກຊັ້ນວັນນະແລະບໍ່ເລືອກຜິວພັນ,ຫາກເຮົາທັງຫລາຍຮັກກັນແລະກັນຢ່າງພຣະອົງຊົງຮັກເຮົາທັງຫລາຍ ແລ້ວຄົນທັງຫລາຍກໍຈະເຫັນຄວາມຮັກຂອງພຣະອົງໃນຕົວເຮົາ.

## <u>ເຂົ້າໃຈໃນເຣື່ອງຄວາມຮັກ.</u>

ຫາກເຮົາຖາມຄອບຄົວຊາວອະເມຣິກັນວ່າເຮັດແນວໃດຄອບຄົວຂອງທ່ານຈຶ່ງພາກັນສົດຊື່ນແຈ່ມໃສແທ້? ແນ່ນອນເຂົາເຈົ້າຈະຕອບ ເຮົາວ່າ ຍ້ອນພວກເຮົາຮັກແລະເອົາອົກເອົາໃຈຊຶ່ງກັນແລະກັນ. ເຣື່ອງນີ້ເປັນຄວາມຈິງເມື່ອຄອບຄົວ, ຜົວເມັຽຕ່າງຄົນຕ່າງເອົາໃຈຊຶ່ງກັນແລະກັນແລ້ວຄອບຄົວຜົວເມັຽຄູ່ນັ້ນກໍສົດຊື່ນແຈ່ມໃສແທ້. ສ່ວນຫລາຍແລ້ວໃຜກໍເອົາໃຈຕົວເອງຫລາຍກວ່າເອົາໃຈຜູ້ອື່ນ ທ່ານຜູ້ນຶ່ງອາຈເອົາໃຈຕົນເອງຫລາຍກວ່າເອົາໃຈຜົວຫລືເມັຽຂອງທ່ານ. ທ່ານຈະເຫັນໄດ້ວ່າຄອບຄົວຜົວເມັຽທ່ານມີຄວາມຄຽດໃຫ້ກັນຢູ່ເລື້ອຍເພາະເອົາໃຈເພິ່ນບໍ່ພໍ. ຂ້າພະເຈົ້າຈື່ຄຳເວົ້າຄຳນຶ່ງທີ່ເຮົາເຄີຍເວົ້າກັນວ່າ " ຮັກແທ້ຍ່ອມເສັຽສະລະ " ຄືເສັຽສະລະໃຫ້ເພິ່ນເປັນສຸກໃຈ ເມື່ອເພິ່ນດີໃຈຄອບຄົວກໍບໍ່ຜິດຖຽງແລະຄຽດເລັກຄຽດນ້ອຍໃຫ້ກັນຄືທຸກວັນນີ້. ຂ້າພະເຈົ້າຂໍແນະນຳຄຳວ່າຮັກໃນພາສາກຣີກມີຄຳວ່າຮັກຢູ່ 3 ຢ່າງດ້ວຍກັນດັ່ງທ່ານຈະໄດ້ສຶກສາຂ້າງລ່າງນີ້. ຈົ່ງອ່ານແລະຕຶກຕອງໃຫ້ດີໆ.

1. ອາກາເປ: ແປວ່າຄວາມຮັກສມັກມອບໃຈໃຫ້ດ້ວຍຄວາມເຕັມໃຈ, ດ້ວຍການຍອມເສັຽສະລະເປັນຂອງ

ຂວັນໃຫ້. ເປັນຄວາມຮັກຕອບສນອງດ້ວຍຄວາມຮັກ. ຕົວຢ່າງ: ໂຢຮັນ 3:16 ພຣະເຈົ້າ ອາກາເປໂລກ ດັ່ງນັ້ນໂລກສົມຄວນຈະອາກາເປພຣະເຈົ້າຄືນ.

2: ຟີເລັຽ: ແປວ່າຮັກຢ່າງເພື່ອນຝູງ.

3. ອີຣອສ: ແປວ່າຮັກແບບຊູ້ສາວ.

ໃນໂຢຮັນ 21:15-17 ພຣະເຢຊູຖາມສອງຄຳແຮກວ່າ "ເປໂຕເຈົ້າ ອາກາເປເຮົາບໍ່" ເປໂຕຕອບທັງສອງຄັ້ງວ່າ "ໂດຍຂ້ານ້ອຍຟີເລັຽພຣະອົງ", ເນື່ອງຈາກວ່າເປໂຕຕອບວ່າຟີເລັຽທີ່ບໍ່ກົງກັບຄຳຖາມພຣະເຢຊູຈຶ່ງຖາມຄັ້ງທີ່ສາມວ່າ "ເປໂຕເຈົ້າ ຟີເລັຽເຮົາບໍ່" ເປໂຕຈຶ່ງຕອບວ່າຟີເລັຽ.

ຈົ່ງພິຈາຣະນາເບິ່ງຕົວທ່ານເອງເບິ່ງວ່າທ່ານ ອາກາເປ ພີ່ນ້ອງໃນໂບດຂອງທ່ານບໍ່? ຫາກທ່ານຄິດວ່າຂ້າພະ ເຈົ້າຮັກເພິ່ນຫລືບາງທ່ານອາດຈະເວົ້າວ່າ ຂ້າພະເຈົ້າບໍ່ແນ່ ຈົ່ງສຶກສາໃນຂໍ້ຕໍ່ໄປ.

<u>ຄຸນຄ່າຂອງຄວາມຮັກ (13: 1-3)</u>. (ອາກາເປ)

<u>ຂໍ້ 1.</u> "ເຖິງແມ່ນເຮົາຈະເວົ້າພາສາແປກໆໄດ້ ຈະເປັນພາສາມະນຸດທັມດາຫລືພາສາເທວະດາກໍດີ ແຕ່ບໍ່ມີຄວາມຮັກເຮົາກໍ ເປັນເຫມືອນຄ້ອງຫລືແຊ່ງທີ່ສົ່ງສຽງອຶກກະທຶກ" ຊຶ່ງຫມາຍເຖິງບຸກຄົນທີ່ອ້າງຕົນເອງວ່າເຕັມໄປດ້ວຍພຣະວິນຍານບໍຣິສຸດຈຶ່ງເວົ້າພາສາແປກໆໃນພຣະທັມກິຈການ, ຫາກບໍ່ມີຄວາມຮັກ (ອາກາເປ) ກໍເປັນເຫມືອນຄ້ອງຫລືແຊ່ງ. ສ່ວນຄ້ອງແລະແຊ່ງເປັນເຄື່ອງດົນຕຣີໃນສມັຍໂບຮານມີຄວາມຫມາຍຢູ່ວ່າ ຄ້ອງແລະແຊ່ງນັ້ນສົ່ງແຕ່ສຽງອຶກກະທຶກຢ່າງບໍ່ເປັນຈັງວະແລະບໍ່ເຂົ້າກັບບົດເພງບັນເລງຈຶ່ງກາຍເປັນ ສຽງນອງນັນລົບກວນເຮັດໃຫ້ສຽງດົນຕຣີທີ່ມ່ວນອອນຊອນນັ້ນຫມົດຣົດຊາດໄປດ້ວຍ. ດັ່ງນັ້ນທ່ານອາຈານໂປໂລຈຶ່ງປຽບທຽບໃນຣະຫວ່າງຄົນເວົ້າພາສາແປກໆ ແມ້ກະທັ້ງພາສາເທວະດາ ຫາກບໍ່ມີຄວາມຮັກ (ອາກາເປ) ກໍບໍ່ມີປໂຍດຫຍັງຫມົດແຖມຍັງເປັນສຽງລົບກວນລ້າໆ. ຕົວຢ່າງ: ຄົນຫລິ້ນດົນຕຣີບໍ່ເປັນຫລືເດັກນ້ອຍຫລິ້ນປີອຽນໂນໃນໂບດຂອງເຮົາແບບໂລເລເປັນການລົບກວນເສັ້ນປະສາດຜູ້ເຖົ້າຫລາຍທີ່ສຸດ.

<u>ຂໍ້ 2.</u> "ເຖິງແມ່ນເຮົາປະກາດພຣະທັມໄດ້, ແລະເຂົ້າໃຈໃນຂໍເລິກລັບທັງປວງ ແລະມີຄວາມຮູ້ທັງສິ້ນ, ແລະມີຄວາມເຊື່ອຢ່າງຄົບຖ້ວນພໍຈະບອກໃຫ້ພູເຄື່ອນໄປໄດ້ ແຕ່ບໍ່ມີຄວາມຮັກ ເຮົາກໍບໍ່ມີຄ່າອັນໃດ" ໂປໂລໄດ້ກ່າວເຖິງຄົນທີ່ມີຄວາມສາມາດໃນການປະກາດ, ຄົນທີ່ມີຄວາມເຊື່ອອັນໃຫຍ່ຫລວງແຕ່ບໍ່ມີຄວາມຮັກນັ້ນທ່ານບອກວ່າບໍ່ມີຄ່າອັນໃດນັ້ນທ່ານຫມາຍເຖິງບໍ່ມີຄ່າສຳລັບມະນຸດດ້ວຍກັນ ຄືການປະກາດຂອງລາວອາຈບໍ່ໄດ້ຜົນ, ຄວາມຮູ້ຂໍ້ເລິກລັບເຣື່ອງແຜ່ນດິນສວັນຂອງລາວອາຈບໍ່ມີຄ່າສຳລັບຜູ້ອື່ນ ເນື່ອງຈາກວ່າຜູ້ເບິ່ງບໍ່ເຫັນສິ່ງທີ່ລາວປະກາດວ່າພຣະເຈົ້າຊົງເປັນຄວາມຮັກ. ສ່ວນລາວເອງລອດພົ້ນດ້ວຍຄວາມເຊື່ອຂອງລາວແທ້, ແຕ່ລາວບໍ່ສາມາດຊ່ອຍຄົນອື່ນໃຫ້ເຫັນທາງແຫ່ງຄວາມລອດພົ້ນ. ດັ່ງນັ້ນເຮົາທັງຫລາຍຄວນປະກາດເຣື່ອງຂອງພຣະເຈົ້າປະກອບດ້ວຍຄວາມຮັກ (ອາກາເປ).

<u>ຂໍ້ 3.</u> "ເຖິງແມ່ນເຮົາຈະບໍຣິຈາກຂອງຈົນຫມົດ, ຫລືສະຣະຕົວຂອງເຮົາເຜົາໄຟ ແຕ່ບໍ່ມີຄວາມຮັກ ເຮົາກໍບໍ່ມີປໂຍດຫຍັງຫມົດ" ໂປໂລຍົກຕົວຢ່າງຄົນຜູ້ນຶ່ງທີ່ມີການເສັຽສະລະຢ່າງໃຫຍ່ໂດຍບໍ່ມີຄວາມຮັກ ກໍບໍ່ມີປໂຍດຫຍັງຫມົດເພາະວ່າພຣະເຈົ້າຊົງໂຜດປະທານພຣະບຸດອົງດຽວຂອງພຣະອົງໃຫ້ແກ່ໂລກດ້ວຍຄວາມຮັກ ເມື່ອຄົນທັງຫລາຍເຫັນຄວາມຮັກຂອງພຣະເຈົ້າໃນສິ່ງທີ່ພຣະອົງຊົງໂຜດປະທານຄືພຣະບຸດອົງດຽວຂອງພຣະອົງ ຈຶ່ງເປັນຜົນປໂຍດຈົນຄົນ

ທັງຫລາຍສມັກໃຈຮັກພຣະອົງຄືນເຫມືອນດັ່ງພຣະອົງສມັກໃຈຮັກພວກເຮົາ. ພຣະປະສົງຂອງພຣະເຈົ້າແມ່ນໃຫ້ເຮົາທັງຫລາຍ (ອາກາເປ) ຊຶ່ງກັນແລະກັນເຫມືອນພຣະອົງ ອາກາເປເຮົາ. ຫາກເຮົາເວົ້າວ່າເຮົາ ອາກາເປແລ້ວເຮົາລອງມາສົມທຽບເບິ່ງວ່າເຮົາມີສິ່ງທີ່ຈະກ່າວຕໍ່ໄປນີ້ບໍ່?

<u>ຄວາມຮັກປະກອບດ້ວຍ</u> (13: 4-7)

ທ່ານອາຈານໂປໂລໄດ້ຊີ້ໃຫ້ພີ່ນ້ອງເມືອງໂກຣິນໂທວ່າຄົນທີ່ມີຄວາມຮັກ ອາກາເປ ຈະຕ້ອງມີສິ່ງທັງຫມົດນີ້ຄື: ອົດທົນດົນນານ, ບໍ່ແມ່ນແຕ່ອົດເທົ່ານັ້ນຕ້ອງທົນອີກດ້ວຍແລະບໍ່ແມ່ນທົນພຽງລະຍະສັ້ນແມ່ນທົນຈົນເຖິງທີ່ສຸດເຫມືອນພຣະເຢຊູອົດທົນຈົນເຖິງສິ້ນໃຈຕາຍ. ຊອບເມຕາກະຣຸນາ ຫມາຍເຖິງຊອກສແວງຫາແລະແບ່ງເບົາຜູ້ອື່ນ. ບໍ່ເຫິງສາ ຫມາຍເຖິງ ເຫັນຜູ້ອື່ນໄດ້ດີກໍຄວນຍິນດີຮ່ວມກັບເພິ່ນ. ບໍ່ອວດອ້າງ ຫມາຍເຖິງບໍ່ຍົກຍ້ອງຕົນເອງໃສ່ຜູ້ອື່ນ. ບໍ່ເຮັດການ ບໍ່ສຸພາບ ຫມາຍເຖິງກິຣິຍາທ່າທາງຫນ້າລັງກຽດ. ບໍ່ຄິດເຫັນປໂຍດຕົນເອງຝ່າຍດຽວ ຫມາຍເຖິງຂ້ອຍພໍໃຈຜູ້ອື່ນເປັນຫຍັງກະຢ່າ. ບໍ່ມີໃຈຮ້າຍງ່າຍ ຫມາຍເຖິງອົດກັ້ນຄວາມຮ້າຍໄວ້. ບໍ່ຈົດຈຳຄວາມຜິດ ຫມາຍເຖິງ ເຣື່ອງທີ່ແລ້ວຂໃຫ້ແລ້ວໄປ, ດັ່ງຄຳໂບຮານວ່າ " ເອົາຄວາມເກົ່າມາເລົ່າ ຜິດກັນ ". ບໍ່ຍິນດີໃນການອະທັມ ແຕ່ຍິນດີໃນການສັດຈິງ ຫມາຍເຖິງ ສິ່ງທີ່ເພິ່ນເຮັດຜິດຢ່າສົ່ງເສີມ, ຢ່າປະກອບສ່ວນ ແຕ່ສິ່ງໃດທີ່ຖືກຕ້ອງໃຫ້ສົ່ງເສີມແລະປະກອບສ່ວນ. ທ່ານອາຈານໂປໂລສລຸບດັ່ງນີ້: "ຄວາມຮັກ ສູ້ທົນທຸກສິ່ງ, ເຊື່ອທຸກສິ່ງ, ໄວ້ວາງໃຈທຸກສິ່ງ, ພຽມທົນເອົາທຸກສິ່ງ" (ຂໍ້ 7). ທ່ານມີຄວາມຮັກຢ່າງທີ່ໂປໂລໄດ້ກ່າວນີ້ບໍ່? ຫາກຍັງບໍ່ທັນມີວັນນີ້ສົມຄວນທີ່ທ່ານຈະເລີ້ມຕົ້ນແລ້ວເພາະສິ່ງ ນີ້ເປັນທີ່ພໍພຣະທັຍພຣະເຈົ້າ, ຫາກທ່ານຫາກເຮັດສິ່ງນີ້ບໍ່ໄດ້ການປະກາດເຣື່ອງຣາຊອານາຈັກຂອງພຣະເຈົ້າທີ່ທ່ານປະ ກາດນັ້ນກໍຈະບໍ່ໄດ້ຜົນ ຫລືໄດ້ຜົນນ້ອຍ, ດັ່ງນັ້ນຕ້ອງ

<u>ເອົາຄວາມຮັກໄປກ່ອນ </u>(13:8-13)

ການປະກາດພຣະທັມພຣະເຈົ້າເປັນກິຈການອັນຍິ່ງໃຫຍ່ປະຈຳວັນຂອງເຮົາທັງຫລາຍ, ການເວົ້າພາສາແປກໆເປັນສັນຍາລັກໃນການຮັບພຣະວິນຍານບໍຣິສຸດ ອິງຕາມພຣະທັມກິຈການ ແຕ່ສິ່ງໃຫຍ່ໆເລົ່ານີ້ຈະຫມົດໄປໃນວັນນຶ່ງຂ້າງຫນ້າ, ຄວາມຮູ້ທຸກຢ່າງກໍຈະເຊົາໃຊ້ກັນໃນວັນຂ້າງຫນ້າ. ສຳລັບຄວາມຮັກ ອາກາເປ ນັ້ນຈະຕັ້ງຫມັ້ນຄົງຢູ່ຕລອດໄປຊຶ່ງຫມາຍຄວາມວ່າ ສິ່ງອື່ນໆຈະຫມົດກຳນົດໃນການໃຊ້. "ບັດນີ້ຍັງຕັ້ງຢູ່ສາມສິ່ງ ຄືຄວາມເຊື່ອ, ຄວາມຫວັງໃຈ, ແລະຄວາມຮັກ ແຕ່ສິ່ງທີ່ໃຫຍ່ກວ່າແມ່ນຄວາມຮັກ" (ຂໍ້ 13). ໂປໂລໄດ້ປຽບທຽບຄວາມເຊື່ອແລະຄວາມຫວັງຍັງນ້ອຍໄປກວ່າຄວາມຮັກ ເພາະວ່າຄວາມເຊື່ອແລະຄວາມຫວັງໃຈມີຢູ່ກໍຈິງຫາກບໍ່ມີຄວາມຮັກກໍບໍ່ເປັນຜົນປໂຍດອັນໃດແກ່ຍາດພີ່ນ້ອງໃນຄົວເຮືອນ ແລະກໍບໍ່ເປັນຜົນປໂຍດແກ່ຍາດພີ່ນ້ອງໃນໂບດ ແຖມຍັງໄຮ້ປໂຍດສຳລັບຄົນທີ່ຍັງບໍ່ທັນຮູ້ຈັກກັບພຣະເຈົ້າອີກດ້ວຍ. ເພາະວ່າຄວາມຮັກນັ້ນບໍ່ມີໃຜສາມາດເຫັນໄດ້ ເພາະຄວາມຮັກບໍ່ມີຮ່າງກາຍຫລືຕົວຕົນ ດັ່ງນັ້ນຄວາມຮັກຈຳຕ້ອງອາສັຍຢູ່ໃນການປະຕິບັດແລະການສະແດງອອກຈຶ່ງຈະຮູ້ວ່າຮັກ. ດ້ວຍເຫດນີ້ຄວາມຮັກຈຳເປັນຕ້ອງອອກຫນ້າກ່ອນອື່ນໃດຫມົດ. <u>ຕົວຢ່າງ:</u> ຄົນລາວເຮົາບໍ່ຄ່ອຍຈະເວົ້າວ່າ "ຂ້ອຍຮັກເຈົ້າ" ແຕ່ການທີ່ຈະປະຕິບັດຊຶ່ງກັນແລະກັນນັ້ນເປັນເຄື່ອງບົ່ງບອກວ່າ ຮັກຫລືບໍ່ຮັກ, ການທີ່ບໍ່ອອກປາກວ່າຂ້ອຍຮັກເຈົ້າ ແຕ່ປະຕິບັດຕໍ່ກັນແລະກັນນັ້ນຂ້າພະເຈົ້າເຂົ້າໃຈວ່າຍັງດີກວ່າເວົ້າມື້ລະສາມເທື່ອແຕ່ບໍ່ເຮັດຫຍັງເລີຍ.

<u>ຄຳຖາມ</u>

1. ຄວາມຮັກແມ່ນຫຍັງ?

2. ເປັນຫຍັງໂປໂລຈຶ່ງເວົ້າວ່າ ເປັນເຫມືອນຄ້ອງຫລືແຊ່ງ?

3. ຄວາມຮັກທີ່ສມັກໃຈນັ້ນແມ່ນຄວາມຮັກແນວໃດຕາມຄຳເວົ້າໃນພາສາກຣີກ?

4. ຄວາມຮັກ ອາກາເປ ນັ້ນມີຫຍັງແດ່?

5. ແມ່ນຫຍັງຍັງຕັ້ງຢູ່ສາມສິ່ງ? ແລະສິ່ງໃດທີ່ໃຫຍ່ກວ່າຫມູ່ ເປັນຫຍັງຈຶ່ງໃຫຍ່?

6. ເປັນຫຍັງຈຶ່ງເອົາຄວາມຮັກໄປກ່ອນ.

# ຂອງພຣະຣາຊທານທີ່ສຳຄັນ
# ບົດຮຽນທີ 12

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> 1 ໂກຣິນໂທ 14:1-25

<u>ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້:</u> 1 ໂກຣິນໂທ 14:1-40

<u>ຈຸດສຳຄັນຂອງບົດຮຽນນີ້</u>: ເພື່ອບອກໃຫ້ຮູ້ວ່າຂອງພຣະຣາຊທານໃນການປະກາດມີຄວາມສຳຄັນຫລາຍ ເພາະມັນຊ່ອຍໃຫ້ຄຣິສຕຽນເຕີບໃຫຍ່ ແລະຊ່ອຍໃຫ້ຄົນທັງຫລາຍກັບໃຈ.

<u>ຄຳຖາມເພື່ອການສຳຣວດ</u> ເຮົາຈະຮູ້ຜົນໃນການປະກາດຕໍ່ຄົນທັງຫລາຍໄດ້ແນວໃດ?

<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອສົມທຽບຂອງພຣະຣາຊທານຣະຫວ່າງການເວົ້າພາສາແປກໆ ແລະການປະກາດ.

<u>ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນ</u>

- ພຣະຄັມພີເທົ່ານັ້ນເປັນເຂັມທິດຂອງຊີວິດແລະເປັນວິທີການຕ່າງໆ.
- ແບ່ງປັນຂ່າວປະເສີດແກ່ທຸກໆຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນ.

ໃນຂະນະທີ່ຂ້າພະເຈົ້າເປັນນັກຮຽນມະຫາວິທະຍາລັຍພຣະຄັມພີ ທາງໂຮງຮຽນໄດ້ສົ່ງຂ້າພະເຈົ້າຮ່ວມກັບນັກຮຽນຈຳນວນຫລວງຫລາຍອອກໄປປະກາດພຣະທັມພຣະເຈົ້າຕາມແຈຖນົນຫົນທາງ ໂດຍການຊົງນຳຂອງພຣະເຈົ້າ ຂ້າພະເຈົ້າຍ່າງເຂົ້າໄປໃນບ້ານຂອງຍິງຜິວຂາວຜູ້ນຶ່ງ ພໍແຕ່ຍ່າງເຂົ້າປະຕູບ້ານຍິງນັ້ນກໍມາເປີດປະຕູເຮືອນພ້ອມດ້ວຍລູກທັງສອງຂອງລາວ. ນາງບອກກັບຂ້າພະເຈົ້າວ່າພຣະເຈົ້າຊົງໂຜດນາງແລ້ວເພາະນາງລໍຄອຍໃຫ້ຄົນເອເຊັຽຜູ້ໃດຜູ້ນຶ່ງມາບອກຂ່າວນີ້ແກ່ນາງ. ຂ້າພະເຈົ້າຈຶ່ງຖາມນາງວ່າ ເປັນຫຍັງຈຶ່ງຕ້ອງເປັນຄົນເອເຊັຽ? ນາງຕອບວ່າທີ່ທຳງານຂອງນາງມີຄົນລາວທຳງານຢູ່ດ້ວຍກັນຫລາຍຄົນລ້ວນແຕ່ເປັນຄົນດີ ແຕ່ບໍ່ມີໃຜຮູ້ຈັກກັບພຣະເຈົ້ານາງເວົ້າຕໍ່ໄປວ່ານາງຢາກເປັນຄຣິສຕຽນດ້ວຍຄົນເອເຊັຽເພື່ອຈະເວົ້າເຣື່ອງການຮັບເຊື່ອຂອງນາງໃຫ້ຄົນລາວໃນໂຮງງານຟັງ. ໃນຕອນທ້າຍນາງຂໍໃຫ້ຂ້າພະເຈົ້າອ້ອນວອນໃຫ້ນາງຮັບເຊື່ອພຣະເຈົ້າ, ນີ້ແຫລະຄືຣິດອຳນາດຂອງຂ່າວປະເສີດ. ຂອງພຣະຣາຊທານໃນການປະກາດຣາຊອານາຈັກຂອງພຣະເຈົ້າມີຄ່າສູງກວ່າຂອງພຣະຣາຊທານອື່ນໆ ເພາະຂອງພຣະຣາຊທານດັ່ງກ່າວນີ້ແມ່ນການປະກາດພຣະທັມພຣະເຈົ້າເພື່ອຄົນທັງຫລາຍຈະໄດ້ກັບໃຈເຊື່ອໃນຂ່າວປະເສີດ ຊຶ່ງເປັນຣິດອຳນາດຂອງພຣະເຈົ້າໃນຂ່າວປະເສີດນັ້ນ.

<u>ຄຸນຄ່າຂອງການປະກາດ</u> (14:1-5)

ເຮົາເລີ່ມປະກາດດ້ວຍຄວາມຮັກໃນບົດຮຽນທີ່ຜ່ານມາ ຕໍ່ໄປເຮົາຄວນສແວງຫາຂອງພຣະຣາຊທານໃນການປະກາດ, ເພາະການປະກາດຂ່າວປະເສີດນອກຈາກຈະເຮັດໃຫ້ຕົນເອງຈະເຣີນຂຶ້ນແລ້ວຍັງຊ່ອຍນຳພາຄົນຫລາຍຄົນມາເຖິງທາງແຫ່ງຄວາມລອດພົ້ນ, ສ່ວນການເວົ້າພາສາແປກໆນັ້ນແມ່ນຂອງພຣະຣາຊທານສ່ວນຕົວ ເພາະການເວົ້າພາສາແປກໆນັ້ນບໍ່ໄດ້ຊ່ອຍໃຫ້ຜູ້ອື່ນຈະເຣີນຂຶ້ນ. "ຝ່າຍຜູ້ທີ່ປາກພາສາແປກໆ ນັ້ນກໍໃຫ້ຕົນເອງຈະເຣີນຂຶ້ນ ຝ່າຍຜູ້ທີ່ປະກາດພຣະທັມນັ້ນກໍເຮັດໃຫ້ຄຣິສຕະຈັກຈະເຣີນຂຶ້ນ" (ຂໍ້ 4).

ການປະກາດຂ່າວປະເສີດແມ່ນການເປີດເຜີຍພຣະວັຈນະຂອງພຣະເຈົ້າເພື່ອໃຫ້ຜູ້ຟັງເຂົ້າໃຈ, ສ່ວນການເວົ້າພາສາແປກໆບໍ່ແມ່ນການປະກາດ ເຫດນີ້ໂປໂລຈຶ່ງກ່າວວ່າ "ເພາະວ່າຜູ້ ເວົ້າພາສາແປກໆນັ້ນບໍ່ໄດ້ເວົ້າຕໍ່ພວກມະນຸດ ແຕ່ທູນຕໍ່ພຣະເຈົ້າ ເພາະບໍ່ມີໃຜເຂົ້າໃຈໄດ້ ແຕ່ຜູ້ນັ້ນກຳລັງກ່າວຂໍ້ເລິກລັບ ໂດຍພຣະວິນຍານ ຝ່າຍຜູ້ປະກາດພຣະທັມນັ້ນກໍກ່າວແກ່ຄົນທັງຫລາຍເພື່ອໃຫ້ເຂົາຈະເຣີນຂຶ້ນ" (ຂໍ້ 3). ເມື່ອບໍ່ມີໃຜ ເຂົ້າໃຈໂປໂລຈຶ່ງກ່າວວ່າ "ຖ້າເຮົາຈະມາຫາເຈົ້າທັງຫລາຍແລະປາກພາສາແປກໆ ພວກເຈົ້າຈະໄດ້ປໂຍດອັນໃດ ຈາກເຮົາ" (ຂໍ້ 6).

ໂປໂລເປັນຄົນເວົ້າພາສາແປກໆໄດ້ຫລາຍກວ່າຫມູ່ ແຕ່ໂປໂລບໍ່ໄດ້ເທສນາພາສານຶ່ງໃຫ້ຄົນອີກພາສານຶ່ງຟັງ ເພາະໂປໂລຮູ້ດີວ່າການທີ່ຈະເວົ້າພາສາທີ່ບໍ່ເຂົ້າໃຈກັນນັ້ນໂປໂລກ່າວວ່າ "ແຕ່ໃນຄຣິສຕະຈັກພໍໃຈທີ່ຈະເວົ້າຫ້າຄຳດ້ວຍຈິດໃຈຂອງເຮົາ ເພື່ອເປັນຄະຕິສອນຄົນອື່ນ ດີກວ່າທີ່ຈະເວົ້າເປັນຫມື່ນຄຳເປັນພາສາແປກໆ" (ຂໍ້ 19). ທີ່ໂປໂລກ່າວເຊັ່ນນີ້ບໍ່ໄດ້ຫມາຍຄວາມວ່າທ່ານຫມິ່ນປມາດຄົນເວົ້າພາສາແປກໆ ແຕ່ເພື່ອໃຫ້ເຫັນຄວາມສຳຄັນຂອງການປະກາດເປັນພາສາທີ່ເຂົ້າໃຈດີກວ່າເວົ້າພາສາແປກໆທີ່ບໍ່ມີໃຜເຂົ້າໃຈເລີຍ.

ໂປໂລຢາກໃຫ້ຫລາຍຄົນເວົ້າພາສາແປກໆໄດ້ ແຕ່ຍິ່ງໄປກວ່ານັ້ນທ່ານຢາກໃຫ້ທຸກຄົນປະກາດພຣະທັມໄດ້ "ເຮົາຢາກໃຫ້ເຈົ້າທັງຫລາຍປາກພາສາແປກໆ ໄດ້ ແຕ່ຫລາຍກວ່ານັ້ນອີກເຮົາຢາກໃຫ້ພວກເຈົ້າປະກາດພຣະທັມໄດ້" (ຂໍ້ 5ກ). ໂປໂລເຫັນທັງສອງຢ່າງສຳຄັນ ແຕ່ໃນຄວາມເຫັນຂອງທ່ານເຫັນວ່າການປະກາດພຣະທັມສຳຄັນກວ່າການ ເວົ້າພາສາແປກໆ ດັ່ງນັ້ນທ່ານຈຶ່ງກ່າວຕໍ່ໄປວ່າ "ເພາະວ່າຜູ້ທີ່ປະກາດພຣະທັມນັ້ນກໍໃຫຍ່ກວ່າຜູ້ທີ່ເວົ້າພາສາ ແປກໆໄດ້" (ຂໍ້ 5ຂ).

<u>ພາສາແປກໆບໍ່ມີຄ່າຫາກບໍ່ມີຄົນແປ</u> (14:6-14).

ການເວົ້າພາສາແປກໆ ຈະບໍ່ມີຄວາມຫມາຍຫຍັງຫາກບໍ່ມີຄົນແປໄດ້. ເຮົາສັງເກດເຫັນວ່າທ່ານ ດ.ຣ ບິລລີ ແກຣເຮັມ ຜູ້ປະກາດພຣະທັມພຣະເຈົ້າໄດ້ເດີນທາງໄປທົ່ວໂລກເພື່ອປະກາດພຣະທັມພຣະເຈົ້າ. ທ່ານເວົ້າໄດ້ແຕ່ພາສາດຽວຄື ພາສາອັງກິດ, ທຸກປະເທດທີ່ທ່ານເດີນທາງໄປ ທ່ານຈະເອົາຜູ້ແປພາສາແປຄຳເທສນາຂອງທ່ານ ເປັນພາສາຂອງປະເທດນັ້ນເພື່ອໃຫ້ຜູ້ຟັງໄດ້ ເຂົ້າໃຈໃນການປະກາດນັ້ນ ເມື່ອຜູ້ຟັງເຂົ້າໃຈສິ່ງທີ່ກ່າວແລ້ວຜູ້ຟັງມີໂອກາດທີ່ຈະຮັບເອົາຂ່າວ ປະເສີດ, ເມື່ອຜູ້ຟັງບໍ່ ເຂົ້າໃຈເຂົາເຈົ້າຈະຮັບເຊື່ອໄດ້ຢ່າງໃດ? ດັ່ງນັ້ນການປະກາດຈຳເປັນຕ້ອງເວົ້າພາສາທີ່ເຂົ້າໃຈດີ ກວ່າເວົ້າພາສາທີ່ບໍ່ເຂົ້າໃຈ.

ພາສາອັງກິດເປັນພາສາແປກສຳລັບຄົນບໍ່ເຂົ້າໃຈ ແລະພາສາລາວເຮົາກໍເປັນພາສາແປກສຳລັບຄົນບໍ່ເຂົ້າໃຈເຊັ່ນກັນ, ໂປໂລຈຶ່ງກ່າວວ່າ "ຖ້າພວກເຈົ້າເວົ້າພາສາແປກໆ ແຕ່ເວົ້າຄວາມທີ່ເຂົ້າໃຈບໍ່ໄດ້ ຜູ້ຟັງຈະເຂົ້າໃຈຄວາມເວົ້າຂອງເຈົ້າໄດ້ຢ່າງໃດ" (ຂໍ້ 9). ຂ້າພະເຈົ້າເຄີຍໄດ້ຍິນພວກຜູ້ເຖົ້າເວົ້າວ່າ ເປົ່າປີ່ໃສ່ຫູຄວາຍ ຊຶ່ງເພິ່ນຫມາຍຄວາມວ່າຄວາຍໂຕນັ້ນບໍ່ຮູ້ຈັກຟັງສຽງອັນອອນຊອນຂອງປີ່ ດັ່ງນັ້ນຄວາຍໂຕນັ້ນກໍຈະບໍ່ລຸກຂຶ້ນເຕັ້ນລຳ ນອກຈາກມັນຈະມືນຕາເບິ່ງຫນ້າຜູ້ເປົ່າປີ່ນັ້ນຊື່ໆ.

ໂປໂລໄດ້ແນະນຳຜູ້ເວົ້າພາສາແປກໆ ໃຫ້ອ້ອນວອນຕໍ່ພຣະເຈົ້າໃຫ້ມີຄວາມສາມາດແປໄດ້ ເພາະການເວົ້າພາສາແປກໆ ນັ້ນເປັນການທູນຕໍ່ພຣະເຈົ້າດ້ວຍຈິດວິນຍານ ສຳລັບຄວາມຄິດນັ້ນແມ່ນບໍ່ມີເລີຍ ດ້ວຍເຫດນີ້ໂປໂລຈຶ່ງກ່າວ

ວ່າ "ເພາະສັນນັ້ນຜູ້ປາກພາສາແປກໆ ໄດ້ຄວນອ້ອນວອນຂໍໃຫ້ຕົນສາມາດແປໄດ້ດ້ວຍ ເພາະຖ້າເຮົາໄຫວ້ວອນເປັນພາສາແປກໆ ຈິດວິນຍານຂອງເຮົາໄຫວ້ວອນຢູ່ກໍຈິງ ແຕ່ຄວາມຄິດຂອງເຮົາກໍບໍ່ເຂົ້າຮ່ວມ" (ຂໍ້ 13). ໝາຍຄວາມວ່າຜູ້ເວົ້າພາສາແປກໆນັ້ນບໍ່ໄດ້ຄິດກ່ອນຈຶ່ງເວົ້າດັ່ງນັ້ນລາວເອງຈຶ່ງບໍ່ຮູ້ວ່າຕົນເອງຈະເວົ້າຫຍັງກັບພຣະເຈົ້າ.

<u>ການປາກພາສາແປກໆສົມຄວນແປ</u> (14:15-25)

ທ່ານເຄີຍພາຄົນໄປຫາທ່ານໝໍບໍ່? ການພາຄົນໄປຫາທ່ານໝໍນັ້ນມີຫລາຍກໍຣະນີດ້ວຍກັນ ສ່ວນຂ້າພະເຈົ້າມີແລ້ວສ່ວນຫລາຍແມ່ນພາຄົນໄປເພື່ອຈະຊ່ອຍແປພາສາເປັນສິ່ງແຮກ, ເກົ້າສິບເກົ້າຄົນໃນຈຳນວນຮ້ອຍຄົນນັ້ນຂັບຣົດໄປເອງໄດ້ ແລະຮູ້ຈັກທີ່ຢູ່ຂອງທ່ານໝໍດີ ສິ່ງທີ່ເຂົາເຈົ້າເຮັດບໍ່ໄດ້ນັ້ນຄືບໍ່ສາມາດເວົ້າກັບທ່ານໝໍໃຫ້ເຂົ້າໃຈໄດ້ແລະຕົວທ່ານໝໍເອງກໍບໍ່ສາມາດເວົ້າພາສາລາວຕໍ່ຄົນເຈັບໄດ້. ທຳນອງດຽວກັນການເວົ້າພາສາແປກໆເປັນການເວົ້າຂໍ້ເລິກລັບໂດຍພຣະວິນຍານ (ອີງຕາມຂໍ້ 3) ແຕ່ຜູ້ທີ່ເວົ້ານັ້ນບໍ່ຮູ້ວ່າຕົວເອງເວົ້າຫຍັງ ເພາະລາວເອງບໍ່ໄດ້ອອກຈາກຄວາມຂອງຕົນເອງ. ດ້ວຍເຫດນີ້ໂປໂລຈຶ່ງແນະນຳໃຫ້ໄຫວ້ວອນຮວມທັງການຮ້ອງເພງອອກຈາກຄວາມຄິດຈິດໃຈຂອງຕົນເອງຈຶ່ງຈະມີຄວາມໝາຍ.

ຜູ້ປະກາດທີ່ດີຍ່ອມຈະຊອກສແວງຫາທາງຊ່ອຍຄົນອື່ນໃຫ້ຮັບຄວາມລອດພົ້ນຫລາຍກວ່າຊອກຫາທາງໃຫ້ຄົນອື່ນຕົບມືຍົກຍ້ອງຕົນເອງວ່າເປັນຜູ້ທີ່ມີຈິດວິນຍານສູງໂດຍການເວົ້າພາສາແປກໆທີ່ຄົນອື່ນເຮັດບໍ່ໄດ້ຄືລາວ. "ເຮົາຈະໄຫວ້ວອນດ້ວຍຈິດວິນຍານກໍຈິງ ແຕ່ຈະໄຫວ້ວອນດ້ວຍຄວາມຄິດເໝືອນກັນ ເຮົາຈະຮ້ອງເພງດ້ວຍຈິດວິນຍານກໍຈິງແຕ່ຈະຮ້ອງເພງດ້ວຍຄວາມຄິດເໝືອນກັນ. ຖ້າບໍ່ດັ່ງນັ້ນ, ຄັນພວກເຈົ້າກ່າວໂມທະນາພຣະຄຸນດ້ວຍຈິດວິນຍານຄົນທັມມະດາທີ່ບໍ່ຮູ້ພາສານັ້ນຈະກ່າວຕອບຄວາມໂມທະນາພຣະຄຸນຂອງພຣະເຈົ້າ "ອາແມນ" ໄດ້ຢ່າງໃດ ເພາະຄຳທີ່ເຈົ້າກ່າວນັ້ນເຂົາບໍ່ເຂົ້າໃຈ. ເຖິງແມ່ນເຈົ້າໂມທະນາພຣະຄຸນຢ່າງດີກໍຕາມ ແຕ່ຄົນອື່ນນັ້ນຈະບໍ່ໄດ້ຮັບຄວາມຈະເຣີນ (ຂໍ້ 15-16).

ໂປໂລປຽບທຽບຣະຫວ່າງການເວົ້າພາສາທີ່ບໍ່ເຂົ້າໃຈ ແລະເວົ້າພາສາທີ່ເຂົ້າໃຈມີຜົນຕ່າງກັນຢ່າງໃຫຍ່ຫລວງ "ແຕ່ໃນຄຣິສຕະຈັກເຮົາພໍໃຈທີ່ຈະເວົ້າຫ້າຄຳດ້ວຍໃຈຂອງເຮົາ ເພື່ອເປັນຄະຕິສອນຄົນອື່ນ ດີກວ່າທີ່ຈະເວົ້າເປັນໝື່ນຄຳເປັນພາສາແປກໆ" (ຂໍ້ 19). ທ່ານໝາຍເຖິງການສັ່ງສອນໃນໂບດນ້ອຍດຽວດ້ວຍໃຈຄິດຢາກເວົ້າເປັນພາສາທີ່ຜູ້ຟັງໆແລ້ວເຂົ້າໃຈຍັງດີກວ່າເວົ້າພາສາແປກໆໝົດມື້ບໍ່ມີໃຜເຂົ້າໃຈເລີຍ. ໂປໂລເວົ້າຕໍ່ໄປວ່າ "ຢ່າໃຫ້ຄວາມນຶກຄິດຂອງເຈົ້າເປັນເໝືອນເດັກນ້ອຍ" (ຂໍ້ 20ກ). ມີຄວາມໝາຍວ່າເປັນຜູ້ໃຫຍ່ພໍທີ່ຈະເຂົ້າໂຮງຮຽນໄດ້ ຫລື ໃຫຍ່ພໍທີ່ຈະເວົ້າເຂົ້າໃຈກັນໄດ້, ເພາະທ່ານເຫັນວ່າເດັກໄຮ້ດຽງສາສອງເຮົາຍັງປາກບໍ່ເປັນກໍຈະເວົ້າບໍ່ເຂົ້າໃຈກັນ. "ເຫດສັນນັ້ນການເວົ້າພາສາແປກໆຈຶ່ງບໍ່ເປັນເຄື່ອງໝາຍສຳຄັນແກ່ຄົນທີ່ເຊື່ອ ແຕ່ສຳຄັນສຳລັບຄົນທີ່ບໍ່ເຊື່ອ" (ຂໍ້ 22). ການເວົ້າພາສາແປກໆບໍ່ເປັນເຄື່ອງໝາຍສຳຄັນຕໍ່ຄົນທີ່ເຊື່ອເລີຍ ເພາະຄົນທີ່ເຊື່ອໄດ້ຮູ້ຈັກຄວາມຈິງດ້ວຍການເປີດເຜີຍແລ້ວ. ທີ່ສຳຄັນກັບຄົນທີ່ບໍ່ເຊື່ອນັ້ນເພາະຄົນທີ່ບໍ່ເຊື່ອຈະສັງເກດເຫັນວ່າ ຜູ້ເວົ້າພາສາແປກ ໆນັ້ນເວົ້າອອກມາດ້ວຍຣິດອຳນາດຂອງພຣະເຈົ້າເປັນຂໍ້ເລິກລັບຊຶ່ງບໍ່ມີໃຜສາມາດແປໄດ້ ແມ່ນແຕ່ຜູ້ເວົ້າກໍບໍ່ຮູ້ວ່າຕົນເອງກຳລັງເວົ້າຫຍັງ ດັ່ງນັ້ນຈຶ່ງບໍ່ເກີດຜົນອັນໃດແກ່ຜູ້ຟັງແລະຜູ້ເວົ້າ.

ໃນຕອນທ້າຍໂປໂລສລູບວ່າ "ແຕ່ຖ້າທຸກຄົນປະກາດພຣະທັມ ແລ້ວມີຄົນທີ່ບໍ່ເຊື່ອຫລືຄົນທັມມະດາເຂົ້າມາທຸກຄົນຈະເປັນເຫດໃຫ້ເຂົາຮູ້ເມື່ອຕົວ ແລະເປັນເຫດໃຫ້ເຂົາເກີດຄວາມສັງເກດໃນຈິດໃຈຂອງເຂົາ. ຄວາມລັບທີ່ເຊື່ອງໄວ້ໃນໃຈຂອງເຂົາຈະປາກົດແຈ້ງ ເຂົາກໍຈະໝູບໜ້າລົງນະມັສການຂາບໄຫວ້ພຣະເຈົ້າ ໂດຍຮັບວ່າ "ພຣະເຈົ້າຊົງສະຖິດຢູ່ຖ້າມກາງພວກທ່ານເປັນແທ້" (ຂໍ້ 24-25). ນີ້ແຫລະຄືຂອງພຣະຣາຊທານທີ່ສຳຄັນຄືການປະກາດເປັນພາ

ສາທີ່ຟັງແລ້ວເຂົ້າໃຈ ແລະເມື່ອຜູ້ຟັງເຂົ້າໃຈແທ້ແລ້ວ ຄວາມເຂົ້າໃຈຈະນຳພາຜູ້ຟັງໃຫ້ກັບໃຈເຊື່ອໃນພຣະເຈົ້າ.

<u>ຄຳຖາມ</u>

1. ການເວົ້າພາສແປກໆ ແລະການປະກາດມີຄວາມແຕກຕ່າງກັນຢ່າງໃດ?

2. ໂປໂລຢາກໃຫ້ເຮົາທັງຫລາຍເວົ້າພາສາແປກໆໄດ້ ແຕ່ຫລາຍໄປກວ່ານັ້ນໂປໂລຢາກໃຫ້ເຮັດຫຍັງ? ເປັນຫຍັງ?

3. ການເວົ້າພາສາແປກໆຊ່ອຍຜູ້ຟັງໃຫ້ຮັບເຊື່ອພຣະເຈົ້າແນວໃດ? ແລະຊ່ອຍຕົນເອງແນວໃດ?

4. ເປັນຫຍັງພາສາແປກໆຈຶ່ງຈຳເປັນຕ້ອງແປ?

5. ຫາກທ່ານປາກພາສາແປກໆໄດ້ໂປໂລແນະນຳໃຫ້ເຮັດຫຍັງ?

# ຄວາມຫວັງອັນສຸດຍອດ
# ບົດຮຽນທີ 13

---

<u>ຂໍ້ພຣະຄັມພີສໍາລັບບົດຮຽນນີ້:</u> 1 ໂກຣິນໂທ 15:1-20, 35-44, 50-57

<u>ຂໍ້ພຣະຄັມທັງໝົດສໍາລັບບົດຮຽນນີ້:</u> 1 ໂກຣິນໂທ 15:1-58

<u>ຈຸດສໍາຄັນຂອງບົດຮຽນນີ້</u>: ເພື່ອບອກໃຫ້ຮູ້ວ່າການຟື້ນພຣະຊົນຂອງພຣະເຢຊູນັ້ນມີຈິງ, ການຄືນມາຈາກຕາຍຂອງຜູ້ທີ່ເຊື່ອກໍຈະມີໃນວັນສຸດທ້າຍເໝືອນກັນ.

<u>ຄໍາຖາມເພື່ອການສໍາຣວດ</u> ເຮົາຫວັງຈະເປັນແນວໃດຫລັງຈາກເຮົາຄືນມາໃນວັນສຸດທ້າຍ?

<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອໃຫ້ເຮົາເຂົ້າໃຈວ່າການຟື້ນພຣະຊົນຂອງພຣະເຢຊູເປັນຫລັກຖານແຫ່ງຄວາມເຊື່ອຂອງພວກເຮົາ.

<u>ໜ້າທີ່ສໍາຄັນຂອງຄຣິສຕຽນທຸກຄົນ</u>

- ພຣະຄັມພີເປັນແຜນທີ່ນໍາທາງແຫ່ງຊີວິດ ແລະເປັນຣິດອໍານາດໃນການປະກາດຂອງພວກເຮົາ.
- ແບ່ງປັນຂ່າວປະເສີດແກ່ທຸກໆຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນ.

ການຄືນມາຈາກຕາຍຂອງພຣະເຢຊູຄຣິດເປັນສິ່ງໃຫຍ່ສໍາລັບຜູ້ເຊື່ອໃນພຣະອົງໃຫ້ມີຄວາມໝັ້ນໃຈໃນຄວາມເຊື່ອຂອງພວກເຮົາ. ຂ້າພະເຈົ້າຈໍາຄໍາໂບຮານເວົ້າວ່າ "<u>ເບິ່ງຊ້າງໃຫ້ເບິ່ງຫາງ ເບິ່ງນາງໃຫ້ເບິ່ງແມ່</u>" ຊຶ່ງມີຄວາມໝາຍວ່າແມ່ເປັນແນວໃດ ລູກກໍມັກຈະເປັນແນວນັ້ນ. ໃນທໍານອງດຽວກັນກັບຄວາມເຊື່ອຂອງພວກເຮົາໃນພຣະເຢຊູຄຣິດເມື່ອພຣະອົງຊົງຟື້ນມາຈາກຕາຍ ເຮົາທັງຫລາຍຜູ້ທີ່ເຊື່ອຢ່າງຈິງໃຈໃນພຣະອົງກໍຈະເປັນຄືພຣະອົງໃນວັນສຸດທ້າຍ.

<u>ການຟື້ນພຣະຊົນ</u> (15:1-11).

ໂປໂລປະກາດຢ່າງແຂງແຮງເຖິງການຟື້ນພຣະຊົນຂອງພຣະເຢຊູນັ້ນມີຈິງ ໂດຍອີງໃສ່ການເປັນພະຍານຂອງພວກສາວົກສິບສອງຄົນ ແລະຄົນກວ່າຫ້າຮ້ອຍຄົນໄດ້ເຫັນພຣະອົງໃນເວລາດຽວກັນ. ເຖິງແມ່ນວ່າທາງຣາຊການສັ່ງຫ້າມບໍ່ໃຫ້ເວົ້າເຣື່ອງນີ້ກໍຕາມບຸກຄົນທີ່ເຫັນເຫດການບໍ່ສາມາດຊຸກເຊື່ອງຄວາມຈິງໄວ້ໄດ້. ດ້ວຍວ່າຄວາມຈິງບໍ່ສາມາດປິດບັງໄວ້ອີກຕໍ່ໄປ ສາວົກໂປໂລຈຶ່ງແຈ້ງຂ່າວການຄືນພຣະຊົນຂອງພຣະເຢຊູຢ່າງບໍ່ຢ້ານອັນຕະລາຍໃດໆ. "ພີ່ນ້ອງທັງຫລາຍ, ເຮົາຂໍແຈ້ງຂ່າວໃຫ້ເຈົ້າທັງຫລາຍຄໍານຶງເຖິງຂ່າວປະເສີດທີ່ເຮົາໄດ້ປະກາດແກ່ພວກເຈົ້າແລ້ວ ຊຶ່ງພວກເຈົ້າໄດ້ຍອມຮັບເອົາແລະຕັ້ງຢູ່ໃນຂ່າວປະເສີດນັ້ນ, ແລະຊຶ່ງເປັນເຫດທີ່ກໍາລັງໃຫ້ເຈົ້າທັງຫລາຍໄດ້ພົ້ນ ຖ້າພວກເຈົ້າຍັງຍຶດຖືຂໍ້ຄວາມທີ່ເຮົາໄດ້ປະກາດເປັນຂ່າວປະເສີດແກ່ພວກເຈົ້ານັ້ນ ເວັ້ນເສັຽແຕ່ພວກເຈົ້າຫາກເຊື່ອຢ່າງ ບໍ່ຈິງໃຈ" (ຂໍ້ 1-2). ໂປໂລສັ່ງພວກທີ່ເຊື່ອໃຫ້ມີຄວາມແນ່ໃຈໃນຄວາມເຊື່ອຂອງເຂົາ ເນື່ອງດ້ວຍວ່າເຂົາໄດ້ຮັບເອົາຂ່າວປະເສີດທີ່ໂປໂລໄດ້ປະກາດໄປແລ້ວ ແລະຕໍ່ມາມີຄົນມາປັ່ນປ່ວນໃຫ້ເຂົາປະລະຄວາມເຊື່ອ ດັ່ງນັ້ນໂປໂລຈຶ່ງກ່າວວ່າ "ເວັ້ນເສັຽແຕ່ພວກເຈົ້າຫາກເຊື່ອຢ່າງ ບໍ່ຈິງໃຈ" ເຂົາຈະບໍ່ພົ້ນເປັນແນ່.

ເຣື່ອງການຄືນພຣະຊົນຂອງພຣະເຢຊູເປັນເຣື່ອງສຳຄັນຕໍ່ຜູ້ທີ່ເຊື່ອທຸກຄົນ, ເຮົາສາມາດອວດອ້າງຄົນທີ່ບໍ່ເຊື່ອວ່າພຣະເຈົ້າຂອງພວກເຮົາຍັງຊົງພຣະຊົນຢູ່ ແລະຍິ່ງໄປກວ່ານັ້ນພຣະອົງຍັງຊົງວາຍພຣະຊົນແທນຄວາມຜິດບາບຂອງເຮົາທັງຫລາຍ. ມີຄົນຖາມວ່າທ່ານຮູ້ໄດ້ແນວໃດວ່າພຣະອົງຊົງວາຍພຣະຊົນແທນທ່ານ? ເຮົາມາສາຕອບເພິ່ນວ່າ "ຂຽນໄວ້ໃນພຣະຄັມພີ" ໂປໂລກ່າວວ່າ "ເຣື່ອງທີ່ສຳຄັນທີ່ສຸດຄືວ່າ ພຣະຄຣິດຊົງວາຍພຣະຊົນແທນຄວາມຜິດບາບຂອງເຮົາທັງຫລາຍຕາມຂຽນໄວ້ໃນພຣະຄັມພີ" (ຂໍ້ 3໑). ໂປໂລແມ່ນຄົນນຶ່ງທີ່ຢັ້ງຢືນເຣື່ອງການຟື້ນພຣະຊົນຂອງພຣະ ເຢຊູເພາະທ່ານເອງໄດ້ຍິນສຽງຂອງພຣະເຢຊູຕອນທ່ານເດີນທາງໄປຈັບກຸມຄຣິສຕຽນທີ່ເມືອງດາມາເຊ ໃນສມັຍທີ່ທ່ານ ຍັງບໍ່ເຊື່ອໃນເຣື່ອງນີ້ (ກຈກ 9:5).

<u>ບໍ່ມີໃຜກ້າປະຕິເສດການຄືນພຣະຊົນ</u> (15:20-49)

ມີລາງຄົນໃນກຸ່ມຟາຣີຊາຍບໍ່ຍອມເຊື່ອໃນການຟື້ນພຣະຊົນຂອງພຣະເຢຊູ ຈຶ່ງພາກັນປັ້ນປ່ວນຫາເຣື່ອງເພື່ອບໍ່ໃຫ້ຂ່າວການຄືນພຣະຊົນນີ້ແຜ່ກວ້າງອອກໄປ. ໂປໂລຜູ້ເປັນສາວົກຄົນຫລ້າສຸດໄດ້ຢືນຢັນຢ່າງແຂງແຮງໂດຍອ້າງເຖິງຣິດອຳນາດຂອງຂ່າວປະເສີດເຮັດໃຫ້ເກີດຜົນ ທ່ານໄດ້ກ່າວວ່າ "ຖ້າພຣະຄຣິດບໍ່ໄດ້ຊົງຄືນພຣະຊົນແລ້ວການປະກາດ ຂອງພວກເຮົາກໍບໍ່ມີປໂຍດ ແລະຄວາມເຊື່ອຂອງພວກເຮົາກໍບໍ່ມີປໂຍດຄືກັນ" (ຂໍ້ 14).ທ່ານໄດ້ອ້າງເຖິງ ຣິດອຳນາດໃນຂ່າວປະເສີດທີ່ນຳໃຫ້ຄົນທັງຫລາຍກັບໃຈ. ຂ້າພະເຈົ້າຂໍແນະນຳທ່ານໄປເບິ່ງໂທມາຜູ້ບໍ່ເຊື່ອໃນການຄືນພຣະຊົນເຊັ່ນກັນ, ໂທມາເປັນສາວົກຂອງພຣະເຢຊູ ຫລາຍເທື່ອພວກເຮົາຈະເບິ່ງເພິ່ນວ່າເປັນຄົນຂີ້ສົງສັຍຫລືເປັນຄົນທີ່ມີຄວາມເຊື່ອນ້ອຍ ຂ້າພະເຈົ້າຢາກໃຫ້ທ່ານເບິ່ງໂທມາໃນແງ່ດີແດ່ຈັກເທື່ອ ຍ້ອນໂທມານີ້ສາວົກທັງໝົດຈຶ່ງມີຄວາມແນ່ໃຈໃນການຄືນພຣະຊົນ ແລະຍ້ອນໂທມານີ້ເຮົາທັງຫລາຍຈຶ່ງກ້າປະກາດວ່າພຣະເຢຊູຊົງພຣະຊົນຢູ່ ເພາະໂທ ມາໄດ້ພິສູດຢ່າງຄັກແນ່ວ່າແມ່ນພຣະເຢຊູແທ້ (ໂຢຮັນ 20:27).

ໃນຂະນະທີ່ສາວົກທັງຫລາຍກຳລັງສົນເທກັນຢູ່ໂທມາກ່າວຂຶ້ນວ່າ "ຖ້າຂ້ອຍບໍ່ເຫັນຮອຍຕະປູທີ່ຝ່າພຣະຫັດ, ແລະບໍ່ໄດ້ເອົານີ້ວມືຂອງຂ້ອຍແປະໃສ່ຮອຍຕະປູນັ້ນ, ແລະບໍ່ໄດ້ເອົາມືຂອງຂ້ອຍແປະໃສ່ຂ້າງເພິ່ນແລ້ວ ຂ້ອຍບໍ່ເຊື່ອ" (ໂຢຮັນ 20:25). ຂ້າພະເຈົ້າພູມໃຈທີ່ໂທມາຄິດຢ່າງນັ້ນເພາະການຄິດຂອງໂທມາເຮັດໃຫ້ທັງໂລກພິສູດວ່າຜູ້ທີ່ໂທມາເອົານີ້ວມືແຕະນັ້ນແມ່ນພຣະເຢຊູແທ້. ທ່ານອາຈເຄີຽໄດ້ຍິນຄົນເຮົາເວົ້າວ່າ ຖ້າບໍ່ໄດ້ຍິນກັບຫູ, ດູດ້ວຍຕາ, ມືບໍ່ໄດ້ຈັບບາຍບໍ່ເຊື່ອ, ໂລກທັງໂລກຄິດເຊັ່ນນີ້ແຫລະ ດັ່ງນັ້ນພຣະເຢຊູຈຶ່ງກ່າວວ່າ "ຈົ່ງເດ່ນີ້ວມືຂອງທ່ານມາລູບເບິ່ງຝ່າມືຂອງເຮົາ ຈົ່ງເດ່ນີ້ວມືຂອງທ່ານມາໃສ່ຂ້າງຂອງເຮົາ" (ໂຢຮັນ 20: 27). ວ່າແລ້ວໂທມາກໍໄດ້ເຮັດຕາມທີ່ຕົນເອງຄິດໄວ້, ເມື່ອໂທມາພິສູດຮຽບຮ້ອຍແລ້ວຈຶ່ງເຊື່ອ ພຣະເຢຊູຈຶ່ງກ່າວກັບໂທມາວ່າ "ເພາະໄດ້ເຫັນເຮົາທ່ານຈຶ່ງເຊື່ອຫລື ຜູ້ທີ່ບໍ່ເຫັນແຕ່ໄດ້ເຊື່ອກໍເປັນສຸກ" (ໂຢຮັນ 20:29). ເຮົາທັງຫລາຍບໍ່ສາມາດປະຕິເສດຄວາມຈິງໄດ້ເພາະມີຄົນພິສູດແລ້ວ.

ມີບາງຄົນສົນໃຈໃນເຣື່ອງຄົນທີ່ຕາຍໄປແລ້ວເມື່ອຄືນມາຈະມີຮ່າງກາຍແນວໃດ? ເປັນຄຳຖາມທີ່ໜ້າສົນໃຈທ່ານອາຈານໂປໂລໄດ້ຕອບຄຳຖາມນີ້ຢ່າງແນບນຽນໂດຍສເພາະຢ່າງຍິ່ງທ່ານກ່າວວ່າ "ສ່ວນການເປັນຄືນມາຂອງຄົນຕາຍກໍເຫມືອນດັ່ງນັ້ນແຫລະ ຄື ສິ່ງທີ່ຫວ່ານລົງກໍເປື່ອຍເນົ່າໄປ ແຕ່ສິ່ງທີ່ເປັນຄືນມາກໍບໍ່ຮູ້ເປື່ອຍເນົ່າ ເມື່ອຫວ່ານລົງບໍ່ມີຍົດ ເມື່ອຄືນຂຶ້ນມາກໍມີສງ່າຣາສີ ເມື່ອຫວ່ານລົງກໍອ່ອນກຳລັງ ເມື່ອຄືນຂຶ້ນມາກໍມີອຳນາດ. ເມື່ອ ຫວ່ານລົງກໍເປັນກາຍທັມມະດາ ເມື່ອຄືນຂຶ້ນມາກໍເປັນກາຍວິນຍານຖ້າມີກາຍທັມມະດາກໍມີກາຍວິນຍານດ້ວຍ (ຂໍ້ 42-43).

<u>ການສເລີມສລອງຮ່າງກາຍໃຫມ່</u> ( 15:50-58)

ພວກຄົນທີ່ເຊື່ອໃນພຣະເຢຊູຈະມີຮ່າງກາຍໃຫມ່ ສ່ວນພວກຄົນທີ່ບໍ່ເຊື່ອຈະບໍ່ມີສ່ວນຮ່ວມໃນສວັນ, "ມະນຸດ

ທັມມະດາຈະມີສ່ວນໃນຣາຊອານາຈັກຂອງພຣະເຈົ້າບໍ່ໄດ້ " (ຂໍ້ 50). ໃນວັນທີ່ພຣະເຢຊູຄຣິດກັບຄືນມາສູ່ໂລກຄັ້ງທີ່ສອງພຣະຄັມພີກ່າວວ່າ "ຄົນທີ່ຕາຍແລ້ວຈະຖືກຊົງບັນດານໃຫ້ຄືນຂຶ້ນມາໂດຍ ບໍ່ເປື່ອຍເນົ່າ ແລະພວກເຮົາກໍຈະຖືກຊົງປ່ຽນແປງໃຫມ່" (ຂໍ້ 52). ຂ້າພະເຈົ້າເຂົ້າໃຈວ່າເປັນຮ່າງກາຍທິບທີ່ພຣະເຈົ້າຈະຊົງໂຜດປະທານ ແກ່ເຮົາທັງຫລາຍຜູ້ທີ່ເຊື່ອໃນພຣະອົງ ດ້ວຍວ່າຮ່າງກາຍໃຫມ່ນີ້ຈະບໍ່ຮູ້ຈັກຊຸດໂຊມແລະເປັນກາຍທີ່ຕາຍບໍ່ເປັນເຫມືອນຮ່າງກາຍທີ່ເຮົາມີຢູ່ໃນເວລານີ້.

ການເປັນຄືນມາໃນວັນທີ່ພຣະອົງສເດັດມາເປັນຂໍ້ເລິກລັບແຫ່ງແຜ່ນດິນສວັນ ສນັ້ນຈຶ່ງເປັນສິ່ງທີ່ເຂົ້າໃຈຍາກຫລາຍສໍາລັບຜູ້ທີ່ມີຈິດໃຈຝ່າຍໂລກ. ໂປໂລກ່າວວ່າ "ນີ້ແຫລະ, ເຮົາມີຂໍ້ລັບເລິກບອກພວກເຈົ້າວ່າ ເຮົາທັງຫລາຍຈະບໍ່ລ່ວງລັບໄປຫມົດທຸກຄົນແຕ່ເຮົາທັງຫລາຍຈະຖືກຊົງປ່ຽນແປງໃຫມ່ຫມົດທຸກຄົນ" (ຂໍ້ 51). ນີ້ແຫລະເປັນຄໍາຕອບທີ່ຄົນຖາມເຖິງຄົນທີ່ບໍ່ທັນຕາຍໃນເວລາພຣະເຢຊູຄຣິດກັບກໍຈະເປັນດັ່ງນີ້ແທ້.

ການມີຮ່າງກາຍໃຫມ່ເປັນຄວາມຫວັງອັນສຸດຍອດຂອງຄຣິສຕຽນທຸກຄົນ, ເພາະໃນເວລານີ້ເຮົາທັງຫລາຍມີຮ່າງກາຍອັນອາລັຍໂອ່ຍຄາງດ້ວຍຄວາມເຈັບປວດທໍຣະມານຈົນເຖິງແກ່ຄວາມຕາຍ. ຄວາມຫວັງຂອງເຮົາທັງຫລາຍແມ່ນຢູ່ອະນາຄົດທີ່ຈະມາເຖິງໃນໄວໆນີ້ ຄືວັນທີ່ພຣະເຢຊູຄຣິດກັບຄືນມາພຣະອົງຈະຊົງປ່ຽນແປງຮ່າງກາຍອັນຕໍ່າຕ້ອຍຂອງພວກເຮົາ ແລະວັນນັ້ນເຮົາທັງຫລາຍຈະກ້າເວົ້າວ່າ "ໂອ ຄວາມຕາຍເອີຍ, ໄຊຊະນະຂອງມຶງຢູ່ໃສ, ໂອ ຄວາມ ຕາຍເອີຍ, ໄລພິດຂອງມຶງຢູ່ໃສ" (ຂໍ້ 55). ເພາະເຮົາທັງຫລາຍຊະນະຄວາມຕາຍແລ້ວຊຶ່ງຫມາຍຄວາມວ່າເຮົາບໍ່ຕາຍ ອີກແລ້ວ. "ດັ່ງນີ້ແຫລະ ພີ່ນ້ອງທີ່ຮັກຂອງເຮົາເອີຍ, ເຈົ້າທັງຫລາຍຈົ່ງຕັ້ງຫມັ້ນຢູ່ຢ່າຫວັ່ນໄຫວ ຈົ່ງປະຕິບັດງານ ຂອງອົງພຣະຜູ້ເປັນເຈົ້າໃຫ້ບໍຣິບູນທຸກເວລາ ດ້ວຍວ່າໃນອົງພຣະຜູເປັນເຈົ້າການຂອງພວກເຈົ້ານັ້ນຈະບໍ່ໄຮ້ປໂຍດ" (ຂໍ້ 58). ຊຶ່ງແປວ່າ ການງານທີ່ທານເຮັດຈະໄດ້ສິ່ງຕອບແທນ.

<u>ຄໍາຖາມ</u>

1. ອີງຕາມຄວາມຄິດເຫັນຂອງທ່ານ ເປັນຫຍັງຄົນທັງຫລາຍຈຶ່ງບໍ່ເຊື່ອວ່າພຣະເຢຊູຊົງເປັນພຣະເຈົ້າ?

2. ຫາກມີຄົນຖາມເຣື່ອງການຄືນພຣະຊົນຂອງພຣະເຢຊູທ່ານຈະມີຄໍາຕອບແນວໃດ?

3. ເປັນຫຍັງເຣື່ອງການຄືນພຣະຊົນຂອງພຣະເຢຊູຄຣິດຈຶ່ງເປັນທີ່ສໍາຄັນສໍາລັບພວກເຮົາແທ້?

4. ເມື່ອພຣະເຢຊູຄຣິດຄືນມາຈາກຕາຍແທ້ຈິງແລ້ວ ພວກທີ່ເຊື່ອໃນພຣະອົງຈະເປັນແນວໃດ?

5. ເປັນຫຍັງການຄືນພຣະຊົນຈຶ່ງເປັນເຣື່ອງທີ່ເຂົ້າໃຈຍາກແທ້?

6. ການທີ່ໂທມາພິສູດເບິ່ງຮ່າງກາຍທີ່ເປັນຄືນມາຂອງພຣະເຢຊູນັ້ນຊ່ອຍຫຍັງເຮົາແດ່?

7. ເຮົາທັງຫລາຍຫວັງອັນໃດໃນວັນສຸດທ້າຍ?

ອ.ຈ. ທູນພັນ ວົງສຸຣິດທ໌